*ຄູ່ມືແນະນຳ ສຳລັບ ການພັດທະນາ ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງ ພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ ຢູ່ ສປປ ລາວ*





ລາຍງານຕໍ່ ໜ່ວຍງານຍ່ອຍດ້ານທຸລະກິດກະສິກຳ ຫຼື
**Sub Sector Working Group on Agribusiness (SWGAB)**

*ຜະລິດໂດຍ:*
*ອົງການ GIZ / ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ (LM-RED program)*

*ໂດຍ: ທ່ານ ອາດຳ ໂຟກຣາດ ແລະ ທິບພະພອນ ເພັດມະນີ*

**ພຶດສະພາ 2014**

## *ຂໍ້ມູນກ່ຽວກັບການລາຍງານ*

*ຫົວຂໍ້:* ຄູ່ມືແນະນຳສຳລັບການພັດທະນາ ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ ຢູ່ ສປປ ລາວ

*ປີ:* *2014*

*ຜູ້ຂຽນ:* *ອາດຳ ໂຟກຣາດ ແລະ ທິບພະພອນ ເພັດມະນີ*

## *ຄຳຊີ້ແຈງ*

*ທັດສະນະ, ແນວຄວາມຄິດ ແລະ ການແປຄວາມໝາຍໃນບົດລາຍງານນີ້ແມ່ນເປັນຂອງຜູ້ຂຽນໃນເວລາສຶກສາ ແລະ ການຂຽນ. ບໍ່ຄວນຕີຄວາມໝາຍວ່າເປັນຕົວແທນທີ່ເປັນທາງການ ຫຼື ບໍ່ເປັນທາງການ ຫຼື ເປັນທ່າທີຂອງ ອົງການ GIZ ແລະ ບັນດາເຈົ້າໜ້າທີ່ ຫຼື ຕົວແທນຂອງພາກລັດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.*

***ຜະລິດໂດຍ:***
ອົງການ GIZ / ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ (LM-RED Program)

**ສຳລັບ**
ໜ່ວຍງານຍ່ອຍດ້ານທຸລະກິດກະສິກຳ (SWGAB)

BY NC SA

ການສຶກສານີ້ໄດ້ຮັບການສະໜັບສະໜູນໂດຍແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ ຊຶ່ງ ຕາງໜ້າໃຫ້ແກ່ສະຫະພັນເຢຍລະມັນ ກະຊວງຮ່ວມມືເສດຖະກິດ ແລະ ການພັດທະນາ (BMZ)

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Laos Extension for Agriculture Project

## ບົດສັງລວມຫຍໍ້

ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດຂອງອົງການ GIZ ແມ່ນສົ່ງເສີມການພັດທະ ນາໃຫ້ແກ່ຜະລິດຕະພັນກະສິກຳທີ່ຖືກຄັດເລືອກໃນແຂວງເປົ້າຫມາຍທີ່ມີການຮ່ວມມືລັດ ແລະ ເອກະຊົນ ຊຶ່ງເຫັນວ່າເປັນເຄື່ອງມືທີ່ມີປະສິດທິພາບສຳລັບຮູບແບບດັ່ງກ່າວ. ການສຶກສານີ້ໄດ້ມີຈຸດປະສົງເພື່ອ: ກ) ທົບທວນບັນດາປະສົບການຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳຢູ່ ສປປ ລາວ ແລະ ຂ) ກຳນົດຄຳນິຍາມ ແລະ ຮ່າງຄູ່ມືແນະນຳໃນການອອກແບບໂຄງການການຮ່ວມມືລັດ ແລະ ເອກະຊົນ.

ການສຶກສາໄດ້ເຮັດການສອບຖາມແບບເຄິ່ງໂຄງສ້າງກັບບັນດາຕົວແທນຄູ່ຮ່ວມພັດທະນາ, ກະຊວງກະສິກຳ ແລະ ປ່າໄມ້, ໂຄງການຊ່ວຍເຫຼືອລ້າທີ່ເປັນທາງການ ODA ທີ່ຢູ່ໃນກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ແລະ ຕົວແທນຂອງພາກເອກະຊົນ. ໄດ້ເຮັດການຢ້ຽມຢາມ ແລະ ປຶກສາຫາລືກັບພະແນກກະສິກຳ ແລະ ປ່າໄມ້ ແລະ ປະຊຸມຮ່ວມກັບບັນດາບໍລິສັດທີ່ເຮັດວຽກສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງກະສິກຳ. ມັນມີຄວາມຫຍຸ້ງຍາກຫຼາຍໃນການກຳນົດໂຄງການຕົວຢ່າງຂອງການຮ່ວມມືລັດ ແລະ ເອກະຊົນ ທີ່ຖືກຕ້ອງກັບຄຳນິຍາມທີ່ສາກົນໄດ້ຍອມຮັບ ແລະ ປະກົດວ່າ ຍັງບໍ່ທັນມີຄວາມກະຈ່າງແຈ້ງໃນການໃຫ້ຄຳນິຍາມກ່ຽວກັບເລື່ອງດັ່ງກ່າວລະຫວ່າງພະນັກງານພາຍໃນກະຊວງ ກະສິກຳ ແລະ ປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ. ບັນດາຜູ້ທີ່ມີສ່ວນຮ່ວມເຫຼົ່ານີ້ໄດ້ຮຽກຮ້ອງໃຫ້ມີທິດນຳອັນຈະແຈ້ງຕໍ່ກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ຈາກກະຊວງກະສິກຳ ແລະ ປ່າໄມ້. ຕໍ່ກັບເລື່ອງນີ້ແມ່ນຈຳເປັນຕ້ອງໃຫ້ເຫັນຄວາມຊັດເຈນຂອງອົງປະກອບໃນການສົ່ງເສີມຊາວກະສິ ກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ ວ່າມີຫຍັງທີ່ແຕກຕ່າງກັບຄວາມສຳພັນ “ປົກກະຕິ” ລະຫວ່າງລັດຖະບານ ແລະ ພາກເອກະຊົນ.

ບົດລາຍງານນີ້ໄດ້ສຶກສາຄຳນິຍາມຂອງສາກົນກ່ຽວກັບການຮ່ວມຂອງພາກລັດ ແລະ ເອກະຊົນ ແລະ ກຳນົດອົງປະກອບທີ່ເປັນພື້ນຖານຂອງຄຳນິຍາມດັ່ງກ່າວທີ່ຕ້ອງການເພື່ອການພິຈາລະນາໃຫ້ກັບການພັດທະນາເປັນຄຳນິຍາມການຮ່ວມມືລັດ ແລະ ເອກະຊົນແຫ່ງຊາດທີ່ເໝາະສົມ. ເຫຼົ່ານີ້ລວມມີ: ກ) ໃນຕົວຈິງແລ້ວ ການຮ່ວມມືລັດ ແລະ ເອກະຊົນ ແມ່ນ ຄຳສັບທີ່ກວາມລວມເອົາຫຼາຍຮູບແບບ; ຂ) ການຮ່ວມມືທີ່ສ້າງຂຶ້ນເພື່ອໃຫ້ບັນລຸຈຸດປະສົງ, ກຳນົດຂຶ້ນໂດຍສາທາລະນະຊົນ, ເປົ້າໝາຍລວມແມ່ນໃຫ້ພົວພັນເຖິງຜົນປະໂຫຍດແກ່ສາທາລະນະຊົນ; ແລະ ຄ) ການຮ່ວມມືທີ່ເຮັດໃຫ້ຂະແໜງການພາກເອກະຊົນສາມາດສະໜອງສິນຄ້າ ຫຼື ການບໍລິການທີ່ພາກລັດໄດ້ເຮັດໃນໄລຍະຜ່ານມາ. ອີງຕາມຜົນການປະເມີນກໍລະນີສຶກສາເຫັນວ່າສາມາດພິຈາລະນາອົງປະກອບທີ່ສະໜັບສະໜູນໃຫ້ແກ່ການກຳນົດຄຳນິຍາມສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງກະສິກຳຢູ່ ສປປ ລາວ. ການຮ່ວມມືລັດ ແລະ ເອກະຊົນສາມາດໃຊ້ເປັນເຄື່ອງມືໃຫ້ແກ່ການພັດທະນາຄວາມອາດສາມາດຂອງພາກເອກະຊົນພາຍໃນປະເທດເຊັ່ນ: ມີເປົ້າຫມາຍໃນການພັດທະນາວິສາຫະກິດ; ງ) ສະ ເພາະຂະແໜງການກະສິກຳການຮ່ວມມືລັດ ແລະ ເອກະຊົນແມ່ນສາມາດຖືກນຳໃຊ້ເພື່ອການພັດທະນາ ຫຼື ສ້າງຕ່ອງໂສ້ມູນຄ່າໃໝ່, ຫຼື ການສ້າງໃຫມ່; ຈ) ລະບົບຕ່ອງໂສ້ມູນຄ່າ; ສ) ມີບັນດາເຄື່ອງມືໃຫ້ແກ່ລັດຖະບານທ້ອງຖິ່ນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງສາມາດຫຼຸດຜ່ອນຄວາມສ່ຽງໃນການດຳເນີນທຸລະກິດຂອງພາກເອກະຊົນທີ່ເຂົ້າຮ່ວມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະ ຊ) ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືພາກລັດ ແລະ ເອກະຊົນແມ່ນມີຄວາມແຕກຕ່າງຈາກທຸລະກິດ “ທຳມະດາ” ແລະ

ສິ່ງຈູງໃຈປົກກະຕິທີ່ພາກລັດສະໜອງໃຫ້ແກ່ພາກທຸລະກິດ. ເພີ່ມເຕີມຕໍ່ຄຳນິຍາມເຫຼົ່ານີ້ ອີງການ GIZ ມີການກຳນົດຫຼັກການຂອງຕົນໃນການສະໜັບສະໜູນໃຫ້ແກ່ການຮ່ວມມືລັດ ແລະ ເອກະຊົນ.
ໃນປະຈຸບັນຢູ່ໃນ ລາວ ຍັງຂາດໂຄງສ້າງດ້ານນິຕິກຳທີ່ໄດ້ອອກແບບສະເພາະເພື່ອເອື້ອອຳນວຍໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມຂອງພາກລັດ ແລະ ເອກະຊົນ. ແຕ່ຢ່າງໃດກໍຕາມ ປະເທດລາວ ກໍ່ມີບັນດານະໂຍບາຍ, ກົດໝາຍຕ່າງໆ, ແລະ ໄດ້ອອກແບບລະບຽບການຕ່າງໆ ເພື່ອສົ່ງເສີມໃຫ້ແກ່ການພັດທະນາການຜະລິດກະສິກຳເປັນສິນຄ້າ ແລະ ທຸລະກິດກະສິກຳກໍ່ເປັນວຽກໜຶ່ງທີ່ສາມາດເອື້ອອຳນວຍໃຫ້ແກ່ການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ. ໂດຍການຊ່ວຍເຫຼືອດ້ານວິຊາການຈາກທະນາຄານພັດທະອາຊີກະຊວງແຜນການ ແລະ ການລົງທຶນກຳລັງພັດທະນາໂຄງສ້າງດ້ານນິຕິກຳກ່ຽວກັບການຮ່ວມມືລັດ ແລະ ເອກະຊົນ ຊຶ່ງຄາດຫວັງວ່າຈະມີດຳລັດຂອງນາຍົກລັດຖະມົນຕີກ່ຽວກັບເລື່ອງດັ່ງກ່າວອອກໃນທ້າຍປີ 2014, ຕໍ່ຈາກນັ້ນກໍ່ຈະມີໂຄງການທົດລອງການຮ່ວມມືລັດ ແລະ ເອກະຊົນຢູ່ 2 ຂະແໜງການຄື: ຂະແໜງການສຶກສາ ແລະ ສາທາລະນະສຸກ.

ທີມງານສຶກສາໄດ້ເຮັດການຄົ້ນຫາໂຄງການຈຳນວນໜຶ່ງທີ່ໄດ້ມີການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ (ລວມທັງໂຄງການຊ່ວຍເຫຼືອດ້ານການເງິນ) ແລະ ພາກເອກະຊົນ ຊຶ່ງກຳນົດກໍລະນີສຶກສາໃນຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລ້ວສັງລວມຈາກປະສົບດັ່ງກ່າວ. ເອກະສານລາຍງານ 4 ກໍລະນີສຶກສາໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນມີຄື: ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ (EMRIP), ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ ທີ່ສົ່ງເສີມການປູກໝາກແໜ່ງຢູ່ເມືອງປາກຊ່ອງ, ແລະ ໂຄງການປັບປຸງພັນໝູ-ລ້ຽງໝູເປັນສິນຄ້າຢູ່ແຂວງເຊກອງ ແລະ ການດຳເນີນງານຂອງບໍລິສັດ ສະຫຍາມ ຕານິປາມະຢູ່ປາກຊ່ອງ.

ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ (EMRIP) ແມ່ນວິທີການໜຶ່ງທີ່ມີຄວາມສຳເລັດໃນການປັບປຸງທັງໝົດຂອງຕ່ອງໂສ້ມູນຄ່າເຂົ້າ ໂດຍຜ່ານການເຮັດວຽກຮ່ວມກັບເຈົ້າຂອງໂຮງສີເຂົ້າຫຼາຍກວ່າການເຮັດວຽກກັບຊາວນາ. ວິທີການນີ້ເຫັນໄດ້ເຖິງຄວາມສຳຄັນການພັດທະນາຂອງໂຮງສີເຂົ້າ "ຮູບແບບທຸລະກິດ" ແລະ ເປັນການພັດທະນາວິສາຫະກິດທີ່ເຂັ້ມແຂງຢູ່ໃນກໍລະນີນີ້. ໂຄງການ EMRIP ໄດ້ມີຜົນສຳເລັດໃນການເພີ່ມຜົນຜະລິດໃຫ້ແກ່ຊາວນາ ແລະ ຄຸນນະພາບເຂົ້າ ໂດຍຜ່ານການເຮັດວຽກຮ່ວມກັບໂຮງສີເຂົ້າ ໃນການສ້າງສັນຍາຊື້-ຂາຍເຂົ້າກັບກຸ່ມຊາວນາທີ່ປູກເຂົ້າ. ເຈົ້າຂອງໂຮງສີເຂົ້າໄດ້ສະໜອງປັດໃຈຂາເຂົ້າສຳລັບການຜະລິດ ແລະ ໃຫ້ຄຳແນະນຳສົ່ງເສີມແກ່ຊາວນາ. ປະສົບການຂອງ EMRIP ໄດ້ຖືກເຜີຍແຜ່ອອກເປັນວົງກວ້າງວ່າມີຜົນສຳເລັດ ແລະ ໄດ້ຖືກຍົກຂຶ້ນມາເປັນຕົວແບບສຳລັບການໝູນໃຊ້ກັບພືດອື່ນໆໃຫ້ກວ້າງຂວາງອອກ. ປັດໃຈສຳຄັນທີ່ພາໃຫ້ມີຜົນສຳເລັດຂອງໂຄງການ EMRIP ມີຄື: ກ) ມີການເປີດກວ້າງຕໍ່ສາທາລະນະຊົນ, ອີງໃສ່ມາດຕະຖານຂອງການຄັດເລືອກ, ໄດ້ນຳໃຊ້ຂະບວນການໆຄັດເລືອກແບບແຂ່ງຂັນກັນເພື່ອກຳນົດເອົາຄູ່ຮ່ວມງານພາກເອກະຊົນທີ່ດີທີ່ສຸດ; ຂ) ກົດຈະກຳໄດ້ສ້າງຂຶ້ນບົນພື້ນຖານຄວາມເຂົ້າໃຈຕໍ່ກັບໂອກາດ ແລະ ຂໍ້ຄົງຄ້າງຂອງຕ່ອງໂສ້ມູນຄ່າເຂົ້າ ແລະ ຄ) ໂຮງສີເຂົ້າ ແລະ ຊາວນາໄດ້ມີການພົວພັນ ແລະ ເຮັດວຽກຮ່ວມກັນມາດົນແລ້ວ. ໃນຂະນະດຽວກັນ, ໃນເບື້ອງຕົ້ນໂຄງການໄດ້ສະໜອງທຶນຊ່ວຍເຫຼືອລ້າໃຫ້ແກ່ໂຮງສີເຂົ້າເພື່ອປັບປຸງອຸປະກອນການສີໃຫ້ແກ່ພວກເຂົາ ຫຼັງຈາກນັ້ນກໍ່ໄດ້ຂະຫຍາຍໄປໃຫ້ໂຮງສີອື່ນໆ ທີ່ບໍ່ໄດ້ເອື່ອຍອີງຕໍ່ການສະໜັບສະໜູນເຫຼົ່ານີ້.

ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ມີເຈດຈຳນົງໃນການແນະນຳເຕັກນິກການປູກໝາກແໜ່ງຂຽວ (Elettaria cardamomum) ຢູ່ບັນດາແຂວງພາກໃຕ້ ຊຶ່ງໃນເບື້ອງຕົ້ນແມ່ນເນັ້ນໃສ່ປູກຢູ່ເມືອງປາກຊ່ອງ. ໄດ້ມີການພັດທະນາໂຄງສ້າງແນໃສ່ການສ້າງຕ່ອງໂສ້ມູນຄ່າໃຫ້ກັບພືດໃໝ່ນີ້ (ໝາກແໜ່ງ). ບໍລິສັດໄດ້ສ້າງຕັ້ງຂຶ້ນເພື່ອເປົ້າໝາຍສະເພາະການສະໜອງອຸປະກອນການປູກພືດໃຫ້ແກ່ໂຄງການນຳໄປແຈກຢາຍຕໍ່ໃຫ້ກັບກຸ່ມຊາວກະສິກອນ. ໃນຂໍ້ຕົກລົງທີ່ໄດ້ເຊັນກັນລະຫວ່າງໂຄງການ ແລະ ບໍລິສັດມີການກຳນົດຈຳນວນ ແລະ ລາຄາຂອງອຸປະກອນການປູກພືດທີ່ຕ້ອງສະໜອງໃຫ້ແກ່ຊາວກະສິກອນ ແລະ ບົນພື້ນຖານຂໍ້ຕົກລົງນີ້ບໍລິສັດໄດ້ນຳເອົາອຸປະກອນການປູກພືດມາຈາກປະເທດອິນເດຍ ແລະ ໄດ້ຕິດຕັ້ງໃນຫຼາຍໆບ່ອນສຳລັບເພີ່ມຜົນຜະລິດ. ບໍລິສັດມີເປົ້າໝາຍໃນການສົ່ງອອກໝາກແໜ່ງ ແລະ ຕ້ອງການສຳປະທານທີ່ດິນຈຳນວນນ້ອຍໜຶ່ງເພື່ອເຮັດການຜະລິດດ້ວຍຕົນເອງ. ຄວາມສ່ຽງທັງຫມົດທີ່ກ່ຽວຂ້ອງກັບອຸປະກອນການປູກພືດ ແລະ ການສ້າງຕັ້ງຕ່ອງໂສ້ມູນຄ່າໃຫ້ແກ່ການຜະລິດແມ່ນຮັບຜິດຊອບໂດຍບໍລິສັດ ແຕ່ກໍຫຼຸດຜ່ອນໄດ້ໂດຍຜ່ານການເຫັນດີກັບໂຄງການ.

ໂຄງການດຽວກັນຢູ່ໃນແຂວງເຊກອງມີເປົ້າໝາຍສະໜອງໝູນ້ອຍໃຫ້ແກ່ກຸ່ມຊາວກະສິກອນເພື່ອລ້ຽງ (ທອມໝູ) ແລະ ສ້າງເງື່ອນໄຂສະໜັບສະໜູນການສະໜອງຂອງຜູ້ປະກອບການທ້ອງຖິ່ນໃຫ້ມີຄວາມຍືນຍົງ ໃນການສ້າງຕັ້ງສິ່ງເອື້ອອຳນວຍໃຫ້ແກ່ການຜະລິດໝູນ້ອຍ. ໃນຂໍ້ຕົກລົງການປູກໝາກແໜ່ງແມ່ນໄດ້ມີການກຳນົດລາຄາ ແລະ ລາ ຄາຄໍ້າປະກັນ. ນອກຈາກນັ້ນ, ໂຄງການຍັງໄດ້ສະໜອງເງິນກູ້ໃຫ້ແກ່ຜູ້ປະກອບການ ເພື່ອເລີ່ມກິດຈະການ ຊຶ່ງການໃຊ້ແທນຄືນຈະໄດ້ຈ່າຍແບບຜ່ອນຜັນໃນເວລາທີ່ໄດ້ຂາຍໝູນ້ອຍໃຫ້ກັບໂຄງການ. ໃນກໍລະນີນີ້ແມ່ນໄດ້ມີການແບ່ງປັນຄວ່າມສ່ຽງລະຫວ່າງໂຄງການ ແລະ ວິສາຫະກິດ. ໂຄງການໄດ້ມີການໂຄສະນາກ່ຽວກັບການສ້າງໂອກາດໃຫ້ແກ່ຄູ່ຮ່ວມງານ ແລະ ຂະບວນການທີ່ໄດ້ນຳໃຊ້ໃນການຄັດເລືອກຢູ່ໃນສື່ຂອງທ້ອງຖິ່ນ. ວິສາຫະກິດມີຄວາມເພິ່ງພໍໃຈຕໍ່ການສະຫນັບສະຫນູນທີ່ເຂັ້ມແຂງຂອງພາກລັດຢູ່ຂັ້ນແຂວງທີ່ໄດ້ເອື້ອອຳນວຍເຊັ່ນ: ກ) ການເຂົ້າເຖິງເງິນກູ້ຢືມເພີ່ມເຕີມຈຳນວນຫຼາຍ; ຂ) ການເຂົ້າເຖິງການບໍລິການສັດຕະວະແພດທີ່ສຳຄັນຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຄ) ລາຍງານການຜູກຂາດກ່ຽວກັບການຂາຍຊີ້ນໝູໃຫ້ແກ່ຕະຫຼາດຂອງແຂວງ. ນັກທຸລະ ກິດນີ້ເປັນຜູ້ສະໜອງປັດໃຈຂາເຂົ້າ (ໝູນ້ອຍ) ໃຫ້ກັບກຸ່ມຊາວກະສິກອນ ລວມທັງມີການຊື້ຜົນຜະລິດ (ໝູ) ຄືນແລ້ວເອົາໄປເຂົ້າໂຮງງານຂ້າສັດ ແລະ ຂາຍສູ່ຕະຫຼາດ.

ໄດ້ມີການລາຍງານວ່າການດຳເນີນງານຂອງບໍລິສັດ ສະຫຍາມ ຕານິຢາມະ (Taniyama Siam) ໃນປາກຊ່ອງທີ່ມີການສົ່ງອອກໝາກຖົ່ວເມືອກຖືວ່າເປັນຕົວຢ່າງຂອງການຮ່ວມມືຂອງລັດ ແລະ ເອກະຊົນໃນຂະແໜງກະສິກຳສຳລັບປະເທດລາວ. ຢ່າງໃດກໍຕາມການສຶກສາໄດ້ພົບວ່າຄວາມເປັນຈິງໃນການດຳເນີນງານຂອງບໍລິສັດ ແມ່ນເປັນພຽງການດຳເນີນທຸລະກິດແບບທຳມະດາ. ໃນປະເທດໄທບໍລິສັດ ສະຫຍາມ ຕານິຢາມະ ມີການເຮັດວຽກຮ່ວມກັບຊາວກະສິກອນຫຼາຍກວ່າ 1,000 ຄົນ ທີຜະລິດກະສິກຳທີ່ມີມູນຄ່າສູງ ແຕ່ໃຊ້ສານເຄມີຕໍ່າ, ສົ່ງພືດຜັກໄປຂາຍໃຫ້ຕະຫຼາດຍີ່ປຸ່ນ ແລະ ຄາດຫວັງໄວ້ໃນເບື້ອງຕົ້ນວ່າຈະດຳເນີນທຸລະກິດໃນລັກສະນະທີ່ຄ້າຍຄືກັນກັບຢູ່ປະເທດ.

ສິ່ງນີ້ແມ່ນຍັງບໍ່ທັນໄດ້ເກີດຂຶ້ນເທື່ອ ຍ້ອນວ່າບໍລິສັດໄດ້ສຸມໃສ່ເຮັດການຜະລິດຢູ່ພາຍໃນເຂດພື້ນທີ່ດິນທີ່ຕົນເອງສຳປະທານເທົ່ານັ້ນ. ໃນສ່ວນນີ້ ບໍລິສັດມີຜົນໄດ້ຮັບໃນການພະຍາຍາມກຳນົດພືດທີ່ສາມາດໃຫ້ຜົນກຳໄລ ຊຶ່ງໄດ້ເກີດຂຶ້ນປະຈຸບັນກັບການຂະຫຍາຍການຜະລິດໜໍ່ໄມ້ຟລັ່ງ. ໃນໄລຍະຍາວ ບໍລິສັດອາດຂະຫຍາຍການດຳເນີນກິດຈະການໃຫ້ຄົນພາຍນອກປູກ ແຕ່ໃນໄລຍະນີ້ພວກເຂົາສຸມໃສ່ຊອກຫາຜົນກຳໄລ ແລະ ກອບກູ້ເອົາທຶນອັນໃຫຍ່ຫຼວງທີ່ພວກເຂົາໄດ້ລົງທຶນໄປແລ້ວ. ຄຽງຄູ່ກັບການສຳປະທານທີ່ດິນບໍລິສັດແມ່ນບໍ່ມີຂໍ້ຕົກລົງຕ່າງຫາກກັບລັດຖະບານ

ກ່ຽວກັບການດຳເນີນກິດຈະການໃຫ້ຄົນພາຍນອກປູກ ແລະ ການຄຸ້ມຄອງຂອງບໍລິສັດບໍ່ໄດ້ພິຈາລະນາວ່າພວກເຂົາກຳລັງດຳເນີນງານການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ.

ການທົບທວນຄືນກໍລະນີສຶກສາ ແລະ ການສຶກສາການຮ່ວມມືອື່ນໆ ທີ່ເປັນຕົວຢ່າງຂອງການປະຕິບັດທີ່ດີ "ສຳລັບການຮ່ວມມືລັດ ແລະ ເອກະຊົນ" ຊຶ່ງສາມາດກຳນົດໄດ້ດັ່ງຕໍ່ໄປນີ້: ກ) ມີການເປີດກວ້າງຕໍ່ສາທາລະນະຊົນ ແລະ ມີການເຂັ້ມງວດໃນການຄັດເລືອກເອົາຄູ່ຮ່ວມງານພາກເອກະຊົນ; ຂ) ໃຫ້ພາກເອກະຊົນມີສ່ວນຮ່ວມແຕ່ຫົວທີ; ຄ) ມີຄວາມລະມັດລະວັງໃນການຄັດເລືອກເຄື່ອງມືເພື່ອຫຼຸດຜ່ອນຄວາມສ່ຽງຂອງພາກເອກະຊົນ; ງ) ພາກລັດມີບົດບາດໃນການໄກ່ເກ່ຍຂໍ້ຂັດແຍ້ງລະຫວ່າງພາກເອກະຊົນ ແລະ ກຸ່ມຜູ້ຜະລິດ ແລະ ຈ) ການແບ່ງປັນຄວາມສ່ຽງທີ່ເໝາະສົມລະຫວ່າງພາກລັດ ແລະ ເອກະຊົນ ສຳລັບຄວາມສ່ຽງໃນໄລຍະຍາວແມ່ນຄວນເປັນຄວາມຮັບຜິດຊອບຂອງພາກເອກະຊົນ.

ໄດ້ມີການຮ່າງຄູ່ມືແນະນຳແບບກວມລວມໃນເບື້ອງຕົ້ນສຳລັບການພັດທະນາໃນຂັ້ນຕໍ່ໄປ. ຄູ່ມືແນະນຳເຫຼົ່ານີ້ໄດ້ກຳນົດອົງປະກອບຂອງຄຳນິຍາມໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ, ຫຼັກການພື້ນຖານທີ່ຈະສາມາດເປັນແນວທາງໃຫ້ແກ່ການພັດທະນາການຮ່ວມມືດັ່ງກ່າວ ແລະ ຂະບວນການສຳລັບການພັດທະນາຂອງພວກເຂົາ. ຂະບວນການເຫຼົ່ານີ້ກວມເອົາຂັ້ນຕອນພື້ນຖານຂອງການກຳນົດຈຸດປະສົງ, ການປະເມີນຄວາມເປັນໄປໄດ້, ການອອກແບບລາຍລະອຽດດ້ານເຕັກນິກ, ສ້າງສັນຍາຜູກພັນ ແລະ ການຕິດຕາມກວດກາ. ມັນຈຳເປັນຕ້ອງໄດ້ຮັບຮູ້ວ່າ ຄູ່ມືແນະນຳເຫຼົ່ານີ້ໄດ້ຖືກພັດທະນາຂຶ້ນສຳລັບແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ, ການຈັດຕັ້ງປະຕິບັດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນບໍ່ຈຳເປັນຕ້ອງມີການລົງທຶນໂຄງການ ເນື່ອງຈາກວ່າມີ "ເຄື່ອງມື" ທີ່ພຽງພໍໃຫ້ກັບພາກລັດເພື່ອສ້າງຕັ້ງການຮ່ວມມືດັ່ງກ່າວຢູ່ນອກຂອບໂຄງການ.

## Table of Contents


1. ພາກນໍາສະເໜີ ..... 9

2. ຄໍານິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ..... 10

2.1 ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກໍາ – ປະສົບການຂອງສາກົນ ..... 14

2.2 ຄໍານິຍາມຂອງອົງການ GIZ ກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ..... 15

2.3 ສະຫຼຸບ . ..... 16

3. ໂຄງສ້າງດ້ານນິຕິກໍາ ..... 17

3.1 ການພັດທະນາດ້ານນະໂຍບາຍໃນຕໍ່ໜ້າ ..... 18

4.1 ກໍລະນີສຶກສາ: ໂຮງສີເຂົ້າໃນແຂວງຄໍາມ່ວນ ..... 20

4.2 ກໍລະນີສຶກສາ: ຫມາກແຫນ່ງຂຽວໃນເມືອງປາກຊ່ອງ. ..... 23

4.3 ກໍລະນີສຶກສາ: ໝໍ່ໄມ້ ຝຣັ່ງ ໃນເມືອງທ່າແຕງ ..... 25

4.4 ກໍລະນີສຶກສາ: ການລ້ຽງໝູ ໃນແຂວງ ເຊກອງ ..... 26

4.5 ຕົວຢ່າງອື່ນໆ ..... 28

5. ການວິເຄາະໃນເບື້ອງຕົ້ນ ..... 30

5.1 ຕົວຢ່າງການຜະລິດທີ່ດີ ..... 31

5.2 ສິ່ງທ້າທາຍທີເປັນອັນລວມ ..... 33

6. ສະຫຼູບ ..... 34

ເອກະສານຊ້ອນທ້າຍ 1: ຄູ່ມືແນະນໍາສາລັບການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກໍາ ..... 36

ເອກະສານຊ້ອນທ້າຍ 2: ເງື່ອນໄຂທີ່ເປັນບ່ອນອີງ ..... 42

ເອກະສານຊ້ອນທ້າຍທີ 3: ຄໍານິຍາມກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ..... 44

**ຄຳສັບຫຍໍ້:**

| | |
|---|---|
| **ADB:** | ທະນາຄານພັດທະນາອາຊີ |
| **ADS:** | ແຜນແມ່ບົດການພັດທະນາຂະແໜງການກະສິກຳ |
| **DAEC:** | ກົມສົ່ງເສີມກະສິກຳ ແລະ ສະຫະກອນ (ກສກສ) |
| **DAFO:** | ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ |
| **DoA:** | ກົມປູກຝັງ |
| **DoIC:** | ກົມອຸດສາຫະກຳ ແລະ ການຄ້າ |
| **EMRIP:** | ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ |
| **GIZ:** | ອົງການພັດທະນາສາກົນແຫ່ງປະເທດເຢຍລະມັນ |
| **GoL:** | ລັດຖະບານແຫ່ງ ສປປ ລາວ |
| **IFAD:** | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| **LM-RED:** | ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ |
| **MAF:** | ກະຊວງກະສິກຳ ແລະ ປ່າໄມ້ |
| **MoIC:** | ກະຊວງອຸດສາຫະກຳ ແລະ ການຄ້າ |
| **MPI:** | ກະຊວງແຜນການ ແລະ ການລົງທຶນ |
| **ODA:** | ໂຄງການຊ່ວຍເຫຼືອທີ່ເປັນທາງການ |
| **PAFO:** | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| **PPP:** | ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ |
| **SDC:** | ອົງການຮ່ວມມື ເພື່ອການພັດທະນາແຫ່ງປະເທດສະວິດສ໌ |
| **SHDP:** | ໂຄງການສົ່ງເສີມການຜະລິດເປັນສິນຄ້າ |
| **SNRMPEP:** | ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ |
| **SNV:** | ອົງການພັດທະນາແຫ່ງປະເທດເນເທີແລນ |
| **SSWG:** | ໜ່ວຍງານຍ່ອຍ |

## 1. ພາກນຳສະເໜີ

ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ (LM-RED) ແມ່ນແນວຄວາມຄິດທີ່ສົ່ງເສີມການພັດທະນາສຳລັບຜະລິດຕະພັນກະສິກຳທີ່ໄດ້ຄັດເລືອກໃນ 3 ແຂວງເປົ້າຫມາຍ (ແຂວງຫຼວງນໍ້າທາ, ໄຊຍະບູລີ ແລະ ແຂວງອັດຕະປື). ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຖືວ່າເປັນເຄື່ອງມືທີ່ມີປະສິດທິພາບ ເພື່ອເຮັດໃຫ້ບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂອບຄວາມຄິດດັ່ງກ່າວ ຊຶ່ງພວກເຂົາໃຊ້ປະໂຫຍດຈາກຊັບພະຍາກອນທີ່ມີຈາກການຮ່ວມມືກັບພາກເອກະຊົນ. ອຸປະສັກສາຄັນໃນການສ້າງຕັ້ງການຮ່ວມມືດັ່ງກ່າວແມ່ນຂາດການອະທິບາຍຢ່າງຄົບຖ້ວນ ຫຼື ຄູ່ມືແນະນຳທີ່ເປັນແນວທາງໃຫ້ແກ່ການອອກແບບການແຊກແຊງເຫຼົ່ານີ້.

ໄດ້ມີການມອບໝາຍໃຫ້ເຮັດການສຶກສານີ້ເພື່ອພັດທະນາ: ກ) ຄູ່ມືແນະນຳສຳລັບອອກແບບໃຫ້ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ ແລະ ຂ) ຄຳນິຍາມຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (ໄດ້ສະເຫນີໃນເອກະສານຊ້ອນທ້າຍ 1). ຄຳນິຍາມ ແລະ ຄູ່ມືແນະນຳແມ່ນໄດ້ຖືກອອກແບບມາ ເພື່ອມາສະໜັບສະໜູນໃຫ້ແກ່ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ ຂອງອົງການ GIZ. ລາຍລະອຽດຂອງໜ້າວຽກແມ່ນ ສຳເນົາໃນເອກະສານຊ້ອນ 2.

ການສຶກສາໄດ້ເຮັດການສຳພາດແບບເຄິ່ງໂຄງສ້າງກັບຜູ້ຕາງຫນ້າຂອງຄູ່ຮ່ວມພັດທະນາ, ກະຊວງກະສິກຳ ແລະ ປ່າໄມ້ (MAF), ໂຄງການຊ່ວຍເຫຼືອລ້າທີ່ເປັນທາງການ ທີ່ເຮັດວຽກຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຕາງໜ້າພາກເອກະຊົນ. ກິດຈະກຳຕ່າງໆທີ່ເປັນການຮ່ວມມືລັດ ແລະ ເອກະຊົນໃນຂະແໜງກະສິກຳໄດ້ຖືກກຳນົດຂຶ້ນຈາກກອງປະຊຸມເຫຼົ່ານີ້ ແລະ ການໄປຢ້ຽມຢາມພາກສະໜາມໄດ້ປະຕິບັດຕາມກິດຈະກຳເຫຼົ່ານີ້. ອີກເທື່ອຫນຶ່ງ, ການສຳພາດແບບເຄິ່ງໂຄງສ້າງໄດ້ຖືກຈັດຂຶ້ນເພື່ອສ້າງຄວາມເຂົ້າໃຈເຖິງຄວາມແປັນຈິງກ່ຽວກັບການຮ່ວມມືລັດ ແລະ ເອກະຊົນໃນແຕ່ລະກໍລະນີ, ພາລະບົດບາດຂອງບັນດາຜູ້ທີ່ມີສ່ວນຮ່ວມໃນການຮ່ວມມື ແລະ ເຄື່ອງມືທີ່ໄດ້ນຳໃຊ້ໂດຍພາກລັດເຂົ້າໃນການສະຫນັບສະຫນູນແກ່ການຮ່ວມມືດັ່ງກ່າວ. ຄຸນລັກສະນະສຳຄັນຂອງການຮ່ວມມືລັດ ແລະ ເອກະຊົນແມ່ນໄດ້ມາຈາກການຄົ້ນຄວ້າ-ປະເມີນຂໍ້ມູນມືສອງກ່ຽວກັບການຮ່ວມມືລັດ ແລະ ເອກະຊົນຂອງສາກົນ. ເນື່ອງຈາກການສຶກສາຄັ້ງນີມີເວລາສັ້ນ ເຊິ່ງບໍ່ສາມາດໄດ້ຮັບຂໍ້ມູນຢ່າງທົ່ວເຖິງ ແລະ ຄຳຄິດເຫັນທີ່ໄດ້ລະຫວ່າງການສຳພາດເປັນພຽງແຕ່ການສົນທະນາແບບເຊິ່ງໜ້າ.

ຂໍ້ຈຳກັດຕ່າງໆໃນການລາຍງານ:

- ໂດຍສະເລ່ຍແລ້ວເວລາສຳລັບການສຳພາດມີປະມານ 1 ຊົ່ວໂມງ, ໃນລະຫວ່າງການສຳພາດເຫຼົ່ານີ້ແມ່ນເຮັດສອບຖາມແບບໜ້າຕໍ່ໜ້າ ຊຶ່ງເຮັດໃຫ້ມີຂໍ້ຈຳກັດຂອງການໃຫ້ຂໍ້ມູນ. ກົງກັນຂ້າມໃນບາງກໍລະນີໄດ້ມີການສະໜອງຂໍ້ມູນຈາກຜູ້ທີ່ມີສ່ວນກ່ຽວຂ້ອງທີ່ແຕກຕ່າງກັນ.
- ໃນບັນດາຈຳນວນຜູ້ທີ່ໄດ້ສຳພາດແມ່ນຂາດຂໍ້ມູນທີ່ຊັດເຈນກ່ຽວກັບຄວາມແຕກຕ່າງຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ກັບກິດຈະກຳ "ປົກກະຕິ" ທີ່ລັດຖະບານໄດ້ມີສິ່ງຈູງໃຈຕອບສະໜອງໃຫ້ ຕົວຢ່າງ: ການສຳປະທານທີ່ດິນ, ການຫຼຸດຜ່ອນພາສີ ແລະ ອື່ນໆ.
- ໄດ້ມີການກຳນົດເອົາຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນພຽງແຕ່ຈຳນວນໜ້ອຍໜຶ່ງເພື່ອເຮັດການສຶກສາວິໄຈ ແລະ ຈຳນວນທີໄດ້ຖືກກຳນົດນັ້ນແມ່ນມີຄວາມຜິດ

ເຂວຂອງ "ໂຄງການ" ການຮ່ວມມືຂອງພາກລັດ ແລະ ເອກະຊົນທີ່ໄດ້ກຳນົດຂຶ້ນຊົ່ວຄາວນັ້ນແມ່ນບໍ່ສາມາດທີ່ຈະພົບເຫັນໄດ້.

- ໃນບາງກໍລະນີຕົວຢ່າງຂອງກິດຈະກຳທີ່ໄດ້ຍົກຂຶ້ນມາວ່າເປັນຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນແຕ່ງອື່ນໆ ແມ່ນບໍ່ມີການສະແດງໃຫ້ເຫັນເຖິງຄຸນລັກສະນະດັ່ງກ່າວໃນປະຈຸບັນ.
- ເຖິງວ່າການຮ່ວມມືຂອງພາກລັດ ແລະ ເອກະຊົນໄດ້ລະບຸໄວ້ຢູ່ໃນເອກະສານນະໂຍບາຍຂອງກະຊວງກະສິກຳ ແລະ ປ່າໄມ້, ຈຳນວນຜູ້ທີ່ໃຫ້ສຳພາດຍັງໄດ້ລາຍງານວ່າມີຄວາມຈຳເປັນໃຫ້ມີຄວາມກະຈ່າງແຈ້ງຕໍ່ກັບອົງປະກອບຂອງການຮ່ວມມືລັດ ແລະ ເອກະຊົນ.

ບົດລາຍງານນີ້ແມ່ນເລີ່ມຈາກການສຳຫຼວດຄວາມໝາຍຂອງຄຳນິຍາມຕ່າງໆກ່ຽວກັບການຮ່ວມມືລັດ ແລະ ເອກະຊົນທີ່ໄດ້ນຳໃຊ້ໃນລະດັບສາກົນ ແລະ ອະທິບາຍເຖິງຄຸນລັກສະນະສຳຄັນທີ່ສາມາດນຳໃຊ້ເຂົ້າກັບເງື່ອນໄຂຂອງປະເທດລາວ ໂດຍສະເພາະແມ່ນຂະແໜງການກະສິກຳ. ໃນຂະບວນການຄັດເລືອກກໍລະນີສຶກສາຮູບແບການຮ່ວມມືລັດ ແລະ ເອກະຊົນ ແມ່ນໄດ້ຄັດເລືອກເອົາກໍລະນີທີ່ເຫັນຢູ່ໃນພາກສະໜາມ ແລະ ຈາກການສົນທະນາ. ອົງການ GIZ ປະຈຳ ລາວ ໄດ້ນຳສະເໜີຄຳນິຍາມການຮ່ວມມືລັດ ແລະ ເອກະຊົນໃນຂະແໜງກະສິກຳ ລາຍລະອຽດໃນເອກະສານຊ້ອນທ້າຍ 3 ຊຶ່ງເປັນສ່ວນຫນຶ່ງຂອງຄູ່ມືແນະນຳ PPP.

ໃນບົດລາຍງານນີ້ມີການນຳສະເໜີພາບລວມຂອງໂຄງສ້າງດ້ານນິຕິກຳສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ ແລະ ກຳລັງຢູ່ໃນທາມກາງການສືບຕໍ່ພັດທະນາໃຫ້ກັບວຽກງານນີ້. ກໍລະນີສຶກສາທີ່ໄດ້ຢ້ຽມຢາມໃນໄລຍະທີ່ເຮັດການສຶກສາແມ່ນໄດ້ຍົກມາອະທິບາຍແຕ່ລະກໍລະນີກ່ຽວກັບຄຸນລັກສະນະທີ່ສຳຄັນໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ມີການວິເຄາະກໍລະນີສຶກສາຕ່າງໆທຽບໃສ່ກັບຄຸນລັກສະນະສຳຄັນຂອງການຮ່ວມມືລັດ ແລະ ເອກະຊົນ ຫຼັງຈາກນັ້ນກໍ່ໄດ້ສັງລວມເອົາບັນດາຕົວຢ່າງການປະຕິບັດທີ່ດີຈາກກໍລະນີສຶກສາເຫຼົ່ານີ້. ຄູ່ມືແນະນຳສຳລັບການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ ໄດ້ສ້າງຂຶ້ນບົນພື້ນຖານຂອງກອງປະຊຸມປຶກສາຫາລືກັບບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຈາກຕົວຢ່າງຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນທີ່ໄດ້ຢ້ຽມຢາມຢູ່ພາກສະໜາມ.

*(ຮ່າງ-ຄູ່ມືແນະນຳສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍ 1).* ຄູ່ມືສະບັບນີ້ປະກອບດ້ວຍຄຳນິຍາມ, ຫຼັກການພື້ນຖານທີ່ສຳຄັນ ແລະ ກຳນົດຂະບວນການສຳລັບການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

## 2. ຄຳນິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ

ໄດ້ມີການກຳນົດໃນໜ້າວຽກຂອງການສຶກສາຄັ້ງນີ້ແມ່ນເພື່ອພັດທະນາຄຳນິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃຫ້ມີຄວາມຈະແຈ້ງຮັດກຸມໃຫ້ແກ່ການສົ່ງເສີມຊາວກະສິກອນໃນຮູບແບບດັ່ງກ່າວໃນຂະແໜງການກະສິກຳຢູ່ໃນ ລາວ. ຄວາມຕ້ອງການສຳລັບຄຳນິຍາມດັ່ງກ່າວໄດ້ຖືກຍົກມາສົນທະນາໃນກອງປະຊຸມຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຜູ້ທີ່ເຂົ້າຮ່ວມກອງປະຊຸມເຫຼົ່ານັ້ນແມ່ນຮຽກຮ້ອງໃຫ້ມີການກຳນົດຄຳນິຍາມດັ່ງກ່າວນີ້ໃຫ້ຊັດເຈນຂຶ້ນ. ໃນເລື່ອງນີ້ແມ່ນຈຳເປັນຕ້ອງໃຫ້ມີຄວາມຊັດເຈນຕໍ່ອົງປະກອບໃນການສົ່ງເສີມ

ຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ວ່າມີຫຍັງທີ່ແຕກຕ່າງກັບຄວາມສຳພັນ "ປົກກະຕິ" ລະຫວ່າງລັດຖະບານ ແລະ ພາກເອກະຊົນ.
ຄຳນິຍາມມາດຕະຖານສາກົນ[1] ກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ "ແບບດັ້ງເດີມ" ຈະໄດ້ອະທິບາຍດັ່ງຕໍ່ໄປນີ້:

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຮູບແບບຂອງການຮ່ວມມືລະຫວ່າງພາກລັດ (ແລະ ໃນທີ່ນີ້ແມ່ນລວມເຖິງຜູ້ໃຫ້ທຶນ) ແລະ ພາກສ່ວນເອກະຊົນ, ເຊິ່ງອີງໃສ່ຄວາມຊຳນານຂອງແຕ່ລະຝ່າຍ ເພື່ອສາມາດຕອບສະໜອງໃຫ້ໄດ້ດີທີ່ສຸດຕໍ່ກັບຄວາມຕ້ອງການຂອງສາທາລະນະຊົນທີ່ໄດ້ລະບຸໄວ້ຢ່າງຈະແຈ້ງ, ໂດຍການຈັດສັນຊັບພະຍາກອນ, ຄວາມສ່ຽງ ແລະ ຜົນຕອບແທນຢ່າງເໝາະສົມ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ມີຫຼາກຫຼາຍຮູບແບບທີ່ມີຄວາມກ້າວໜ້າເຊິ່ງໄດ້ດຶງເອົາການມີສ່ວນຮ່ວມຂອງພາກເອກະຊົນ ດ້ານຄວາມຊຳນານ ຫຼື ທຶນຮອນ. ໃນດ້ານໜຶ່ງ, ແມ່ນຮູບແບບການເຮັດສັນຍາຈັດຈ້າງພາກເອກະຊົນໂດຍກົງ ເພື່ອໃຫ້ບໍລິການການສົ່ງເສີມແບບດັ້ງເດີມຂອງພາກລັດ. ໃນອີກດ້ານໜຶ່ງ, ມັນແມ່ນຮູບແບບທີ່ພາກລັດເປັນຜູ້ຄຸ້ມຄອງບໍລິຫານແຕ່ວ່າຢູ່ພາຍໃນຂອບທີ່ອະນຸຍາດໃຫ້ພາກເອກະຊົນເປັນຜູ້ສະໜອງດ້ານການເງິນ, ອອກແບບ, ກໍ່ສ້າງ, ດຳເນີນງານ ແລະ ອາດສາມາດເປັນເຈົ້າຂອງຊັບສິນຊົ່ວຄາວ.

ຄວາມຫຼາກຫຼາຍຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນສາມາດສັງລວມໄດ້ດັ່ງຕາຕະລາງຂ້າງລຸ່ມນີ້:

**ຕາຕະລາງ 1: ຮູບແບບຂອງການຮ່ວມມືລັດ ແລະ ເອກະຊົນ ແລະ ຄວາມຮັບຜິດຊອບ**

| ປະເພດຂອງການສັນຍາ | ຄວາມເປັນເຈົ້າຂອງຊັບສິນ | ການດຳເນີນງານ ແລະ ການຄຸ້ມຄອງ | ເງິນລົງທຶນ | ຄວາມສ່ຽງທາງການຄ້າ |
|---|---|---|---|---|
| **ສັນຍາບໍລິການ** | ລັດ | ລັດ ແລະ ເອກະຊົນ | ລັດ | ລັດ |
| **ສັນຍາການຄຸ້ມຄອງ** | ລັດ | ເອກະຊົນ | ລັດ | ລັດ |
| **ຂໍ້ຕົກລົງການເຊົ່າ** | ລັດ | ເອກະຊົນ | ລັດ | ລັດ |
| **ການສຳປະທານ** | ລັດ ແລະ ເອກະຊົນ | ເອກະຊົນ | ເອກະຊົນ | ເອກະຊົນ |
| **ກໍ່ສ້າງ ດຳເນີນງານ ມອບໂອນ** | ລັດ ແລະ ເອກະຊົນ | ເອກະຊົນ | ເອກະຊົນ | ເອກະຊົນ |
| **ການຍຶດຊັບ** | ລັດ ກັບ ລັດ ແລະ ເອກະຊົນ | ເອກະຊົນ | ເອກະຊົນ | ເອກະຊົນ |

ລະດັບຄວາມສ່ຽງໃນຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນໄດ້ມີການແບ່ງປັນຄວາມສ່ຽງຮ່ວມກັນ ຫຼື ເປັນຄວາມຮັບຜິດຊອບໂດຍພາກເອກະຊົນແມ່ນເປັນປັດໄຈສຳຄັນຕໍ່ການໃຫ້ຄຳນິຍາມໃນເລື່ອງນີ້. ແນວໃດກໍ່ຕາມໂດຍທົ່ວໄປແລ້ວການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກ

[1] ສຳລັບຕົວຢ່າງຄຳນິຍາມອື່ນໆ ກະລຸນາເບິ່ງໃນເອກະສານຊ້ອນທ້າຍ 2.

ລັດ ແລະ ເອກະຊົນແມ່ນມີຄວາມຫຼາກຫຼາຍດັ່ງທີ່ໄດ້ກ່າວໄວ້ໃນ (ຕາຕະລາງ 1 ຂ້າງເທິງນີ້) ແລະ ມີວິທີການຕ່າງໆ ໃນການບໍລິຫານຄວາມສ່ຽງ.

ຄຳນິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນນີ້ແມ່ນມີຄວາມຈະແຈ້ງສົມຄວນ ແຕ່ບັນດານັກຄົ້ນຄ້ວາລາຍງານວ່າຍັງມີຄວາມສັບສົນຢູ່:

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແມ່ນຄຳສັບທີ່ອະທິບາຍເຖິງການເຮັດວຽກຮ່ວມກັນລະຫວ່າງພາກລັດ ແລະ ເອກະຊົນ ເຊິ່ງນັບແຕ່ຮູບແບບການຮ່ວມມືແບບເບົາບາງ, ແບບບໍ່ເປັນທາງການ ແລະ ເປັນຄູ່ຮ່ວມຍຸດທະສາດ ຈົນເຖິງການອອກແບບດ້ານການເງິນ ແລະ ດຳເນີນງານດ້ວຍຮູບແບບສັນຍາເພື່ອໃຫ້ການບໍລິການ ແລະ ຮ່ວມລົງທຶນຢ່າງເປັນທາງການກັບບໍລິສັດ.

ແຫຼ່ງຂໍ້ມູນ: 4Ps, ຕົວແທນອົງການຈັດຊື້-ຈັດຈ້າງລັດຖະບານທ້ອງຖິ່ນຂອງປະເທດອັງກິດ

ຫຼັງຈາກນີ້ອາດໄດ້ມີການພັນລະນາຄວາມແຕກຕ່າງຂອງ "ຍຸດທະສາດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ" ກັບຮູບແບບການສົ່ງເສີມຊາວກະສິກອນ "ຮູບແບບດັ້ງເດີມ" ທີ່ໄດ້ອະທິບາຍມາກ່ອນໜ້ານີ້. ວຽກກ່ຽວກັບການຮ່ວມມືພາກລັດ ແລະ ເອກະຊົນທີ່ກະຊວງແຜນການ ແລະ ການລົງທຶນກຳລັງດຳເນີນຢູ່ແມ່ນມີຄວາມໝາຍສຳຄັນ ລາຍລະອຽດໄດ້ອະທິບາຍໃນພາກທີ 3 ລຸ່ມນີ້, ໂດຍອີງໃສ່ຄຳນິຍາມແບບດັ້ງເດີມເຫັນໄດ້ຢ່າງຈະແຈ້ງວ່າພາກເອກະຊົນຈະເປັນຜູ້ສະໜອງການບໍລິການສົ່ງເສີມແກ່ຊາວກະສິກອນ ຊຶ່ງວຽກດັ່ງກ່າວຜ່ານມາແມ່ນໄດ້ເຮັດໂດຍພາກລັດ.

ສະນັ້ນ, ຄຸນລັກສະນະສຳຄັນຂອງຄຳນິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນມີຄືດັ່ງຕໍ່ໄປນີ້:

ອັນທີ່ໜຶ່ງ; ການຮ່ວມມືລັດ ແລະ ເອກະຊົນ ແມ່ນຄຳສັບກວມລວມທີ່ອະທິບາຍເຖິງການເຮັດວຽກຮ່ວມກັນລະຫວ່າງພາກລັດ ແລະ ເອກະຊົນ ເຊິ່ງນັບແຕ່ຮູບແບບການຮ່ວມມືແບບເບົາບາງ, ແບບບໍ່ເປັນທາງການ ແລະ ເປັນຄູ່ຮ່ວມຍຸດທະສາດ ຈົນເຖິງການອອກແບບດ້ານການເງິນ ແລະ ດຳເນີນງານດ້ວຍຮູບແບບສັນຍາເພື່ອໃຫ້ການບໍລິການ ແລະ ຮ່ວມລົງທຶນຢ່າງເປັນທາງການກັບບໍລິສັດ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຮູບແບບຂອງສັນຍາທີ່ເປັນທາງການລະຫວ່າງພາກລັດ ແລະ ເອກະຊົນແນໃສ່ນຳໃຊ້ ແລະ ດຳເນີນງານຮ່ວມກັນ.

ອັນທີ່ສອງ; ການຮ່ວມມືໄດ້ຖືກອອກແບບມາເພື່ອບັນລຸເປົ້າໝາຍ ຫຼື ຈຸດປະສົງໂຄງການທີ່ໃຫ້ຜົນປະໂຫຍດແກ່ສາທາລະນະຊົນ. ໃນສະຖານະພາບດ້ານກະສິກຳໃນ ລາວ ສິ່ງເຫຼົ່ານີ້ສາມາດເພີ່ມຄຸນນະພາບ ຫຼື ຜົນຜະລິດຂອງພືດໃດໜຶ່ງ ຫຼື ເປັນການກຳນົດຈຸດປະສົງເພື່ອການພັດທະນາກະສິກຳ. ສິ່ງທີສຳຄັນໃນນີ້ແມ່ນໄດ້ມີການກຳນົດເປົ້າໝາຍຢ່າງຈະແຈ້ງ ແລະ ໃນບາງກໍລະນີກໍ່ໄດ້ມີການຕິດຕາມກວດກາການດຳເນີນງານຢ່າງໃກ້ຊິດ.

ອັນທີ່ສາມ; ຫຼາຍໆຄຳນິຍາມຂອງການຮ່ວມມືລັດ ແລະ ເອກະຊົນແມ່ນເນັ້ນໃສ່ກົນໄກການເອື້ອອຳນວຍໃຫ້ແກ່ການສະໜອງບໍລິການຂອງພາກເອກະຊົນ ຫຼື ຊັບສິນຂອງລັດ ເຊິ່ງໂດຍປົກກະຕິແລ້ວໄລຍະຜ່ານມາແມ່ນພາກລັດເປັນຜູ້ໃຫ້ການສະໜອງ. ດັ່ງນັ້ນເນື້ອແທ້ຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຂຶ້ນກັບຄວາມແຕກຕ່າງຂອງລະດັບການສົ່ງເສີມຂອງລັດທີໄດ້ສະໜອງການບໍລິການ. ການໃຫ້ບໍລິ ການ

ດ້ານກະສິກຳຢູ່ ສປປ ລາວ ທີ່ໄດ້ສະໜອງໂດຍພາກລັດລວມມີ: ການສົ່ງເສີມ, ສະໜອງປັດໃຈຂາເຂົ້າ (ແນວພັນປັບປຸງ, ລູກປາ ແລະ ອື່ນໆ) , ສິນເຊື່ອກະສິກຳ.

ໃນຂະແໜງການກະສິກຳ ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນແນວຄວາມຄິດທີ່ຂ້ອນຂ້າງໃໝ່ ແລະ ເປັນຫົວຂໍ້ທີ່ມີຄວາມສົນໃຈຫຼາຍເພາະວ່າ[2]:

- ມີຂໍ້ຈຳກັດດ້ານງົບປະມານຂອງລັດເພີ່ມຂຶ້ນ
- ການແຂ່ງຂັນພັດທະນາກະສິກຳທີ່ມີມູນຄ່າສູງ
- ເຂດຊົນນະບົດ, ຄວາມໜາແໜ້ນປະຊາກອນຕ່ຳ, ເຂດຫ່າງໄກສອກຫຼີກ ແລະ ການຜະລິດກະສິກຳແມ່ນມີຄວາມສ່ຽງສູງຍ້ອນວ່າຂຶ້ນກັບສະພາບຂອງດິນຟ້າອາກາດ.
- ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນເປັນທາງເລືອກໃຫ້ແກ່ການຜະລິດກະສິກຳທີທັນສະໃໝ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດຊົນນະບົດ.

ໃນແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳແຕ່ປີ 2011-2020 (ຂອບວຽກ, ວິໄສທັດ ແລະ ເປົ້າໝາຍ) ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນໄດ້ກຳນົດດັ່ງຕໍ່ໄປນີ້:

"ບໍລິສັດເອກະຊົນເວລາໃດກໍ່ມີຄວາມສົນໃຈຄືກັນກັບພາກລັດໃນການປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ, ໜ່ວຍງານຂອງລັດອາດຮ່ວມມືກັບບໍລິສັດໃນການດຳເນີນກິດຈະກຳການພັດທະນາໃດໜຶ່ງ. ການຮ່ວມມືລັດ ແລະ ເອກະຊົນ ໝາຍເຖິງຮູບແບບໂຄງການທີ່ຮ່ວມມືກັນລະຫວ່າງລັດຖະບານ ແລະ ວິສາຫະກິດເອກະຊົນ ເພື່ອເຮັດໃຫ້ກິດຈະກຳການຍົກລະດັບມີຜົນສຳເລັດ, ບັນທັດຖານທີ່ສຳຄັນສຳລັບໜ່ວຍງານລັດໃນໂຄງການການຮ່ວມມືລັດ ແລະ ເອກະຊົນນັ້ນ ແມ່ນຜົນປະໂຫຍດທີ່ເກີດຂຶ້ນຢ່າງພຽງພໍ ແກ່ຜູ້ມີບົດບາດຕ່າງໆໃນຕ່ອງໂສ້ມູນຄ່າ ຫຼື ຕໍ່ກັບສາທາລະນະຊົນ ຫຼື ບໍລິສັດເອກະຊົນຈະບໍ່ເອົາປຽບ ແລະ ສ້າງຜົນກຳໄລແຕ່ຝ່າຍດຽວ ໃນຮູບແບບການຮ່ວມມືນີ້" (ADS, ໜ້າ VI).

ໃນແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳຍັງໄດ້ໃຫ້ຮູ້ວ່າການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຈະກາຍເປັນຜູ້ສະໜອງການໃຫ້ບໍລິການທີ່ກ້າວໜ້າໃຫ້ແກ່ຊາວກະສິກອນ ແລະ ກຸ່ມຊາວກະສິກອນ, ຕົວຢ່າງໃນແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳຍັງໄດ້ຍົກໃຫ້ເຫັນວ່າການກໍ່ສ້າງພື້ນຖານໂຄງລ່າງຊົນລະປະທານ ຫຼື ການສ້ອມແປງແມ່ນອາດໄດ້ລົງທຶນໂດຍພາກເອກະຊົນ.

ໃນແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳຍັງຊີ້ໃຫ້ເຫັນວ່າຈະໄດ້ມີການສ້າງຕັ້ງສະມາຄົມຜູ້ຜະລິດສິນຄ້າຂຶ້ນ ໂດຍຈະນຳໃຊ້ຮູບແບບຂອງການຮ່ວມມືລັດ ແລະ ເອກະຊົນ ເພື່ອເອື້ອອຳນວຍໃຫ້ແກ່ການພັດທະນາຍຸດທະສາດຂອງຕ່ອງໂສ້ມູນຄ່າທີ່ກ່ຽວຂ້ອງ. ຕໍ່ກັບບັນຫານີ້ໃນແຜນແມ່ບົດຂອງຂະແໜງການກະສິກຳ ກະຊວງມີຄວາມຄືບໜ້າໃນການຫັນພາລະບົດບາດຈາກການເປັນຜູ້ໃຫ້ການບໍລິການໂດຍກົງແກ່ຊາວກະສິກອນມາເປັນຜູ້ເອື້ອອຳນວຍ.

[2] *ມາຣູດ ອາມາດສ໌, ການປັບປຸງການຮ່ວມມືລັດ ແລະ ເອກະຊົນ ໃນການພັດທະນາກະສິກຳ , ກອງປະຊຸມຂອງກຸ່ມຜູ້ຊ່ຽວຊານໃນການຄ້ຳປະກັນດ້ານສະບຽງອາຫານ ໃນປະເທດສະມາຊິກ ໃນພາຍຫຼັງວິກິດການໂລກ, ບໍ່ມີວັນທີ.*

ດັ່ງແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳແມ່ນເນັ້ນໃສ່ສອງດ້ານຄື: ກ) ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແບບດັ້ງເດີມແມ່ນຈະຕ້ອງຕິດພັນກັບການສະໜອງການໃຫ້ບໍລິການ ແລະ ຂ) ຍຸດທະສາດຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຈະຕ້ອງສະໜັບສະໜູນໃຫ້ແກ່ການພັດທະນາຕ່ອງໂສ້ມູນຄ່າທັງໝົດ. ສະນັ້ນ, ມີຄວາມຈະແຈ້ງແລ້ວວ່າຢູ່ໃນແຜນແມ່ບົດການພັດທະນາຂອງຂະແໜງການກະສິກຳແມ່ນມີຄວາມສອດຄ່ອງກັບວຽກງານຂອງກະຊວງແຜນການ ແລະ ການລົງທຶນທີ່ກຳລັງໄດ້ເຮັດກ່ຽວກັບການຮ່ວມມືລັດ ແລະ ເອກະຊົນ

## 2.1 ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ – ປະສົບການຂອງສາກົນ.

ອົງການອາຫານ ແລະ ການກະເສດໄດ້ເຮັດການສຶກສາ ການຮ່ວມມືລັດ ແລະ ເອກະຊົນໃນຂະແໜງກະສິກຳ[3] ຂອງປະເທດອິນໂດເນເຊຍ ກໍລະນີສຶກສາຕ່າງໆແມ່ນເນັ້ນໃສ່ຄົ້ນຄວ້າເບິ່ງບັນດາເຄື່ອງມືທີ່ໄດ້ຖືກນຳໃຊ້ໂດຍລັດຖະບານອິນໂດເນເຊຍ, ຄຸນລັກສະນະຂອງຂໍ້ຕົກລົງລະຫວ່າງລັດຖະບານ ແລະ ຜູ້ທີ່ມີສ່ວນຮ່ວມຂອງພາກເອກະຊົນ ແລະ ຜົນໄດ້ຮັບຂອງການຮ່ວມມືເຫຼົ່ານີ້. ບົດຮຽນທີ່ຖອດຖອນໄດ້ຈາກບັນດາຕົວຢ່າງການສຶກສາກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ. ຜົນການຄົ້ນຄວ້າທີ່ສຳຄັນໄດ້ອະທິບາຍດັ່ງຕໍ່ໄປນີ້:

- ໂຄງການໄດ້ຮັບທຶນໂດຍກົງ ຫຼື ໂດຍທາງອ້ອມຈາກລັດຖະບານ ໂດຍຜ່ານ ທະນາຄານຂອງລັດ, ວິສາຫະກິດ ຫຼື ກົມວິຊາການຕ່າງໆຂອງລັດ.
- ໄດ້ມີການກຳນົດພາລະບົດບາດ ແລະ ໜ້າທີ່ຂອງທຸກພາກສ່ວນຢ່າງຈະແຈ້ງໄວ້ໃນຂໍ້ຕົກລົງທີ່ໄດ້ເຊັ່ນໂດຍທຸກພາກສ່ວນ.
- ການສະໜັບສະໜູນຂອງພາກລັດລວມມີ ການພັດທະນາດ້ານນະໂຍບາຍທີ່ຊັດເຈນເພື່ອຊ່ວຍການຈັດຕັ້ງປະຕິບັດແຜນງານເຫົ່ານີ້.
- ລັດຖະບານໄດ້ມີການຕິດຕາມກວດກາ ແລະ ຄວບຄຸມວິທີການການຮ່ວມມື ແລະ ສົ່ງເສີມການພັດທະນາອົງການຈັດຕັ້ງໂດຍໜ່ວຍງານສົ່ງເສີມ.
- ພາລະບົດບາດຕົ້ນຕໍຂອງບໍລິສັດທີ່ໄດ້ເຮັດແມ່ນຮັບປະກັນດ້ານຕະຫຼາດ ແລະ ການເອື້ອອຳນວຍໃນການເຂົ້າເຖິງແຫຼ່ງທຶນ.

ຍຸດທະສາດການຮ່ວມມືລັດ ແລະ ເອກະຊົນ ທີ່ກ່ຽວພັນກັບຂະແໜງການຄ້າໄດ້ຮັບການພັດທະນາໃນປະເທດຫວຽດນາມ:

> ມີສິບສອງບໍລິສັດໃນໂລກໄດ້ຮ່ວມມືກັບລັດຖະບານຫວຽດນາມຈັດຕັ້ງຄະນະປະສານງານກ່ຽວກັບການຮ່ວມມືລັດ ແລະ ເອກະຊົນ ແນໃສ່ປັບປຸງການຜະລິດກະສິກຳແບບຍືນຍົງໃນປະເທດໃຫ້ມີຄວາມກ້າວໜ້າ. ໄດ້ມີການພັດທະນາວິໄສທັດໃໝ່ສຳລັບການລິເລີ່ມຂອງຂະແໜງການກະສິກຳໂດຍຜ່ານກອງປະຊຸມປຶກສາຫາລື, ຄະນະປະສານງານດັ່ງກ່າວຈະນຳໃຊ້ວິທີການແບບໃໝ່ເພື່ອປັບປຸງການຄໍ້າປະກັນດ້ານສະບຽງອາຫານ ແລະ ກະສິກຳແບບຍືນຍົງໃນຂອບເຂດທົ່ວປະເທດ. ການເຮັດວຽກປະເພດນີ້ແມ່ນເປັນຄັ້ງທຳອິດຢູ່ປະເທດຫວຽດ ນາມ, ຄະນະປະສານງານຈະເຮັດວຽກໃນການ

[3] *ອົງການອາຫານ ແລະ ການກະເສດ. 2013. ທຸລະກິດກະສິກຳ ການຮ່ວມມືລັດ ແລະ ເອກະຊົນ – ບົດລາຍງານຂອງປະເທດອິນໂດເນເຊຍ.*

ປະສານງານ ແລະ ຂົນຂວາຍໃຫ້ພາກລັດ ແລະ ເອກະຊົນເຂົ້າມາລົງທຶນໃສ່ຂະແໜງກະສິກຳ ເພື່ອເພີ່ມຄຸນນະພາບຂອງຜົນຜະລິດໃຫ້ສູງຂຶ້ນ ແລະ ສ້າງຜົນປະໂຫຍດໃຫ້ແກ່ຊາວກະສິກອນ. ຄະນະປະສານງານການຮ່ວມມືລັດ ແລະ ເອກະຊົນຈະດຳເນີນງານກ່ຽວກັບການກຳນົດຍຸດທະສາດ, ການແລກປ່ຽນບົດຮຽນທີ່ດີ ແລະ ການແກ້ໄຂບັນຫາດ້ານນະໂຍບາຍ ແລະ ເຮັດວຽກໃນການຜັນຂະຫຍາຍການລິເລີ່ມທີ່ມີປະສິດທິຜົນໂດຍການສົມທົບຄວາມອາດສາມາດຂອງພາກລັດ ແລະ ເອກະຊົນ. ກຸ່ມສະໜັບສະໜູນສາກົນ MARD, 17/4/2012.

## 2.2 ຄຳນິຍາມຂອງອົງການ GIZ ກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ

ເມື່ອພິຈາລະນາກ່ຽວກັບຮູບແບບການຮ່ວມມືລັດ ແລະ ເອກະຊົນໃນໂຄງການຮ່ວມມືດ້ານວິຊາການຂອງອົງການ GIZ ແມ່ນຮຽກຮ້ອງໃຫ້ມີການພິຈາລະນາບັນດາຫຼັກການສຳຄັນທີ່ຊ່ວຍໃນການກຳນົດຂອບການຮ່ວມມືລັດ ແລະ ເອກະຊົນ[4]. ຫຼັກການເຫຼົ່ານີ້ມີດັ່ງຕໍ່ໄປນີ້:

**ເສີມຕື່ມໃຫ້ແກ່ກັນ:** ການປະກອບສ່ວນຂອງລັດ ແລະ ເອກະຊົນຈະຕ້ອງເສີມຕື່ມໃຫ້ກັນ ແລະ ກັນໃນຮູບແບບທັງສອງຝ່າຍບັນລຸຈຸດປະສົງຂອງເຂົາເຈົ້າ ດ້ວຍຕົ້ນທຶນຕໍ່າກວ່າ, ມີປະສິດທິຜົນຫຼາຍກວ່າ ແລະ ວ່ອງໄວກວ່າ ອັນເນື່ອງມາຈາກການຮ່ວມມືຂອງເຂົາເຈົ້າ.

**ເກື້ອກູນ:** ການຮ່ວມມືຄວນຈະເຮັດໃຫ້ກິດຈະກຳດັ່ງກ່າວໄດ້ຮັບການປະຕິບັດແບບບໍ່ແມ່ນການເຮັດທຸລະກິດປົກກະຕິທົ່ວໄປໂດຍພາກເອກະຊົນທີ່ປັດສະຈາກການສະໜັບສະໜູນຂອງພາກລັດ ແລະ ການປະເມີນແມ່ນບໍ່ຈຳເປັນຕ້ອງມີລະບຽບການ. ນີ້ເປັນສິ່ງສຳຄັນ, ມັນຊີ້ໃຫ້ເຫັນວ່າຮູບແບບການຮ່ວມມືລັດ ແລະ ເອກະຊົນ ຄວນມີການເອື້ອອຳນວຍໃຫ້ພາກເອກະຊົນດຳເນີນກິດຈະກຳທີ່ນອກເໜືອຈາກການປະຕິບັດທຸລະກິດປົກກະຕິຂອງເຂົາເຈົ້າ.

**ການແຂ່ງຂັນທີ່ຍຸດຕິທຳ:** ການຮ່ວມມືລັດ ແລະ ເອກະຊົນ ແລະ ມາດຕະການນຳໃຊ້ໃນການຮ່ວມມືລັດ ແລະ ເອກະຊົນທີ່ອາດເກີດຂຶ້ນນັ້ນຕ້ອງເປີດກວ້າງຕໍ່ສາທາລະນະຊົນ ແລະ ສົ່ງຂ່າວໃຫ້ຮອດບັນດາບໍລິສັດເອກະຊົນໃຫ້ຫຼາຍເທົ່າທີ່ຫຼາຍໄດ້. ຂະບວນການຄັດເລືອກຄູ່ຮ່ວມງານພາກເອກະຊົນຈະຕ້ອງມີຄວາມໂປ່ງໃສ ແລະ ການຕັດສິນໃຈຄັດເລືອກຈະຕ້ອງເປັນທີ່ຈະແຈ້ງ.

**ການປະກອບສ່ວນຂອງພາກເອກະຊົນ**: ການຮ່ວມມືລັດ ແລະ ເອກະຊົນ, ບໍລິສັດຈະຕ້ອງປະກອບສ່ວນຢ່າງຫຼວງຫຼາຍດ້ານການເງິນ, ຊັບພະຍາກອນມະນຸດ ແລະ/ຫຼື ດ້ານວັດຖຸ. ຊັບພະຍາກອນທີ່ພາກເອກະຊົນປະກອບເຂົ້າໃນການເຮັດວຽກພັດທະນາອາດເກີດຂຶ້ນໃນຮູບແບບທີ່ແຕກຕ່າງກັນ. ປັດໄຈສຳຄັນໃນການປະກອບສ່ວນຂອງພາກເອກະຊົນແມ່ນກຳໄລຂອງບໍລິສັດທີ່ໄດ້ຮັບແລ້ວ ຍັງສ້າງຜົນປະໂຫຍດໃຫ້ແກ່ສາທາລະນະຊົນ. ຄ່າໃຊ້ຈ່າຍທີ່ແມ່ນການລົງທຶນເບື້ອງຕົ້ນບໍ່ສາມາດຖືວ່າເປັນສ່ວນໜຶ່ງຂອງມາດຕະການໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໄດ້.

---

[4] *ອົງການ GIZ, ຄູ່ມືແນະນຳສຳລັບພັດທະນາການຮ່ວມມືກັບພາກເອກະຊົນ (ການຮ່ວມມືລັດ ແລະ ເອກະຊົນ – PPPs) ພາຍໃຕ້ຂອບຂອງໂຄງການການຮ່ວມມືດ້ານວິຊາການ. 31 ມີນາ 2004*

ໃນບັນດາຫຼັກການເຫຼົ່ານີ້ການເກື້ອກູນແມ່ນເປັນສິ່ງສຳຄັນເນື່ອງຈາກວ່າມັນຊີ້ໃຫ້ເຫັນຄວາມແຕກຕ່າງລະຫວ່າງການດຳເນີນງານຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະ ການດຳເນີນທຸລະກິດ "ປົກກະຕິ" ທີ່ອາດຈະມີການເຂົ້າເຖິງຊັບພະຍາກອນທີ່ລັດຖະບານສະໜອງໃຫ້ ຫຼື ສິ່ງຈູງໃຈຕ່າງໆ.

## 2.3 ສະຫຼຸບ

ມັນມີປະໂຫຍດຫຼາຍໃນການຈຳແນກຄວາມແຕກຕ່າງລະຫວ່າງສອງປະເພດຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ, ທີ່ໄດ້ອະທິບາຍມາຂ້າງນັ້ນຄື: "ການສົ່ງເສີມແບບດັ້ງເດີມ" ແລະ "ຍຸດທະສາດ" ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ໃນການສຶກສາຄັ້ງນີ້ແມ່ນໄດ້ປະເມີນກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແບບດັ້ງເດີມ.

ມີໂຮງຮຽນແຫ່ງໜຶ່ງໂດຍຜ່ານການສຳປະທານທີ່ດິນດ້ວຍຕົນເອງທີ່ມີການສ້າງຕັ້ງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນລາວ. ແຕ່ເລື່ອງນີ້ຍັງບໍ່ມີຄວາມຊັດເຈນເນື່ອງຈາກວ່າການສຳປະທານອາດເປັນພຽງຕົວແທນຂອງເຄື່ອງມືໜຶ່ງທີ່ນຳໃຊ້ໂດຍລັດຖະບານເພື່ອເອື້ອອຳນວຍໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ, ມັນປະກົດວ່າການສຳປະທານແມ່ນເປັນການສະໜອງໃຫ້ໂດຍປົກກະຕິເພື່ອປຸກລະດົມໃຫ້ແກ່ການພັດທະນາກະສິກຳພາຍໃນປະເທດ ແລະ ຍັງບໍ່ໄດ້ລວມຢູ່ໃນຫຼັກການການເກື້ອກູນຂອງອົງການ GIZ. ການນຳພາຍໃນກະຊວງກະສິກຳ ແລະ ປ່າໄມ້ ບໍ່ເຊື່ອວ່າການສຳປະທານແມ່ນອັນດຽວກັນກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ[5].

ຈາກການທົບທວນຂ້າງເທິງ ແລະ ໄດ້ກວດສອບບັນດາກໍລະນີສຶກສາໃນຄັ້ງນີ້ເຫັນວ່າມີ 4 ຄຸນລັກສະນະສຳຄັນທີ່ເກີດຂຶ້ນ ແລະ ຄວນບັນຈຸໃສ່ຄຳນິຍາມຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນ ລາວ, ຄຳນິຍາມເຫຼົ່ານີ້ປະກອບມີຄື:

ອັນທີ່ໜຶ່ງ, ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ສາມາດອອກແບບເພື່ອຊ່ວຍພັດທະນາພາກເອກະຊົນພາຍໃນທີ່ເຮັດວຽກໃນຂະແໜງກະສິກຳ ໂດຍການສ້າງກົນໄກຕ່າງໆແນໃສ່ການສ້າງຕັ້ງຂະແໜງການທຸລະກິດກະສິກຳແຫ່ງຊາດທີ່ເຂັ້ມແຂງ.

ອັນທີສອງ, ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນເປັນຊ່ອງທາງແກ່ການພັດທະນາຕ່ອງໂສ້ມູນຄ່າໃຫ້ມີຄວາມໂດດເດັ່ນຂຶ້ນໂດຍສະເພາະແມ່ນການປູກພືດ ໂດຍຜ່ານການປັບປຸງໂຄງສ້າງຂອງຮູບແບບທຸລະກິດໃຫ້ມີປະສິດທິຜົນຫຼາຍຂຶ້ນ ຫຼື ພັດທະນາໃຫ້ແກ່ຕ່ອງໂສ້ມູນຄ່າຂອງສິນຄ້າໃໝ່ທັງຫມົດ. ໄດ້ເຮັດການປະເມີນທຸກກໍລະນີຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນການສຶກສາຄັ້ງ - ແລະ ການສຶກສາຂອງອົງການອາຫານ ແລະ ການກະເສດໃນປະເທດອິນໂດເນເຊຍ ຫຼື ລາຍງານຢູ່ໃນປະເທດຫວຽດນາມ - ທີ່ມີການຍົກລະດັບຕ່ອງໂສ້ມູນຄ່າດ້ວຍການກຳນົດຈຸດປະສົງທີ່ຈະແຈ້ງ. ສິ່ງທີ່ກ່າວມານີ້ແມ່ນມີຄວາມເໝາະສົມດີກັບຍຸດທະສາດຂອງແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ.

ອັນທີສາມ, ບັນດາເຄື່ອງມືທີ່ພາກລັດໄດ້ນຳໃຊ້ເຂົ້າໃນການຮ່ວມມືແມ່ນສາມາດຫຼຸດຜ່ອນຄວາມສ່ຽງທີ່ພາກເອ ກະຊົນໄດ້ປະເຊີນ, ໃນການຈັດຕັ້ງປະຕິບັດຮູບແບບທຸລະກິດໃໝ່ເພື່ອພັດທະນາຕ່ອງໂສ້ມູນຄ່າ. ເຄື່ອງມືດັ່ງກ່າວອາດຈະນຳໃຊ້ໄດ້ພຽງຊົ່ວຄາວ ແຕ່ມັນເປັນຕົວເລັ່ງສຳລັບການເຮັດວຽກດ້ວຍວິທີການໃໝ່ນີ້.

---

[5] *ສົນທະນາກັບ ທ່ານ ດຣ. ພວງປາຣິສັກ ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ ແລະ ປ່າໄມ້, 7/1/14*

ທ້າຍສຸດ, ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນນັ້ນແມ່ນມີຄວາມແຕກຕ່າງຈາກທຸລະກິດ "ທຳມະດາ" ແລະ ສິ່ງຈູງໃຈທີ່ພາກລັດໄດ້ສະໜອງໃຫ້ແກ່ທຸລະກິດ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຮຽກຮ້ອງໃຫ້ມີການສ້າງສາຍສຳພັນດ້ວຍຮູບແບບສັນຍາລະຫວ່າງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ສາມາດບັນລຸເປົ້າໝາຍຂອງໂຄງການ ທີ່ເປັນຜົນປະໂຫຍດໃຫ້ແກ່ສາທາລະນະຊົນໄດ້ຢ່າງກວ້າງຂວາງ.

ຂໍ້ສັງເກດໜຶ່ງທີ່ຄວນຊາບຄືບໍ່ແມ່ນທຸກຕົວຢ່າງຂອງການສຶກສາຈະມີຄືບມາດຕະຖານເຫຼົ່ານີ້.

## 3. ໂຄງສ້າງດ້ານນິຕິກຳ

ອີງຕາມກະຊວງແຜນການ ແລະ ການລົງທຶນ (MPI) ແມ່ນຍັງບໍ່ທັນມີໂຄງສ້າງດ້ານນິຕິກຳ ໂດຍສະເພາະແມ່ນໂຄງສ້າງສະເພາະດ້ານໃນການສົ່ງເສີມການຮ່ວມມືລັດ ແລະ ເອກະຊົນ (PPP). ເຖິງຢ່າງໃດກໍ່ຕາມ, ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບທີ່ມີຢູ່ໃນປະຈຸບັນ ແມ່ນມີພຽງພໍສຳລັບການສົ່ງເສີມດ້ານການພັດທະນາການຄ້າ ແລະ ທຸລະກິດກະສິກຳ ທີ່ສາມາດເອື້ອອຳນວຍໃຫ້ແກ່ການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ.

ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຂອງຕ່າງປະເທດ ສະບັບປີ 2005, ເຊິ່ງເປັນນະໂຍບາຍທີ່ສົ່ງເສີມການລົງທຶນຂອງຊາວຕ່າງປະເທດໃນລາວແມ່ນມີເນື້ອໃນເນັ້ນໃສ່ "ສົ່ງເສີມກິດຈະກຳ"" ແລະ "ສົ່ງເສີມເຂດຈຸດສຸມ", (ສະພາແຫ່ງຊາດ, ສປປ ລາວ, 2004). ກິດຈະກຳສົ່ງເສີມດ້ານກະສິກຳ ແລະ ການຜະລິດເພື່ອເປັນສິນຄ້າສົ່ງອອກແມ່ນໄດ້ວາງອອກເພື່ອເປັນນະໂຍບາຍໃນການສົ່ງເສີມກິດຈະກຳທີ່ມີສິດທິພິເສດ. ເຂດຈຸດສຸມສ່ວນຫຼວງຫຼາຍເປັນເຂດເນີນສູງ ເຊິ່ງໄດ້ຮັບການກຳນົດໂດຍອີງໃສ່ລະດັບຂອງພື້ນຖານໂລງລ່າງໃນເຂດດັ່ງກ່າວ (ສະພາແຫ່ງຊາດ, ສປປ ລາວ, 2004).

ອີງໃສ່ກິດຈະກຳທີ່ໄດ້ສົ່ງເສີມ ແລະ ເຂດຈຸດສຸມ, ບັນດາໂຄງການຕ່າງໆອາດຈະໄດ້ຮັບສິດທິພິເສດດັ່ງນີ້:

- ການຍົກເວັ້ນພາສີໃນຊ່ວງປີທີ່ໄດ້ກຳນົດໄວ້ ແລະ ຕາມດ້ວຍການເກັບພາສີຕ່ຳ.
- ເສຍພາສີໃນອັດຕາຕ່ຳສຸດຕາມຄວາມຈຳເປັນ.
- ຍົກເວັ້ນພາສີລາຍໄດ້ເພື່ອນຳໃຊ້ເປັນການລົງທຶນເພີ່ມ;
- ຍົກເວັ້ນພາສີນຳເຂົ້າ ແລະ ອາກອນສຳລັບອຸປະກອນຮັບໃຊ້, ເຄື່ອງອາໄລ່, ພາຫະນະທີ່ນຳໃຊ້ສຳລັບການຜະລິດ ແລະ ວັດຖຸດິບ;
- ຍົກເວັ້ນພາສີສົ່ງອອກສຳລັບຜະລິດຕະພັນສົ່ງອອກ.

ກິດຈະກຳການລົງທຶນສຳລັບຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ມີ 3 ຮູບແບບດັ່ງຕໍ່ໄປນີ້:

| | |
|---|---|
| ທຸລະກິດທົ່ວໄປ | ການລົງທຶນໃນດ້ານທຸລະກິດທົ່ວໄປທີ່ບໍ່ໄດ້ອີງໃສ່ການໃຫ້ສຳປະທານຈາກລັດຖະບານ. ການລົງທຶນດ້ານກະສິກຳເຊັ່ນວ່າ: ການຜະລິດຕາມຮູບແບບສັນຍາຜູກພັນແມ່ນນອນຢູ່ໃນຮູບແບບນີ້. |
| ທຸລະກິດສຳ | ກິດຈະກຳການລົງທຶນທີ່ອະນຸຍາດໂດຍລັດຖະບານໃນການນຳໃຊ້ຄວາມເປັນເຈົ້າຂອງ ແລະ ສິດທິອື່ນໆຂອງລັດຖະບານ, ອະນຸຍາດໃນຊຸມຊົນພ້ອມທັງລະບຽບ |

| | |
|---|---|
| ປະທານ | ການ ສຳລັບການພັດທະນາ ແລະ ການນຳເນີນທຸລະກິດ. |
| ເຂດເສດຖະກິດ ພິເສດ/ສະເພາະ | ບັນດາການລົງທຶນສຳລັບການກໍ່ສ້າງພື້ນຖານໂຄງລ່າງໃຫ້ສຳເລັດ ແລະ ການພັດທະນາເມືອງໃໝ່. |

ການສຳປະທານທີ່ດິນຜ່ານຮູບແບບນີ້ແມ່ນໄດ້ເກີດມີການໂຕ້ແຍ້ງ ແລະ ຢູ່ໃນຊ່ວງໂຈະຊົ່ວຄາວແຕ່ມີການສະໜອງດ້ານອຸປະກອນ ຊ່ວຍເຫຼືອຜ່ານຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP). ໜຶ່ງໃນກໍລະນີທີ່ກ່າວຕໍ່ໄປນີ້ແມ່ນການອະນຸຍາດສຳປະທານທີ່ດິນຂະໜາດນ້ອຍ ເຊິ່ງບໍ່ປະກົດເຫັນວ່າຈະມີບັນຫາໃນການຮ່ວມມື ທັງເປັນການລົດຄວາມສ່ຽງໄລຍະຍາວຂອງພາກເອກະຊົນ.

ການຜະລິດທີ່ມີສັນຍາຜູກພັນເປັນນະໂຍບາຍຂອງລັດຖະບານຕາມຮູບແບບ (3+2 ແລະ 4+1) ໄດ້ກາຍເປັນນະໂຍບາຍ ສຳລັບທຸລະກິດກະສິກຳທີ່ສາມາດໝູນໃຊ້ເຂົ້າເປັນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນລາວ ເຊິ່ງໄດ້ຈັດຕັ້ງປະຕິບັດໂດຍໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ (ຮູບແບບ ຂອງ EMRIP) ແລະ ເປັນຮູບແບບດຽວກັນກັບ 3+2 ຮູບແບບດັ່ງກ່າວໄດ້ອະທິບາຍໃນຂ້າງລຸ່ມນີ້.

ດຳລັດນາຍົກລັດຖະມົນຕີວ່າດ້ວຍສະມະຄົມ [6] ໄດ້ເປັນແຜນງານອັນໜຶ່ງຜ່ານຍຸດທະສາດການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ ທີ່ພັດທະນາດ້ານຜະລິດຕະພັນອັນໃດອັນໃດໜຶ່ງຄວນໄດ້ສ້າງຂຶ້ນເປັນໂຄງສ້າງແຜນງານຢ່າງຄັກແນ່. ສະພາການຄ້າ ແລະ ອຸດສະຫະກຳ ແຫ່ງຊາດລາວ (ສຄອ) ແລະ ບັນດາສາຂາໃນແຂວງຕ່າງໆໄດ້ກຳນົດໂຄງສ້າງສຳລັບການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ.

ແຜນແມ່ບົດການພັດທະນາຂະແໜງການກະສິກຳ (ADS) ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາເອກະສານທີ່ກ່ຽວຂ້ອງທີ່ເປັນແຜນງານນະໂຍບາຍສຳລັບການພັດທະນາການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງກະສິກຳດັ່ງທີ່ໄດ້ກ່າວມາຂ້າງເທິງ.

ຄະນະກຳມະການແຫ່ງຊາດສຳລັບການຄ້ຳປະກັນດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ ເຊິ່ງເປັນປະທານໂດຍ ທ່ານ ຮອງນາຍົກ, ໄດ້ຈັດປະຊຸມເປັນລາຍເດືອນ ແລະ ເອື້ອອຳນວຍວຽກງານຮອບດ້ານເພື່ອພັດທະນາວຽກງານກະສິກຳ. ຄະນະກຳມະການນີ້ມີບົດບາດສຳຄັນໃນການເອື້ອອຳນວຍ ແລະ ສ້າງແຜນງານດ້ານນະໂຍບາຍ ເຊິ່ງສາມາດຊ່ວຍໃຫ້ການພັດທະນາ ແລະ ນຳໃຊ້ຮູບແບບ ການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP). ພ້ອມດຽວກັນນັ້ນຄະນະກຳມະການທີ່ຄ້າຍຄືດຽວກັນນີ້ກໍ່ໄດ້ສ້າງຕັ້ງຂຶ້ນໃນລະດັບແຂວງ ແລະ ສາມາດສ້າງກົນໄກສຳລັບເພື່ອອອກແບບ ແລະ ພັດທະນາຮູບແບບການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP).

### 3.1 ການພັດທະນາດ້ານນະໂຍບາຍໃນຕໍ່ໜ້າ

ກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ຮັບການສະໜັບສະໜູນດ້ານການເງິນຈາກທະນາຄານພັດທະນາອາຊີມີແຜນທີ່ຈະສ້າງໂຄງສ້າງດ້ານລະບຽບການໂດຍສະເພາະແມ່ນການອອກແບບເພື່ອນຳໃຊ້ຮູບແບບການສົ່ງເສີມຊາວ

*[6] ດຳລັດນາຍົກ ເລກທີ: 115/ນຍ ກ່ຽວກັບການສ້າງຕັ້ງສະມາຄົມບໍ່ຫວັງກຳໄລ (NPAs), 2009.*

ກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນ ລາວ. ຈະສ້າງລະບຽບການນີ້ໃຫ້ເປັນດໍາລັດຂອງນາຍົກລັດຖະມົນຕີ. ດໍາລັດນີ້ຄາດວ່າຈະໃຫ້ສໍາເລັດພາຍໃນທ້າຍປີ 2014. ກະຊວງແຜນການ ແລະ ການລົງທຶນວາງແຜນໃນການທົດລອງຮູບແບບການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ໃນສອງຂະແໜງການ ຄື: ຂະແໜງການສຶກສາ ແລະ ສາທາລະນະສຸກ. ໃນໄລຍະນີ້ການປຶກສາຫາລືແມ່ນກໍາລັງດໍາເນີນໄປຕາມແຜນການສ້າງດໍາລັດໃໝ່ຂອງນາຍົກລັດຖະມົນຕີ. ມັນອາດຍັງມີຂໍ້ຈໍາກັດໃນສອງຂະແໜງການນີ້ ຫຼື ອາດມີຄວາມພ້ອມໃນການສ້າງຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ໃນຂະແໜງການອື່ນໆ. ມັນສາມາດເຫັນໄດ້ຢ່າງຈະແຈ້ງແລ້ວວ່າຈະມີການໝູນໃຊ້ທິດທາງໃໝ່ເນື່ອງຈາກມີເວລາຈໍາກັດ. ໃນໄລຍະຍາວ, ກະຊວງແຜນການ ແລະ ການລົງທຶນຄາດວ່າຈະອອກແບບໂຄງສ້າງດ້ານນິຕິກໍາອື່ນເພື່ອເອື້ອອໍານວຍແກ່ການຈັດຕັ້ງຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນລາວ.

## 4. ກໍລະນີສຶກສາກ່ຽວກັບຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP)

ຫຼາຍຕົວຢ່າງກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນດ້ານກະສິກໍາແມ່ນໄດ້ກໍານົດຜ່ານກອງປະຊຸມສະເໜີເບື້ອງຕົ້ນກັບກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອຸດສະຫະກໍາ ແລະ ການຄ້າ, ບັນດາຄູ່ຮ່ວມພັດທະນາ ແລະ ບັນດາໂຄງການທີ່ເປັນຕົວແທນ. ກອງປະຊຸມແມ່ນໄດ້ຈັດຂຶ້ນໃນໄລຍະເກັບຂໍ້ມູນພາກສະໜາມກ່ຽວກັບຕົວຢ່າງຂອງຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

ມີ 2 ກໍລະນີສຶກສາໄດ້ລົງເກັບຂໍ້ມູນ ຊຶ່ງເປັນໂຄງການຍ່ອຍຂອງໂຄງການສົ່ງເສີມການຜະລິດສິນຄ້າກະສິກໍາ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ເຊິ່ງສະໜັບສະໜູນດ້ານການເງິນໂດຍ ກອງທຶນສາກົນເພື່ອການພັດທະນາກະສິກໍາ (IFAD)/ທະນາຄານພັດທະນາອາຊີ (ADB). ໂຄງການນີ້ເປັນໂຄງການທີ່ໄດ້ຢັ້ງຢາມ ເປັນຮູບແບທີ່ຈະແຈ້ງໃນການສົ່ງເສີມການຜະລິດກະສິກໍາເປັນສິນຄ້າຜ່ານຮູບແບບໂຄງ ການທີ່ໄດ້ອະທິບາຍມາແລ້ວຄື: ການສົ່ງເສີມຊຸມຊົນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPCP). ໄດ້ລົງຢ້ຽມຢາມຕົວຢ່າງຂອງຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນອື່ນໆ (ຕົວຢ່າງ: ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ (EMRIP) ເຊິ່ງແມ່ນພາກລັດເປັນຜູ້ເອື້ອອໍານວຍໃນການຈັດຕັ້ງປະຕິບັດການຮ່ວມມືລະຫວ່າງພາກເອກະຊົນ ແລະ ກຸ່ມຊາວກະສິກອນ. ໄລຍະຕໍ່ໄປ, ການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ ຈະບໍ່ແມ່ນເລື່ອງແປກໃນລາວ ແລະ ດັ່ງທີ່ໄດ້ລາຍງານໂດຍອົງການອາຫານ ແລະ ການກະເສດ (FAO) ໃນກໍລະນີສຶກສາຂອງເຂົາເຈົ້າກ່ຽວກັບຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນປະເທດອິນໂດເນເຊຍ[7].

[7] *ອົງການອາຫານ ແລະ ການກະເສດ. 2013. ທຸລະກິດກະສິກໍາ ການຮ່ວມມືລັດ ແລະ ເອກະຊົນ – ບົດລາຍງານຂອງປະເທດອິນໂດເນເຊຍ. ບັນດາກໍລະນີສຶກສາ – ອາຊີ. ກຸງໂຣມ*

## 4.1 ກໍລະນີສຶກສາ: ໂຮງສີເຂົ້າໃນແຂວງຄຳມ່ວນ

ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ (EMRIP) ເປັນໂຄງການທີ່ມີຜົນສຳເລັດໃນການສ້າງປະຫວັດສາດຂອງການເຊື່ອມໂຍງລະຫວ່າງບັນດາໂຮງສີເຂົ້າ ແລະ ພະແນກກະສິກຳແຂວງ/ອົງການພັດທະນາແຫ່ງປະເທດເນເທະແລນ ຫຼື SNV ໃນແຂວງຄຳມ່ວນ ລວມທັງຊອກຫາຕະຫຼາດໃໝ່ ແລະ ວິທີທາງໃນການປັບປຸງຄຸນນະພາບ ແລະ ສະມັດຕະພາບເຂົ້າໃຫ້ດີຂຶ້ນ. ເນື່ອງຈາກເປັນຜົນສຳເລັດຂອງການສະໜັບສະໜູນຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ, ປະຈຸບັນສະມະຄົມໂຮງສີເຂົ້າລະດັບເມືອງໄດ້ຮັບການຈັດຕັ້ງຂຶ້ນ. ຄຸນລັກສະນະສຳຄັນຂອງການດຳເນີນງານໂຮງສີເຂົ້າ ແລະ ບັນດາກິດຈະກຳທີ່ກ່ຽວຂ້ອງທີ່ສະໜັບສະໜູນໂດຍໂຄງການມີດັ່ງຕໍ່ໄປນີ້:

- ບັນດາໂຮງສີເຂົ້າໄດ້ເຮັດສັນຍາຊື້-ຂາຍເຂົ້າກຸ່ມປູກເຂົ້າ ແລະ ສະໜອງສິ່ງນຳເຂົ້າການຜະລິດ (ປຸ໋ຍ, ແນວພັນ) ແລະ ໃຫ້ຄຳປຶກສາດ້ານເຕັກນິກການຜະລິດໃຫ້ແກ່ກຸ່ມດັ່ງກ່າວ. ໂດຍສະເລ່ຍແລ້ວໂຮງສີໜຶ່ງແມ່ນເຮັດວຽກຮ່ວມກັບຊາວນາປະມານ 1000 ຄົນ.

- ໂຮງສີເຂົ້າໄດ້ສົ່ງເສີມການປູກເຂົ້າພັນດຽວ (ແນວພັນຊະນິດດຽວ) ເພື່ອເພີ່ມອັດຕາການສີເຂົ້າ ແລະ ຍົກສູງສະມັດຖະພາບຜົນຜະລິດໃຫ້ສູງຂຶ້ນ ແລະ ໃຫ້ໄດ້ຕາມມາດຕະຖານຄຸນນະພາບທີ່ກຳນົດໄວ້.

- ໂຮງສີເຂົ້າໄດ້ຮັບການຍົກລະດັບຄວາມອາດສາມາດ ແລະ ຄຸນນະພາບອຸປະກອນການສີເຂົ້າຂອງພວກເຂົາໂດຍໄດ້ຮັບການຊ່ວຍເຫຼືອລ້າຈາກໂຄງການ ແລະ ໂຮງສີທີ່ລົງທຶນດ້ວຍຕົນເອງແມ່ນມີຫຼາຍກວ່າເຄິ່ງໜຶ່ງ. ການປັບປຸງສິ່ງເຫຼົ່ານີ້ໄດ້ເພີ່ມປະລິມານເຂົ້າເປືອກທີ່ຈະເອົາມາສີຢ່າງຫຼວງຫຼາຍ ແລະ ອັດຕາການສີເຂົ້າສູງຂຶ້ນໄດ້ຕາມຄວາມຕ້ອງການ.

- ໂຮງສີເຂົ້າໄດ້ສ້າງຕັ້ງກຸ່ມຜະລິດແນວພັນເຂົ້າທີ່ມີຄຸນນະພາບເຊິ່ງສາມາດສະໜອງໃຫ້ແກ່ບັນດາສະມາຊິກກຸ່ມໄດ້.

ໂຮງສີຍັງສາມາດເຂົ້າເຖິງການສະໜອງດ້ານສິນເຊື່ອຈາກທະນາຄານດ້ວຍອັດຕາດອກເບ້ຍ 14% ຕໍ່ປີໂດຍການຊ່ວຍເຫຼືອຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ/ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ (EMRIP).

ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ (EMRIP) ແລະ ການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ເຮັດວຽກກັບໂຮງສີໃນແຂວງຄຳມ່ວນ ແລະ ແຂວງອື່ນໆແມ່ນໄດ້ນຳໃຊ້ຮູບແບບການສົ່ງເສີມຊາວນາຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ. ປັດໃຈຕົ້ນຕໍທີ່ພາໃຫ້ມີຜົນສຳເລັດໃນການສົ່ງເສີມດ້ວຍຮູບແບບນີ້[8] ແມ່ນມີດັ່ງຕໍ່ໄປນີ້:

ກ) ໂດຍການຮ່ວມມືຢ່າງໃກ້ຊິດກັບໂຮງສີເຂົ້າເຮັດໃຫ້ໂຄງການສາມາດສ້າງຄວາມເຂົ້າໃຈໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການ SNV ເຂົ້າໃຈຢ່າງຈະແຈ້ງກ່ຽວກັບບັນຫາ ແລະ ໂອກາດຕົ້ນຕໍທີ່ໂຮງສີເຂົ້າມີຢູ່.

---

*[8] ຈອນ ຄອນເນວ. 2011 ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ. ການປະເມີນຜົນທ້າຍໂຄງການ*

ຂ) ມີຂະບວນການຄັດເລືອກເພື່ອການກຳນົດໂຮງສີເຂົ້າເພື່ອເຂົ້າຮ່ວມໃນໂຄງການຢ່າງລະມັດລະວັງ ແລະ ເປີດເຜີຍ. ຂະບວນການເຫຼົ່ານີ້ສາມາດເຫັນໄດ້ຈາກການປະເມີນທ້າຍໂຄງການວ່າ "ເປັນຍຸດທະສາດທີ່ດີ ແລະ ເຮັດໃຫ້ປະສົບຜົນສຳເລັດ". ຂະບວນການຄັດເລືອກແມ່ນອີງຕາມເງື່ອນໄຂທີ່ໄດ້ຕັ້ງໄວ້ເພື່ອເປັນບ່ອນອີງໃນການຄັດເລືອກຜູ້ທີ່ສະໝັກເຂົ້າຮ່ວມໂຄງການ. ຂະບວນການດັ່ງກ່າວເຫັນໄດ້ວ່າມີໂຮງສີເຂົ້າສະໝັກຈຳນວນ 78 ໂຮງສີ ແລະ ໃນເບື້ອງຕົ້ນເລືອກໄດ້ 21 ໂຮງສີ ໂດຍເຮັດແບບເປີດເຜີຍໂດຍຜ່ານຄະນະກຳມະການ. ເງື່ອນໄຂຕົ້ນຕໍໃນການຄັດເລືອກໂຮງສີແມ່ນເລືອກເອົາໂຮງສີທີ່ຢາກຮ່ວມມືໃນໄລຍະຍາວ ແລະ ມີວິໄສທັດດ້ານໂອກາດໃນການພັດທະນາຕ່ອງໂສ້ມູນຄ່າຂອງທຸລະກິດ ຫຼາຍກວ່າການເບິ່ງແຕ່ຜົນກຳໄລໄລຍະສັ້ນ.

ຄ) ຊາວກະສິກອນທີ່ເຮັດວຽກຮ່ວມກັບໂຮງສີເຂົ້າໄດ້ມີຜົນຜະລິດເພີ່ມຂຶ້ນແຕ່ 30-50% ແລະ ເພີ່ມປະລິມານເຂົ້າເປືອກໃຫ້ແກ່ໂຮງສີ. ການເພີ່ມຜົນຜະລິດນີ້ແມ່ນບັນລຸໄດ້ໂດຍຜ່ານ:

- ສັນຍາການຜະລິດທີ່ໄດ້ສ້າງຂຶ້ນລະຫວ່າງໂຮງສີເຂົ້າ ແລະ ກຸ່ມຜູ້ຜະລິດ ເຊິ່ງໂຮງສີເຂົ້າສາມາດສະໜອງປັດໃຈນຳເຂົ້າການຜະລິດໃຫ້ແກ່ຊາວກະສິກອນໄດ້ ທັງເປັນການລຶດຄວາມສ່ຽງ ດ້ວຍການມີລາຄາຄ້ຳປະກັນສຳລັບຜົນຜະລິດຂອງເຂົາເຈົ້າໂດຍອີງຕາມລາຄາທ້ອງຕະຫຼາດໃນປະຈຸບັນ. ໂຮງສີເຂົ້າຈ່າຍລາຄາສູງກວ່າຕະຫຼາດທົ່ວໄປໜ້ອຍໜຶ່ງສຳລັບເຂົ້າທີ່ເຂົາເຈົ້າໄດ້ສະໜອງແນວພັນໃຫ້.
- ໂຮງສີເຂົ້າສາມາດສະໜອງແນວພັນເຂົ້າທີ່ມີຄຸນນະພາບຢ່າງພຽງພໍໃຫ້ແກ່ຊາວກະສິກອນໃນລາຄາທີ່ສົມເຫດສົມຜົນ. ໂຮງສີສາມາດສະໜອງແນວພັນໄດ້ໂດຍຜ່ານການຜະລິດໃຫ້ໂດຍກຸ່ມຜະລິດແນວພັນທີ່ຖືກຄັດເລືອກ.
- ການສະໜອງຮູບແບບການຝຶກອົບຮົມທີ່ຫຼາຍຮູບແບບໂດຍໂຄງການ ແລະ ໂຮງສີເຂົ້າ ພ້ອມທັງຊາວນາ. ການທີ່ເຈົ້າຂອງໂຮງສີເຂົ້າສຸມໃສ່ໃນການສະໜອງການສົ່ງເສີມໃຫ້ແກ່ຊາວກະສິກອນແບບນັ້ນກໍ່ເພື່ອຮັບປະກັນປະລິມານການຜະລິດເຂົ້າຈາກຊາວກະສິກອນໃຫ້ໄດ້ພຽງພໍຕາມຄວາມຕ້ອງການ. ບາງກໍລະນີໂຮງສີເຂົ້າຈ້າງນັກສົ່ງເສີມມາເປັນພະນັກງານຂອງຕົນເອງ[9].

ກ) ກຸ່ມຊາວນາໄດ້ກາຍເປັນບູລິມະສິດທຳອິດສຳລັບການສະໜອງປັດໃຈນຳເຂົ້າການຜະລິດຢ່າງພຽງພໍຈາກໂຮງສີເຂົ້າ ແລະ ຊາວກະສິກອນສາມາດຂາຍຍົກຜະລິດຕະພັນຂອງເຂົາເຈົ້າ.

ຂ) ສຳລັບໂຮງສີ, ການເຮັດວຽກກັບກຸ່ມຊາວນາສົ່ງຜົນຕໍ່ການດຳເນີນທຸລະກິດທີ່ສາມາດສະໜອງເຂົ້າເປືອກທີ່ມີຄຸນນະພາບສູງ ແລະ ທັງຮັບປະກັນໄດ້ປະລິມານການສະໜອງ. ສິ່ງເຫຼົ່ານີ້ສາມາດເອື້ອອຳນວຍໃຫ້ແກ່ໂຮງສີສາມາດສຸມໃສ່ຈຳນວນບ້ານໜ້ອຍລົງ ເຊິ່ງສາມາດລຸດຜ່ອນຕົ້ນທຶນການດຳເນີນທຸລະກິດ ແລະ ເພີ່ມການສະໜອງທີ່ສາມາດກະຕວງໄດ້ ແລະ ສາມາດເຂົ້າເຖິງແຫຼ່ງທຶນທີ່ໝັ້ນຄົງ.

ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ (EMRIP) ໄດ້ຊ່ວຍເຫຼືອລ້າດ້ານທຶນຮອນໃຫ້ແກ່ໂຮງສີເພື່ອຍົກສູງຄຸນນະພາບ ແລະ ຄວາມອາດສາມາດຂອງການສີເຂົ້າ ເຊິ່ງສະເລ່ຍການຊ່ວຍເຫຼືອປະມານ 40,000 ຢູໂຣ ຕໍ່ ໂຮງສີ. ໃນນັ້ນ 21 ໂຮງສີໄດ້ຮັບການຊ່ວຍເຫຼືອລ້າ, 13 ໂຮງສີແມ່ນລົງທຶນສົມທົບສະເລ່ຍປະມານ 31,000 ຢູໂຣ. ພ້ອມດຽວກັນນັ້ນ, ມີ 79 ໂຮງສີທີ່ເຂົ້າຮ່ວມໂຄງການໃໝ່ແມ່ນບໍ່ໄດ້ຮັບການສະໜັບສະນູນດ້ານການເງິນແບບນີ້ເລີຍ. ສິ່ງສຳຄັນແມ່ນໃນໄລຍະເລີ່ມຕົ້ນໂຄງການໄດ້ສະໜັບສະໜູນທຶນໃຫ້ແກ່ໂຮງສີເພື່ອເປັນການ

[9] *ibid*

ກະຕຸ້ນໃຫ້ໂຮງສີເຂົ້າເຮັດວຽກຮ່ວມກັບໂຄງການ, ໄລຍະຕໍ່ມາການຈັດຕັ້ງປະຕິບັດຮູບແບບນີ້ແມ່ນບໍ່ຈຳເປັນຕ້ອງໃຫ້ການຊ່ວຍເຫຼືອລ້າທາງດ້ານການເງິນໃຫ້ແກ່ໂຮງສີ.

***ຜົນໄດ້ຮັບຕົ້ນຕໍ:***

- ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ (EMRIP) ໄດ້ສາທິດວິທີການທີ່ມີປະໂຫຍດໃນການຍົກລະດັບຕ່ອງໂສ້ມູນຄ່າທັງໝົດໂດຍຜ່ານການເຮັດວຽກຮ່ວມກັບເຈົ້າຂອງໂຮງສີຫຼາຍກວ່າຊາວນາ. ຮູບແບບນີ້ມີຄວາມສຳຄັນຕໍ່ການພັດທະນາໂຮງສີໃຫ້ເປັນ "ຕົວແບບທຸລະກິດ" ແລະ ພາກເອກະຊົນເຊິ່ງ (ເຈົ້າຂອງໂຮງສີ) ເປັນຜູ້ໄດ້ຮັບຜົນປະໂຫຍດຢ່າງຈະແຈ້ງຈາກການຈັດຕັ້ງປະຕິບັດຮູບແບບດັ່ງກ່າວ. ສະນັ້ນຈິ່ງເຫັນວ່າມັນເປັນຮູບແບບການພັດທະນາຫົວໜ່ວຍທຸລະກິດທີ່ເຂັ້ມແຂງ ຊຶ່ງນຳໃຊ້ຮູບແບບຂອງ ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ ຫຼື (EMRIP).

- ໃນໄລຍະເລີ່ມຕົ້ນຊຶ່ງໄດ້ຮັບການສະໜອງການບໍລິການສົ່ງເສີມໂດຍຫ້ອງການສົ່ງເສີມກະສິກຳເມືອງ, ໂຮງສີເຂົ້າລົງທຶນໃສ່ປັດໃຈນຳເຂົ້າການຜະລິດ ແລະ ເນື່ອງຈາກຈຳນວນສະມາຊິກເພີ່ມຂຶ້ນ ເຂົາເຈົ້າຕ້ອງໄດ້ຮັບຜິດຊອບແນໃສ່ຮັບປະກັນແກ່ການນຳໃຊ້ສິ່ງນຳເຫຼົ່ານີ້ໃຫ້ມີປະສິດທິຜົນເພີ່ມຂຶ້ນ. ໃນປະຈຸບັນໂຮງສີເຂົ້າໄດ້ສົ່ງເສີມດ້ານການເງິນ ແລະ ສະໜັບສະໜູນເຕັກນິກການຜະລິດຢ່າງມີປະສິດທິພາບໃຫ້ແກ່ກຸ່ມປູກເຂົ້າ.

- ໂຮງສີເຂົ້າເຮັດສັນຍາການຜະລິດແນວພັນທີ່ມີຄຸນນະພາບກັບກຸ່ມປູກເຂົ້າ ແລະ ສະໜອງແນວພັນພ້ອມທັງປັດໃຈນຳເຂົ້າດ້ານກາຜະລິດອື່ນໆ (ຝຸ່ນວິທະຍາສາດ, ຄ່ານ້ຳຊົນລະປະທານ) ໃຫ້ແກ່ກຸ່ມດັ່ງກ່າວ.

- ເງື່ອນໄຂການຄັດເລືອກແບບມີການແຂ່ງຂັນ, ເປີດເຜີຍຕໍ່ສາທາລະນະຊົນ, ອີງໃສ່ມາດຖານກຳນົດໄວ້ແມ່ນໄດ້ຖືກນຳໃຊ້ໃນຂະບວນການຄັດເລືອກເອົາພາກສ່ວນເອກະຊົນທີ່ດີທີ່ສຸດເພື່ອເຮັດວຽກກັບໂຄງການ. ຂະບວນການຄັດເລືອກແບບລະມັດລະວັງນີ້ມີສ່ວນເຮັດໃຫ້ບັນດາໂຮງສີເຂົ້າຕ່າງໆທີ່ໄດ້ຮັບການສະໜັບສະໜູນເບື້ອງຕົ້ນຈາກໂຄງການປະສົບຜົນສຳເລັດເປັນຈຳນວນຫຼາຍ ແລະ ຖືກພິຈາລະນາ "ຮັບຮອງ" ໃຫ້ເປັນຮູບແບບສົ່ງເສີມ.

- ທຶນຊ່ວຍເຫຼືອລ້າທີ່ໄດ້ສະໜອງໃຫ້ແກ່ພາກເອກະຊົນເພື່ອປັບປຸງອຸປະກອນການສີເຂົ້າ, ການໃຫ້ທຶນຊ່ວຍເຫຼືອລ້າຂອງພາກລັດເຫຼົ່ານີ້ໄດ້ເຮັດໃຫ້ມີການລົງທຶນຂອງພາກເອກະຊົນເພີ່ມຂຶ້ນ. ໃນເບື້ອງຕົ້ນໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ (EMRIP) ຍັງໄດ້ສະໜອງແນວພັນເຂົ້າຄຸນນະພາບໃຫ້ແກ່ກຸ່ມຊາວນາ "ໃນນາມໂຮງສີເຂົ້າ" ເຊິ່ງເປັນການລຸດຜ່ອນຄວາມສ່ຽງໃຫ້ແກ່ໂຮງສີໃນການຜະລິດຕາມຮູບແບບທີ່ມີສັນຍາຜູກພັນ. ທຶນຊ່ວຍເຫຼືອເບື້ອງຕົ້ນຖືວ່າແມ່ນເປັນເຄື່ອງມືທີ່ດີໃນການ "ຮັບຮອງ" ໃນການພັດທະນາຮູບແບບການສົ່ງເສີມ.

- ນອກຈາກການສະໜັບສະໜູນທາງດ້ານອຸປະກອນໃນເບື້ອງຕົ້ນໃຫ້ແກ່ໂຮງສີແລ້ວ, ຄວາມສ່ຽງການດຳເນີນກິດຈະການຕ່າງໆແມ່ນຈະຕົກເປັນຄວາມຮັບຜິດຊອບຂອງໂຮງສີ ແລະ ກຸ່ມຊາວກະສິກອນ. ໃນໄລຍະເບື້ອງຕົ້ນແມ່ນ ພາກລັດ ແລະ ເອກະຊົນຮ່ວມກັນຮັບຜິດຊອບຄວາມສ່ຽງ, ເນື່ອງຈາກຮູບແບບດັ່ງກ່າວໄດ້ຮັບການຍອມຮັບ ແລະ ໄດ້ນຳໃຊ້ຫຼາຍຂຶ້ນຈາກໂຮງສີອື່ນ, ຄວາມສ່ຽງທັງໝົດແມ່ນຮັບຜິດຊອບໂດຍພາກເອກະຊົນແຕ່ພຽງຜູ້ດຽວໂດຍປາສະຈາກການຊ່ວຍເຫຼືອລ້າທາງດ້ານອຸປະກອນໃດເລີຍ.

- ທາງແຂວງໄດ້ເອື້ອອຳນວຍການປຶກສາຫາລືດ້ານນະໂຍບາຍກັບສະມາຄົມໂຮງສີເຂົ້າ ແລະ ນຳໃຊ້ຜົນໄດ້ຮັບດັ່ງກ່າວເຂົ້າໃນການປັບປຸງຂະບວນການຄ້າເຂົ້າເຊັ່ນ: ການລຸດຜ່ອນພາສີນຳເຂົ້າສຳລັບອຸປະກອນຮັບໃຊ້ການຜະລິດ ແລະ ປັດໃຈນຳເຂົ້າການຜະລິດ ແລະ ຂໍ້ຈຳກັດດ້ານການຄ້າອື່ນໆອີກຈຳນວນໜຶ່ງ.

### 4.2 ກໍລະນີສຶກສາ: ໝາກແໜ່ງຂຽວໃນເມືອງປາກຊ່ອງ.

ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ເຊິ່ງໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ (ADB)/ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ເພື່ອແນະນຳເຕັກນິກການປູກໝາກແໜ່ງຂຽວ ຫຼື ສັບວິທະຍາສາດເອີ້ນວ່າ (*Elettaria cardamomum)* ໃນບັນດາແຂວງພາກໃຕ້ໂດຍລິເລີ່ມໃນໃນເມືອງປາກຊ່ອງ. ຄວາມພະຍາຍາມເບື້ອງຕົ້ນແມ່ນການແນະນຳການປູກພືດໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແຕ່ບໍ່ປະສົບຜົນສຳເລັດ ເຖິງແມ່ນວ່າພືດດັ່ງກ່າວຖືກຍອມຮັບວ່າສາມາດປູກໄດ້ໃນປາກຊ່ອງ. ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືພາກລັດ ແລະ ເອກະຊົນໄດ້ຖືກຈັດຕັ້ງຂຶ້ນເພື່ອສົ່ງເສີມການປູກໝາກແໜ່ງຄືນໃໝ່ ແລະ ມີການພັດທະນາຕ່ອງໂສ້ມູນຄ່າດັ່ງກ່າວໃນໄລຍະຕໍ່ມາ.

ບໍລິສັດ ວິສະຫະກິດ ສປາຍສ໌ ຈຳກັດຜູ້ດຽວ ໄດ້ສ້າງຕັ້ງຂຶ້ນໂດຍນັກລົງທຶນ 3 ຄົນ ໃນປີ 2012 ເຊິ່ງມີທຶນທັງໝົດ 570,000 ໂດລາສະຫະລັດ. ບໍລິສັດດັ່ງກ່າວແມ່ນລົງໄດ້ຈົດທະບຽນເປັນບໍລິສັດລົງທຶນຂອງຕ່າງປະເທດໃນລາວ ແລະ ໄດ້ເຊັນສັນຍາກັບໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ເພື່ອສະໜອງແນວພັນໝາກ ແໜ່ງ 300,000 ເບ້ຍຕໍ່ປີໃຫ້ແກ່ກຸ່ມຜະລິດທີ່ສະໜັບສະໜູນໂດຍໂຄງການ ໃນໄລຍະ 3 ປີໃຫ້ໄດ້ພຽງພໍກັບເນື້ອທີ່ປະມານ 1000 ເຮັກຕາ.

ຕາມສັນຍາດັ່ງກ່າວ ບໍລິສັດ ວິສະຫະກິດ ສປາຍສ໌ ຈຳກັດຜູ້ດຽວ ຈະຂາຍແນວພັນໃນລາຄາ 0.9 ໂດລາສະຫະລັດຕໍ່ເບ້ຍ. ເພື່ອຕອບສະໜອງແນວພັນດັ່ງກ່າວເຂົາເຈົ້າໄດ້ນຳເຂົ້າຈຳນວນ 10,000 ເບ້ຍຈາກປະເທດອິນເດຍ ເພື່ອເອົາມາຂະຫຍາຍແນວພັນ ແລະ ຄາດວ່າຍັງຈະໄດ້ນຳເຂົ້າຕື່ມອີກຈຳນວນ 15,000 ເບ້ຍ. ມູນຄ່ານຳເຂົ້າທັງໝົດຂອງເຂົາເຈົ້າແມ່ນ 7 ໂດລາສະຫະລັດຕໍ່ເບ້ຍ ແລະ ເຂົາເຈົ້າພົບບັນຫາກ່ຽວກັບແນວພັນທີ່ໄດ້ນຳເຂົ້າ ແມ່ນໄດ້ຕາຍໄປຈຳນວນໜຶ່ງ. ບໍລິສັດໄດ້ສ້າງສູນຂະຫຍາຍແນວພັນນ້ອຍແຫ່ງໜຶ່ງໃນເມືອງປາກຊ່ອງ ແລະ ໄດ້ສຳປະທານທີ່ດິນໃນເນື້ອທີ່ຈຳນວນ 80 ເຮັກຕ້າ ເພື່ອນຳໃຊ້ເຂົ້າໃສການຂະຫຍາຍແນວພັນເຂົ້າດັ່ງກ່າ ພ້ອມທັງນຳໃຊ້ເຂົ້າໃນການປູກໝາກແໜ່ງ. ບໍລິສັດຍັງມີແຜນໃນການສ້າງໂຮງງານຂະໜາດນ້ອຍແຫ່ງໜຶ່ງເພື່ອກັ່ນເອົານ້ຳມັນໝາກແໜ່ງຫຼັງຈາກການປູກໄດ້ຮັບຜົນ. ໝາກແໜ່ງຈະໃຊ້ເວລາປະມານ 2.5 ປີ ຊຶ່ງນັບແຕ່ເວລາເລີ່ມປູກຫາການເກັບກ່ຽວຄັ້ງທຳອິດໂດຍກຸ່ມຊາວກະສິກອນ. ບໍລິສັດຕັ້ງລາຄາຕໍ່າສຸດສຳລັບໝາກແໜ່ງແມ່ນ 10 ໂດລາຕໍ່ກິໂລ ພ້ອມທັງຄາດວ່າຜົນຜະລິດສະເລ່ຍຈະໄດ້ 1,000 ກິໂລຕໍ່ເຮັກຕ່າໃນເມື່ອເລີ່ມເກັບກ່ຽວ.

ໂຄງການໄດ້ສະໜັບສະໜູນກຸ່ມຊາວກະສິກອນຢູ່ 8 ບ້ານຂອງເມືອງປາກຊ່ອງ ຊຶ່ງຊາວກະສິກອນຈະໄດ້ຮັບ ເບ້ຍໝາກແໜ່ງຈຳນວນ 1,100 ເບ້ຍຕໍ່ ຄອບຄົວ ເຊິ່ງພຽງພໍສຳລັບປູກໃນເນື້ອທີ່ 1 ເຮັກຕ້າ. ເບ້ຍໝາກແໜ່ງດັ່ງກ່າວໄດ້ຮັບການສະໜອງໃນຮູບແບບສິນເຊື່ອ ໂດຍຊາວກະສິກອນຈະໄດ້ຈ່າຍຄືນຫຼັງຈາກ 3 ປີ. ການຈ່າຍຄືນສຳລັບທຶນກູ້ຢືມດັ່ງກ່າວຈະໄດ້ໝູນໃຊ້ເປັນກອງທຶນໝູນວຽນບ້ານຕໍ່ໄປ. ພ້ອມດຽວກັນນັ້ນ, ນອກຈາກສະໜອງເບ້ຍໃຫ້ແກ່ຊາວກະສິກອນແລ້ວ ທາງບໍລິສັດຍັງໄດ້ສະໜອງການຝຶກອົບຮົບກ່ຽວກັບການປູກໝາກແໜ່ງໃຫ້ແກ່ພະນັກ ງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຈະຍັງຈະໄດ້ແນະນຳວິທີການປູກໝາກແໜ່ງໃຫ້ແກ່ກຸ່ມຊາວກະສິ ກອນນຳອີກ.

ບໍລິສັດ ວິສະຫະກິດ ສປາຍສ໌ ຈຳກັດຜູ້ດຽວ ຍັງໄດ້ວາງແຜນທີ່ຈະຊື້ໝາກແໜ່ງຈາກກຸ່ມຊາວກະສິກອນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໂດຍໂຄງການ ແລະ ສົ່ງອອກ. ຫ້ອງການສຳລັບເຮັດວຽກການຕະຫຼາດແມ່ນໄດ້ສ້າງຂຶ້ນໃນປະເທດສິງກະໂປເພື່ອການສົ່ງອອກຜະລິດຕະພັນດັ່ງກ່າວ.

ຄວາມສ່ຽງຂອງການຜະລິດຮູບແບບນີ້ໄດ້ມີການແບ່ງປັນຄວາມສ່ຽງຮ່ວມກັນລະຫວ່າງບໍລິສັດ (ເຂົາຈະສາມາດເກັບຄືນຄ່າເບ້ຍໝາກແໜ່ງທີ່ນຳເຂົ້າເພື່ອມາຂະຫຍາຍແນວພັນ ຫຼື ບໍ ແລະ ສາມາດຕອບສະໜອງໄດ້ຕາມຈຳນວນຕ້ອງການຫຼືບໍ?) ແລະ ໂຄງການ (ລັດຖະບານ). ໂຄງການໄດ້ເຊັນສັນຍາກັບບໍລິສັດໃນການຮັບປະກັນ (ການສະໜອງເບ້ຍໃຫ້ພຽງພໍ) ພ້ອມທັງຮັບປະກັນໃນການຈ່າຍຕາມມູນຄ່າຂອງການລົງທຶນຂອງບໍລິສັດ. ບໍລິສັດຍັງໄດ້ໃຊ້ຈ່າຍເຂົ້າໃນການສົ່ງເສີມເພື່ອໃຫ້ມີປະສິດທິພາບດ້ານເຕັກນິກການຜະລິດ, ການເກັບກ່ຽວ ແລະ ແປຮູບ ເນື່ອງຈາກວ່າເຂົາເຈົ້າຢາກຊອກຕະຫຼາດສຳລັບໝາກແໜ່ງທີ່ປູກໃນລາວ. ເຖິງຢ່າງໃດກໍ່ຕາມບໍລິສັດບໍ່ໄດ້ເຮັດສັນຍາກັບຊາວກະສິກອນກ່ຽວກັບການຂາຍ ສະນັ້ນຊາວກະຊິກອນສາມາດຂາຍໃຫ້ໃຜກໍ່ໄດ້.

ສຳລັບຮູບແບບທີ່ໂຄງການນຳມາໃຊ້ແມ່ນການຄ້ຳປະກັນໃນການສະໜອງດ້ານປັດໃຈນຳເຂົ້າໃຫ້ແກ່ກຸ່ມຊາວກະສິກອນ ແລະ ການສ້າງຕ່ອງໂສ້ມູນຄ່າທັງໝົດໃຫ້ແກ່ໝາກແໜ່ງ.

ການທີ່ບໍລິສັດສຳປະທານເນື້ອທີ່ຈຳນວນ 80 ເຮັກຕ້າ ແມ່ນເປັນການຊ່ວຍໃຫ້ບໍລິສັດມີຜົນກຳໄລໃນໄລຍະຍາວຜ່ານການຜະລິດໝາກແໜ່ງເພື່ອຂາຍດ້ວຍຕົນເອງ. ຄວາມສ່ຽງດ້ານນີ້ແມ່ນກ່ຽວຂ້ອງກັບເຕັກນິກການປູກ, ການເກັບກູ້ ແລະ ແປຮູບຂອງຊາວກະສິກອນ ເນື່ອງຈາກເປັນການສ້າງຕ່ອງໂສ້ມູນຄ່າອັນໃໝ່ ເຊິ່ງເປັນໜ້າສັງເກດອີກຮູບແບບໜຶ່ງ.

ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ຮູບແບບນີ້ເຖິງວ່າມັນເປັນອັນໃໝ່ກໍ່ຕາມມັນສາມາດສະແດງໃຫ້ເຫັນທ່າແຮງຂອງຮູບແບບການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ທີ່ມີປະສິດປະສິດທິຜົນໃນການສ້າງຕ່ອງໂສ້ມູນຄ່າອັນໃໝ່ ເຊິ່ງມີການເຊື່ອມໂຍງກັບການສະໜັບສະໜູນທາງດ້ານປັດໃຈນຳເຂົ້າ ແລະ ການຕະຫຼາດ.

ມາເບິ່ງດ້ານສັນຍາການຊື້ ແລະ ກ້າເບ້ຍຂອງໂຄງການເຫັນໄດ້ວ່າມັນຈະຮັບປະກັນລະດັບໃດໜຶ່ງຕໍ່ຜົນກຳໃລຂອງບໍລິສັດຖ້າຫາກເຂົາເຈົ້າສາມາດຮັກສາອັດຕາການຕາຍຂອງເບ້ຍໄວ້ໄດ້. ຄວາມສ່ຽງຂອງບໍລິສັດແມ່ນດ້ານເຕັກນິກດັ່ງກ່າວ. ຄວາມສ່ຽງໃນໄລຍະຍາວຂອງບໍລິສັດກໍ່ແມ່ນ ຖ້າຜົນຜະລິດໄດ້ຮັບໝາກຜົນຕາມແຜນການຜະລິດ, ຖ້າຫາກສາມາດເຮັດການຜະລິດຂອງເຂົາເຈົ້າໄດ້ເຕັມໃນເນື້ອທີ່ 80 ເຮັກຕ້າ ຈະສາມາດສ້າງລາຍຮັບລວມຍອດ ຢ່າງຕ່ຳ 800,000 ໂດລາ ຕໍ່ປີຈາກການຜະລິດໝາກແໜ່ງໄດ້ບໍ.

ກອງທຶນໝູນວຽນເປັນຈຸດເລີ່ມຕົ້ນຂອງປັດໃຈນຳເຂົ້າ ທີ່ລຸດຜ່ອນຄວາມສ່ຽງໃຫ້ແກ່ຊາວກະສິກອນ. ຖ້າວ່າການຜະລິດບໍ່ໄດ້ຮັບໝາກຜົນ ແລະ ຊາວກະສິກອນບໍ່ສາມາດຈ່າຍຄືນໄດ້ ຊຶ່ງຄາດວ່າອາດເປັນມູນຄ່າຕ່ຳ.

### *ຜົນໄດ້ຮັບຕົ້ນຕໍ:*

- ການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ແມ່ນການແນະນຳຜະລິດຕະພັນໃໝ່ ແລະ ກ່ຽວຂ້ອງກັບຕ່ອງໂສ້ມູນຄ່າໃນພູພຽງບໍລິເວນ ແລະ ທັງເປັນການອອກແບບໄດ້ຢ່າງຈະແຈ້ງທີ່ສາມາດນຳໃຊ້ເຂົ້າເຂົ້າໃນກະສິກຳທີ່ທັນສະໃໝ.

- ຄວາມສ່ຽງແມ່ນເປັນຂອງບໍລິສັດຫຼາຍກວ່າຂອງໂຄງການໂດຍບໍ່ຈຳເປັນຕ້ອງຈ່າຍຄ່າອັນໃດໃຫ້ແກ່ບໍລິສັດ. ຄວາມສ່ຽງຂອງຊາວກະສິກອນແມ່ນກ່ຽວພັນກັບມູນຄ່າຂອງອຸປະກອນຮັບໃຊ້ໃຫ້ແກ່ການຜະລິດ ແລະ ການລົງທຶນດ້ານແຮງງານ/ດິນ.

- ບໍລິສັດແມ່ນຊີ້ນຳໂດຍບຸກຄົນທີ່ມີປະສົບການກ່ຽວກັບການປູກໝາກແໜ່ງ ແລະ ການຕະຫຼາດໂດຍກົງຈາກປະເທດອິນເດຍ.

- ຄວາມສ່ຽງໄລຍະສັ້ນຂອງບໍລິສັດແມ່ນການຮັບປະກັນດ້ານການສະໜອງເບ້ຍໝາກແໜ່ງຕາມຈຳນວນຕ້ອງການໃນລາຄາທີ່ໄດ້ຕົກລົງກັນ.

- ເບິ່ງແລ້ວບໍລິສັດມີບົດບາດສຳຄັນຫຼາຍໃນຕ່ອງໂສ້ມູນຄ່າໂດຍຜ່ານການສົ່ງອອກໝາກແໜ່ງ ແລະ ຜະລິດນ້ຳມັນໝາກແໜ່ງໃນລາວ.

- ຄວາມສ່ຽງໄລຍະຍາວຂອງບໍລິສັດແມ່ນສາມາດຫຼຸດຜ່ອນໄດ້ຜ່ານການສຳປະທານດິນຂອງບໍລິສັດ ແລະ ຜະລິດໝາກແໜ່ງດ້ວຍຕົນເອງເຊິ່ງສາມາດໄດ້ຮັບຜົນຜະລິດສູງ. ການລຸດຜ່ອນຄວາມສ່ຽງຂອງບໍບໍສັດຍັງສາມາດຊ່ວຍໃນການປັບປຸງຊີວິດການເປັນຢູ່ໃຫ້ແກ່ຄົນລາວທີ່ພົວພັນໃນຕ່ອງໂສ້ມູນຄ່າຂອງໝາກແໜ່ງໃນລາວ.

- ພາກເອກະຊົນຈະເປັນຜູ້ສວມບົດບາດຫຼັກ ເຊິ່ງປົກກະຕິແລ້ວບົດບາດເຫຼົ່ານີ້ແມ່ນເປັນຂອງພາກລັດເຊັ່ນ: ກ) ການສະໜອງອຸປະກອນການຜະລິດ, ຂ) ສະໜອງການຝຶກອົບຮົມ ແລະ ສົ່ງເສີມຊາວກະສິກອນ, ຄ) ການສະໜັບສະໜູນດ້ານເຕັກນິກການເກັບກ່ຽວ ແລະ ການແປຮູບ

## 4.3 ກໍລະນີສຶກສາ: ໜໍ່ໄມ້ ຝຣັ່ງ ໃນເມືອງທ່າແຕງ

ໃນປະເທດໄທ ບໍລິສັດ ສະຫຍາມ ທານິຍາມາ ເຮັດວຽກກັບຊາວກະສິກອນຈຳນວນ 1,000 ກວ່າ ຄົນ ໃນການຜະລິດພືດຜັກທີ່ມີມູນຄ່າສູງ, ການນຳໃຊ້ສິ່ງນຳເຂົ້າເຄມີຕ່ຳ ເພື່ອສົ່ງຂາຍອອກຕະຫຼາດປະເທດຍີ່ປຸ່ນ. ບໍລິສັດໄດ້ຂະຫຍາຍການຜະລິດຢູ່ເຂດພູພຽງບໍລິເວນ ໃນປະເທດລາວ.

ໃນປີ 2007 ບໍລິສັດໄດ້ຮັບອະນຸຍາດໃຫ້ສຳປະທານທີ່ດິນ ຈຳນວນ 62 ເຮັກຕ້າ ເປັນເວລາ 20 ປີ ສຳລັບການປູກພືດຜັກສົ່ງອອກປະເທດຍີ່ປຸ່ນ. ໃນເບື້ອງຕົ້ນໄດ້ປູກຜັກໝາກຖົ່ວເມືອກ ແຕ່ວ່າເສັ້ນທາງຂົນສົ່ງລະຫວ່າງທ່າແຕງ ແລະ ຍີ່ປຸ່ນຜ່ານບາງກອກປະເທດໄທແມ່ນໄກຫຼາຍເປັນຜົນຕໍ່ຄຸນນະພາບຂອງຜັກເມື່ອສົ່ງເຖິງສາງເກັບມ້ຽນໃນຍີ່ປຸ່ນ. ບໍລິສັດຍັງໄດ້ທົດລອງພືດຜັກປະເພດອື່ນໆຫຼາຍຢ່າງກ່ອນຈະຕັດສິນໃຈເລືອກປູກໜໍ່ໄມ້ຝຼັ່ງ ໃນ 12 ເດືອນຜ່ານມານີ້. ການຂະຫຍາຍການປູກໜໍ່ໄມ້ຝຣັ່ງ ແມ່ນກຳລັງດຳເນີນຢູ່ ເຊິ່ງມີຈຳນວນ 80% ຂອງເນື້ອທີ່ສຳປະທານແມ່ນວາງແຜນຈະປູກໜໍ່ໄມ້ຝຣັ່ງ ພາຍໃນ 2 ປີ ຂ້າງໜ້າ. ບໍລິສັດຍັງບໍ່ທັນມີກຳໄລຈາກການປູກເທື່ອ ແຕ່ວ່າມີຄວາມຄາດຫວັງຈະໄດ້ຮັບຜົນພາຍໃນ 12 ເດືອນ ລວມທັງ ບ່ອນທີ່ຂະຫຍາຍເນື້ອທີ່ການປູກໃໝ່.

ເບື້ອງຕົ້ນບໍລິສັດໄດ້ວາງແຜນໃນການດຳເນີນກິດຈະການໃຫ້ປະຊາຊົນປູກທີ່ຄ້າຍຄືການປູກຢູ່ໃນປະເທດໄທ ແຕ່ວ່າດຽວນີ້ແມ່ນບໍ່ທັນເຮັດເທື່ອ. ບໍລິສັດລາຍງານວ່າຄືຊິຍັງບໍ່ທັນໃຫ້ຄົນທາງນອກປູກໃນອານາຄົດອັນໄກ້ໆນີ້ເພາະວ່າການປູກແມ່ນຕ້ອງການມາດຖານສູງ ແລະ ເປັນຫ່ວງໃນການນຳໃຊ້ເຄມີຫຼາຍ. ບໍລິສັດຕ້ອງເລັ່ງໃຫ້ໄດ້ຕາມຄວາມຕ້ອງການຂອງຕະຫຼາດໃນຍີ່ປຸ່ນ ແລະ ລະບຽບດ້ານການຕະຫຼາດອື່ນໆກ່ຽວກັບການນຳໃຊ້ເຄມີ; ສານຕົກຄ້າງ ແລະ ຢ້ານວ່າຈະເສຍຕະຫຼາດດັ່ງກ່າວຖ້າຫາກວ່າຜະລິດຕະພັນມີສານເຈືອປົນຖືກສົ່ງອອກໄປ. ເນື່ອງຈາກທາງບໍລິສັດ

ຕ້ອງການໃຫ້ໄດ້ຕາມມາດຖານສູງດັ່ງກ່າວໃນທຸກສະຖານ ທີ່ປູກ ແລະ ເນື່ອງຈາກເຂດພູພຽງບໍລະເວນແມ່ນມີການນຳໃຊ້ຢາຂ້າຫຍ້າ ແລະ ຢາຂ້າແມ່ງໄມ້ຫຼາຍ, ບໍລິສັດຈຶ່ງບໍ່ສາມາດນຳໃຊ້ຜູ້ປູກທາງນອກໃນໄລຍະນີ້ເທື່ອ ແລະ ກຳລັງຊອກສຳປະທານດິນປູກເພີ່ມເພື່ອສາມາດເພີ່ມຈຳນວນຜົນຜະລິດໃຫ້ຫຼາຍຂຶ້ນ.

ຜ່ານການນຳໃຊ້ວິທີການໄລຍະຍາວໃນການລົງທຶນ, ໃນທີ່ສຸດບໍລິສັດສາມາດເຫັນໄດ້ຜົນກຳໄລທີ່ພໍເປັນໄປໄດ້ໃນອານາຄົດອັນໃກ້ໆນີ້. ການລົງທຶນແບບນີ້ໄດ້ສະແດງໃຫ້ເຫັນວ່າຖ້າມີການຜະລິດພືດຜັກທີ່ມີຄຸນນະພາບສູງທີ່ສາ ມາດຊອກຫາຕະຫຼາດປາຍທາງທີ່ຢູ່ຫ່າງໄກໄດ້. ເຖິງຢ່າງໃດກໍ່ຕາມຈຸດປະສົງທີ່ພົວພັນກັບການປູກພືດເພື່ອຕະຫຼາດສົ່ງອອກໂດຍຜ່ານການປູກຂອງຄົນພາຍນອກແມ່ນຍັງບໍ່ທັນໄດ້ເກີດຂຶ້ນ.

***ຜົນໄດ້ຮັບຕົ້ນຕໍ:***

- ຄວາມຫວັງເບື້ອງຕົ້ນທີ່ຈະຮ່ວມມືກັບຜູ້ປູກຂ້າງນອກແມ່ນຈຸດເລີ່ມຕົ້ນຂອງການນຳໃຊ້ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ໂດຍທັງສອງຝ່າຍ.
- ເບື້ອງຕົ້ນການສົ່ງເສີມການລົງທຶນຂອງພາກລັດ ຕໍ່ກັບການສຳປະທານພື້ນທີ່ການຜະລິດແມ່ນຍັງມີຈຳກັດ, ອີງໃສ່ການລາຍງານຂອງບໍລິສັດ ທານີຢາມາ ແມ່ນບໍ່ມີອົງການຈັດຕັ້ງໃດຈາກພາກລັດມາສະໜັບສະໜູນແກ່ບໍລິສັດ ທານີຢາມາ.
- ໃນໄລຍະນີ້ຍັງມີຫຼັກຖານໜ້ອຍຫຼາຍທີ່ຈະເວົ້າໄດ້ວ່າໂຄງການນີ້ໄດ້ດຳເນີນການໂດຍນຳໃຊ້ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ທີ່ມີເປົ້າໝາຍໃຫ້ບໍລິສັດຈະໄດ້ຮັບຜົນກຳໄລໃນການດຳເນີນກິດຈະການໃນໄລຍະຍາວ.
- ບໍລິສັດວາງແຜນໃນການຂະຫຍາຍກິດຈະການຜ່ານການຂະຫຍາຍເນື້ອທີ່ສຳປະທານເພື່ອການຜະລິດຫຼາຍກວ່າການຊອກຜູ້ຜະລິດຈາກຂ້າງນອກ, ໝາຍຄວາມວ່າບໍລິສັດບໍ່ໄດ້ວາງແຜນໄລຍະຍາວ.

### 4.4 ກໍລະນີສຶກສາ: ການລ້ຽງໝູ ໃນແຂວງ ເຊກອງ

ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ເຊິ່ງໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ/ກອງທຶນສາກົນເພື່ອການພັດທະນາກະສິກຳ ແມ່ນກຳລັງຈັດຕັ້ງປະຕິບັດໃນແຂວງເຊກອງ ແລະ ແຂວງອື່ນໆໃນແຂວງພາກໃຕ້ ເພື່ອສົ່ງເສີມ ການລ້ຽງສັດເພື່ອເປັນສິນຄ້າ, ການຜະລິດດ້ານກະສິກຳອື່ນໆ. ນີ້ແມ່ນການຈັດຕັ້ງປະຕິບັດຜ່ານການສ້າງຕັ້ງກຸ່ມຜະລິດ ເຊິ່ງໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກໂຄງການ. ການສະໜັບສະໜູນແມ່ນເປັນວັດຖຸທີ່ເປັນແນວພັນສັດຕາມຄວາມຕ້ອງການ, ອາຫານສັດ ແລະ ປັດໃຈນຳເຂົ້າອື່ນໆ. ໃນແຂວງ ເຊກອງ, ໂຄງການໄດ້ສະໜັບສະໜູນການສ້າງຕັ້ງວິສະຫະກິດເພື່ອຕອບສະໜອງລູກໝູ ແລະ ໄກ່ນ້ອຍແບບຍືນຍົງໃຫ່ແກ່ກຸ່ມລ້ຽງສັດ. ເນື່ອງຈາກໂຄງການຕ້ອງການສ້າງຜູ້ປະກອບການໃຫ້ແກ່ຕ່ອງໂສ້ດັ່ງກ່າວ-ຜູ້ສະໜອງປັດໃຈນຳເຂົ້າການຜະລິດ. ໂອກາດທີ່ຈະເຮັດວຽກຮ່ວມກັບຫົວໜ່ວຍທຸລະກິດແມ່ນໄດ້ຮັບການແນະນຳຈາກພາກລັດ ແລະ ຂະບວນການຄັດເລືອກແມ່ນເຮັດແບບເປີດເຜີຍ ເພື່ອຊ່ວຍໃນການເລືອກໃຫ້ໄດ້ຜູ້ສະໝັກທີ່ສາມາດລົງທຶນຮ່ວມໄດ້ 50% ໃນໄລຍະເລີ່ມຕົ້ນ.

ທ່ານ ນ. ພອນສະຫວັນ, ນັກທຸລະກິດຍິງ ແລະ ທັງເປັນແມ່ຄ້າໝູໃນແຂວງ ເຊກອງ ໄດ້ຮັບການຄັດເລືອກໃຫ້ເປັນຄູ່ຮ່ວມງານຂອງໂຄງການ ເພື່ອສະໜອງລູກໝູ ແລະ ໄກ່ນ້ອຍໃຫ້ແກ່ບ້ານເປົ້າໝາຍຂອງໂຄງການ. ລາວໄດ້ຮັບການ

ສະໜັບສະໜູນດ້ານແມ່ພັນ ແລະ ທີ່ອາຫານຕາມຄວາມຕ້ອງການຈາກໂຄງການເປັນທຶນກູ້ຢືມ. ລາວຍັງໄດ້ໃຊ້ທຶນຕົວເອງໃນການສ້າງຟາມ (ອຸປະກອນ, ຄອກໝູ, ການບໍລິການດ້ານສັດຕະວະແພດ) ຄິດເປັນ 70% ຂອງມູນຄ່າການລົງທຶນທັງໝົດ. ໂຄງການໄດ້ສະໜອງທຶນກູ້ຢືມເປັນວັດຖຸໃນປີ 2012 ເປັນມູນຄ່າ 1 ຕື້ກີບ (125,000 ໂດລ່າສະຫະລັດ) ເຊິ່ງໄຫ້ຈ່າຍຄືນຜ່ານການຫັກຄ່າລູກໝູ ແລະ ໄກ່ນ້ອຍ ທີ່ຂາຍສະໜອງໃຫ້ແກ່ກຸ່ມຜະລິດ.

ວິສາຫະກິດຂອງລາວຍັງໄດ້ຖືກກຳນົດໃຫ້ເປັນໂຄງການຂອງແຂວງເພື່ອຄ້ຳປະກັນການສະໜອງຊີ້ນໝູໃຫ້ແກ່ຕະຫຼາດຂອງແຂວງ. ດັ່ງນັ້ນ, ລາວຈິ່ງສາມາດເຂົ້າເຖິງທຶນກູ້ຢືມຈຳນວນຫຼາຍເຖິງ (5 ຕື້ກີບ) ຈາກທະນາຄານພັດທະນາລາວສຳລັບການເລີ່ມຕົ້ນທຸລະກິດ ແລະ ເປັນການດຳເນີນທຸລະກິດຈາກທະນາຄານ. ນອກຈາກນີ້, ບໍລິສັດຂອງລາວຍັງໄດ້ກຳນົດໃຫ້ເປັນຜູ້ສະໜອງຊີ້ນໝູໃຫ້ແກ່ຕະຫຼາດຢ່າງຖືກຕ້ອງຕາມກົດໝາຍຈາກອຳນາດການປົກຄອງແຂວງ. ຈາກການເປັນທັງຜູ້ສະໜອງລູກໝູໃຫ້ແກ່ກຸ່ມລ້ຽງໝູເພື່ອໄປລ້ຽງ ແລະ ທັງຊື້ຈາກກຸ່ມເພື່ອຂາຍເປັນຊີ້ນໃນຕະຫຼາດແຂວງເຊກອງ.

ໃນເບື້ອງຕົ້ນການດຳເນີນທຸລະກິດຂອງລາວໄດ້ປະເຊີນໜ້າກັບບັນຫາເລື່ອງພະຍາດ ເຮັດໃຫ້ໝູລົ້ມຕາຍເປັນຈຳນວນໜຶ່ງ ຄິດເປັນມູນຄ່າເຖິງ (500 ລ້ານກີບ) ແລະ ຕ້ອງໄດ້ໃຊ້ເວລາເຖິງ 6 ເດືອນໃນການແກ້ໄຂບັນຫາດັ່ງກ່າວ. ການຈ່າຍເງິນຄືນໃຫ້ແກ່ທະນາຄານທີ່ມີດອກເບ້ຍສູງ 14% ຕໍ່ປີ, ເປັນອຸປະສັກຕົ້ນຕໍທີ່ນາງປະເຊີນໜ້າຢູ່. ໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ໃຫ້ລາວໄດ້ເປັນຕົວແທນໃນການຈຳໜ່າຍລູກໝູໃຫ້ແກ່ສະມາຊິກກຸ່ມກວາມເອົາ 50% ຂອງການຂາຍໃນຕະຫຼາດທົ່ວໄປ ແລະ ລ້ຽງໃນຟາມຂອງຕົນເອງເພື່ອຂາຍເປັນຊີ້ນອອກສູ່ຕະຫຼາດ.

ຜ່ານການເຊັນສັນຍາກັບໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ລາວສາມາດຂາຍລູກໝູໃຫ້ກັບໂຄງການໄດ້ໃນຈຳນວນທີ່ແນ່ນອນໃນລາຄາທ້ອງຕະຫຼາດໃນແຕ່ລະປີ ພ້ອມນັ້ນຍັງໄດ້ຫັກ (10%) ຈາກການຂາຍເພື່ອຈ່າຍຄືນໃຫ້ແກ່ໂຄງການທີ່ໄດ້ລົງທຶນໃຫ້ກ່ອນ.

ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ແມ່ນເຫັນໄດ້ວ່າພາກລັດມີການສະໜອງ ກ) ສະໜອງທຶນເບື້ອງຕົ້ນໃນການດຳເນີນທຸລະກິດ, ຂ) ໄດ້ຮັບການເອື້ອອຳນວຍໃຫ້ເຂົ້າເຖິງແຫຼ່ງທຶນດ້ານການຄ້າຢ່າງເປັນທາງການ, ຄ) ໄດ້ຮັບການຊ່ວຍເຫຼືອດ້ານເຕັກນິກວິຊາການຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງໃນການບໍລິການດ້ານສັດຕະວະແພດ, ງ) ໄດ້ກາຍເປັນຜູ້ສະໜອງຊີ້ນໝູໃຫ້ແກ່ຕະຫຼາດຂອງແຂວງຢ່າງເປັນທາງການ.

ຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ນີ້ຖືວ່າສາມາດເປັນການສ້າງຫົວໜ່ວຍທຸລະກິດໃນການສະໜອງລູກໝູໃຫ້ແກ່ "ຕະຫຼາດໂຄງການ" ແລະ ທັງເປັນການຄ້ຳປະກັນໃນການສະໜອງຊີ້ນໝູໃຫ້ຕະຫຼາດພາຍໃນແຂວງໃນໄລຍະຍາວ.

**ຜົນໄດ້ຮັບຕົ້ນຕໍຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ:**

- ໄດ້ມີການແບ່ງປັນຄວາມສ່ຽງຮ່ວມກັນໂດຍທາງໂຄງການແມ່ນ (ການສະໜອງລູກໝູໃຫ້ພຽງພໍແກ່ໂຄງການເພື່ອສາມາດຈ່າຍຄືນທຶນກູ້ຢືມໃນເບື້ອງຕົ້ນ) ແລະ ໂດຍນັກທຸລະກິດແມ່ນ (ສ້າງກຳໄລໃຫ້ພຽງພໍເພື່ອການຈ່າຍຄືນໃຫ້ແກ່ທຶນກູ້ຢືມໃນການເຮັດທຸລະກິດ).

- ທຸລະກິດໄດ້ຮັບການຄັດເລືອກໂດຍຜ່ານສາທາລະນະຊົນ, ຜ່ານການໂຄສະນາຢ່າງເປີດເຜີຍເພື່ອເປີດໂອກາດໃນການເຮັດວຽກຮ່ວມກັບໂຄງການ ແລະ ຜ່ານຂະບວນການຄັດເລືອກແບບເປັນທາງການ.

- ລັດຖະບານຂັ້ນແຂວງແມ່ນມີຄວາມສຳຄັນຫຼາຍໃນການສະໜັບສະໜູນໃຫ້ກັບຫົວໜ່ວຍທຸລະກິດໃນດ້ານການເຂົ້າເຖິງທຶນການຄ້າ ແລະ ການຜູກຂາດດ້ານການຕະຫຼາດພາຍໃນແຂວງ. ຜົນປະໂຫຍດທັງສອງຢ່າງນີ້ເປັນສິ່ງສຳຄັນໃນດ້ານການດຳເນີນທຸລະກິດໄດ້ຢ່າງໝັ້ນໃຈໃນການປະຕິບັດກິດຈະກຳດັ່ງກ່າວ.

- ການເຂົ້າເຖິງການບໍລິການເຕັກນິກດ້ານສັດຕະວະແພດແມ່ນເປັນສິ່ງສຳຄັນເພາະມັນສາມາດລຸດຜ່ອນຄວາມສ່ຽງດ້ານເຕັກນິກຂອງກິດຈະການ.

- ຈຸດປະສົງຂອງຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ແມ່ນປະເຊີນໜ້າຫຼາຍປະການ ແລະ ສາມາດເຫັນໄດ້ຫຼາຍດ້ານຄື: ກ) ສະໜອງດ້ານປັດໃຈນຳເຂົ້າການຜະລິດໃຫ້ໄດ້ຕາມຄວາມຕ້ອງການຂອງໂຄງການ, ຂ) ຮັບປະກັນດ້ານການສະໜອງລູກໝູເຂົ້າໃນຕ່ອງໂສ້ມູນຄ່າຊີ້ນໝູໄດ້ຢ່າງຍືນຍົງ ແລະ ຄ) ຮັບປະກັນເປັນແຫຼ່ງສະໜອງຊີ້ນໝູໃຫ້ແກ່ຕະຫຼາດຂອງແຂວງໂດຍບໍ່ໄດ້ນຳເຂົ້າ ແລະ ມີຄວາມຍືນຍົງ.

## 4.5 ຕົວຢ່າງອື່ນໆ

ນອກຈາກສີ່ກໍລະນີທີ່ກ່າວມາແລ້ວຍັງມີຂໍ້ມູນອີກຈຳນວນໜຶ່ງທີ່ໄດ້ເກັບກຳຈາກຕົວຢ່າງອື່ນໆທີ່ສາມາດເບິ່ງພາບລວມຂອງຮູບແບບການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ຜ່ານການພົບປະກັບພາກສ່ວນທີ່ກ່ຽວຂ້ອງໃນຂັ້ນສູນກາງ ແລະ ໃນຂັ້ນແຂວງ.

ອົງປະກອບທີ່ສຳຄັນອັນໜຶ່ງແມ່ນການພົບກັບໂຄງການພັດທະນາການປູກຝັງ ແລະ ລ້ຽງສັດ ລາວ-ຮົງກາລີ[10] , , ລັດຖະບານລາວໄດ້ຮັບທຶນກູ້ຢືມສຳລັບການສ້າງຕັ້ງໂຮງງານຜະລິດຫົວອາຫານສັດ 3 ແຫ່ງ, ແຫ່ງໜຶ່ງຢູ່ໃນວຽງຈັນ ແລະ ສອງແຫ່ງຢູ່ໃນແຂວງຫຼວງພະບາງ. ຈຸດປະສົງແມ່ນເພື່ອເພີ່ມການຜະລິດຫົວອາຫານໝູ ແລະ ປາທີ່ມີຄຸນນະພາບ ສະໜອງໃຫ້ຕະຫຼາດພາຍໃນເພື່ອເປັນການຫຼຸດຜ່ອນ ແຕ່ການອີງໃສ່ການນຳເຂົ້າຈາກຕ່າງປະເທດ ຊຶ່ງປະຈຸບັນຕາມການລາຍງານມີການນຳເຂົ້າເຖິງ 70%.

ທຶນກູ້ຢືມດັ່ງກ່າວແມ່ນມີໄລຍະການກູ້ຢືມ 18 ປີ ເຊິ່ງໄລຍະ 8 ປີທຳອິດບໍ່ມີດອກເບ້ຍ. ໂຮງງານຫົວອາຫານສັດດັ່ງກ່າວໄດ້ຮັບການສ້າງຕັ້ງ, ທົດລອງຜະລິດ ແລະ ສົ່ງມອບໃຫ້ແກ່ລັດຖະບານລາວໃນປີ 2011. ຫຼັງຈາກນັ້ນໄດ້ມີການຮ່ວມມືກັບບໍລິສັດເພື່ອດຳເນີນການຜະລິດໃນໄລຍະ 30 ປີ ໂດຍການເຮັດສັນຍາໃຫ້ເຊົ່າໃນປີ 2013 ລະຫວ່າງບໍລິສັດ ແລະ ລັດຖະບານລາວ. ສັນຍາດັ່ງກ່າວແມ່ນລວມທັງການຍົກເວັ້ນພາສີນຳເຂົ້າສຳລັບປັດໃຈນຳເຂົ້າທີ່ຈຳເປັນ. ປະເດັນສຳຄັນສຳລັບຮູບແບບການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ແມ່ນເຫັນໄດ້ຢ່າງຈະແຈ້ງວ່າພາກເອກະຊົນບໍ່ໄດ້ເຂົ້າຮ່ວມຈົນກວ່າໂຮງງານໄດ້ຮັບການຊື້ ແລະ ຕິດຕັ້ງໂຮງງານ. ປະຈຸບັນຍັງບໍ່ທັນມີການຜະລິດຫົວອາຫານສັດເທື່ອ.

ຢູ່ເມືອງເງິນ, ແຂວງໄຊຍະບູລີ ພໍ່ຄ້າສາລີມີສ່ວນກ່ຽວຂ້ອງກັບການສະໜອງປັດໃຈນຳເຂົ້າ (ແນວພັນ, ການກະກຽມ

---

*10 ຮົງກາລີເພີ່ມການສະໜັບສະໜູນໃຫ້ແກ່ກະສິກຳຂອງປະເທດລາວ, ໜັງສືພິມວຽງຈັນທາມສ໌, 22 ເມສາ 2010*

ດິນ ແລະ ອື່ນໆ) ໃຫ້ແກ່ກຸ່ມຊາວກະສິກອນຜ່ານຮູບແບບການຜະລິດທີ່ມີສັນຍາ[11] ຜູກພັນ. ສະມາຊິກຄົນໜຶ່ງຂອງສະມະຄົມໄດ້ສະເໜີຂໍຢືມທຶນຈາກລັດຖະບານເພື່ອສ້າງໂຮງແກະສາລີ, ໂຮງອົບ ທີ່ມີຄວາມສາມາດໃນກາຜະລິດຂະໜາດ (100 ໂຕນ/ມື້) ພ້ອມທັງສາງເກັບມ້ຽນ. ທຶນກູ້ຢືມດັ່ງກ່າວມີມູນຄ່າເຖິງ (1.5 ລ້ານ ໂດລາ) ແລະ ເປັນທຶນກູ້ຢືມໄລຍະຍາວ 15 ປີ ໃນນັ້ນແມ່ນບໍ່ເກັບດອກເບ້ຍໃນໄລຍະ 5 ປີທໍາອິດ. ຈາກການລາຍງານແມ່ນດອກເບ້ຍ 2% ຕໍ່ປີ. ຖ້າປາສະຈາກທຶນກູ້ຢືມໄລຍະຍາວນີ້ແມ່ນບໍ່ສາມາດສ້າງທຸລະກິດແບບນີ້ໄດ້ເນື່ອງຈາກ ທຶນກູ້ຢືມຈາກທະນາຄານການຄ້າທົ່ວໄປແມ່ນດອກເບ້ຍສູງ ແລະ ມີໄລຍະການກູ້ຢືມສັ້ນ. ໃນກໍລະນີນີ້ການເຂົ້າເຖິງທຶນກູ້ຢືມໄລຍະຍາວຈາກລັດຖະບານຈະສາມາດຊ່ວຍໃນການປັບປຸງຂະບວນການແປຮູບສາລີທີ່ມີຄຸນນະພາບ ແລະ ສ້າງມູນຄ່າສູງໂດຍຜ່ານການເກັບຮັກສາໄວ້ຂາຍຍາມຂາດຕະຫຼາດ. ຕາມການລາຍງານ, ບັນດາຜູ້ແປຮູບຄົນອື່ນໆກໍ່ສາມາດເຂົ້າເຖິງທຶນກູ້ຢືມໄລຍະຍາວທີ່ຄ້າຍຄືກັນນີ້. ທຶນກູ້ຢືມໄລຍະຍາວນີ້ແມ່ນຈະເປັນທຶນກູ້ຢືມນະໂຍບາຍພິເສດຈາກທະນາຄານແຫ່ງຊາດລາວ (BoL) ເພື່ອການພັດທະນາບາງດ້ານທີ່ສໍາຄັນ. ທຶນກູ້ຢືມແບບນີ້ສາມາດເປັນເຄື່ອງມືທີ່ມີທ່າແຮງອັນສໍາຄັນສໍາລັບຮູບແບບການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ໃນລາວ.

ການສະໜັບສະໜູນໃຫ້ແກ່ການປູກກາເຟໃນເມືອງດາກຈຶງແມ່ນເຮັດພາຍໃຕ້ສັນຍາເຊັນກັນລະຫວ່າງ ບໍລິສັດກາເຟພູຊຽວ ແລະ ໂຄງການສົ່ງເສີມການຜະລິດສິນຄ້າກະສິກໍາ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ເພື່ອສະໜັບສະໜູນໃຫ້ແກ່ການຜະລິດເບ້ຍກາເຟ ສະໜອງໃຫ້ແກ່ກຸ່ມຜະລິດ ແລະ ສະໜັບສະໜູນດ້ານການຕະຫຼາດກາເຟໄລຍະຕໍ່ໄປ. ເຖິງແມ່ນວ່າໄດ້ກ້າເບ້ຍກາເຟແລ້ວຈໍານວນ 500,000 ເບ້ຍ ແຕ່ວ່າມີພຽງແຕ່ 50,000 ເບ້ຍຖືກແຈກຢາຍເນື່ອງຈາກຫຼາຍສາຍເຫດ. ສາມາດສັງເກດເຫັນໄດ້ວ່າການຮ່ວມມືໃນກໍລະນີນີ້, ບໍ່ມີຄວາມຄືບໜ້າຫຼາຍເພາະວ່າບັນດາພາກສ່ວນທີ່ກ່ຽວຂ້ອງກັບໂຄງການບໍ່ໄດ້ເຂົ້າຮ່ວມນໍາຂະບວນການໃນຕອນລິເລີ່ມເຮັດສັນຍາ.

ໂດຍການສະໜັບສະໜູນທຶນຂອງທະນາຄານພັດທະນາອາຊີ (ADB) ໃຫ້ແກ່ໂຄງການສົ່ງເສີມການຜະລິດເປັນສິນຄ້າ (SHDP), ກົມສົ່ງເສີມກະສິກໍາ ແລະ ສະຫະກອນ ໄດ້ເຮັດວຽກກັບກຸ່ມຊາວກະສິກອນເປັນຈໍານວນຫຼວງຫຼາຍ ເພື່ອສົ່ງເສີມການຜະລິດກະສິກໍາໃຫ້ເປັນສິນຄ້າ. ເນື່ອງຈາກເປັນພາກສ່ວນໜຶ່ງຂອງຂອງໂຄງການ ເຂົາເຈົ້າເຮັດວຽກຮ່ວມກັບກຸ່ມຊາວກະສິກອນ ເພື່ອສະໜອງແນວພັນສາລີຫວານໃຫ້ແກ່ບໍລິສັດ ລາວອຸດສາຫະກໍາ ຈໍາກັດ ໃນແຂວງວຽງຈັນ. ໃນຕົວຢ່າງນີ້ຮູບແບບການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ເປັນສ່ວນສໍາຄັນໃນການສະໜັບສະໜູນພາກເອກະຊົນຜ່ານການເຮັດວຽກກັບກຸ່ມຊາວກະສິກອນເພື່ອບັນລຸມາດຖານຄຸນນະພາບດ້ານຜະລິດຕະພັນທີ່ຕ້ອງການໂດຍບໍລິສັດ. ກົມສົ່ງເສີມກະສິກໍາ ແລະ ສະຫະກອນແມ່ນມີບົດບາດສໍາຄັນໃນການເອື້ອອໍານວຍໃນການແກ້ໃຂຂໍ້ຂັດແຍ່ງລະຫວ່າງກຸ່ມຊາວກະສິກອນ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບການຈັດປະເພດຄຸນນະພາບຂອງຜະລິດຕະພັນ ແລະ ການກໍານົດລາຄາ ເພື່ອຮັບປະກັນວ່າຊາວກະສິກອນໄດ້ຮັບລາຄາຍຸດຕິທໍາ' ສໍາລັບການຜະລິດຂອງເຂົາເຈົ້າ. ໃນກໍລະນີນີ້, ກົມສົ່ງເສີມກະສິກໍາ ແລະ ສະຫະກອນ ສະໜັບສະໜູນພາກເອກະຊົນໂດຍ'"ເຮັດໜ້າທີ່ເປັນກໍາມະການ"'ລະຫວ່າງພາກເອກະຊົນ ແລະ ກຸ່ມຊາວກະສິກອນເພື່ອຮັບປະກັນວ່າການຈ່າຍມີຄວາມ "ຍຸດຕິທໍາ"'ບໍລິສັດຈ່າຍໃຫ້ແກ່ຜູ້ຜະລິດ. ໃນຂະນະດຽວກັນການເຮັດໜ້າທີ່ "ເປັນຜູ້ໄກ່ເກ່ຍ"' ລະຫວ່າງພາກເອກະຊົນ ແລະ ກຸ່ມຜູ້ຜະລິດແມ່ນໄດ້ເຮັດຢ່າງກວ້າງຂວາງໃນລະດັບແຂວງ ໜາທີ່ດັ່ງກ່າວບໍ່ສາມາດຮັບປະກັນໄດ້ວ່າເປັນຮູບແບບການສົ່ງເສີມຊາວກະສິກອນຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ (PPP) ແຕ່ມັນເປັນພາກສ່ວນໜຶ່ງຂອງລະບຽບການ'"ປົກກະຕິ"' ຂອງ

[11] *ຍ້ອນວ່າບໍ່ມີສັນຍາທີ່ເປັນທາງການ ເງື່ອນໄຂຂອງການຕົກລົງແມ່ນມີຄວາມເໝາະສົມຫຼາຍກວ່າເນື້ອໃນຂອງສັນຍາຜູກພັນ.*

ລັດຖະບານ.

## 5. ການວິເຄາະໃນເບື້ອງຕົ້ນ

ການວິເຄາະນີ້ແມ່ນເພື່ອຊອກຫາບົດຮຽນທີ່ຖອດຖອນໄດ້ຈາກກໍລະນີສຶກສາເພື່ອເປັນບ່ອນອີງໃຫ້ການພັດທະນາຄູ່ມືແນະນຳສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳໃນລາວ ຊຶ່ງນຳໃຊ້ໂດຍອີງການ GIZ ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ (LM-RED program).

ການວິເຄາະໃນ 4 ກໍລະນີສຶກສາທີມີຄຸນລັກສະນະສຳຄັນຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນໄດ້ສະແດງໃນຕາຕະລາງທີ 2 ຂ້າງລຸ່ມນີ້.

**ຕາຕະລາງ 2: ຄຸນລັກສະນະຂອງກໍລະນີສຶກສາ PPP's**

| ປະເພດຂອງການສັນຍາ | ຄວາມເປັນເຈົ້າຂອງຊັບສິນ | ການດຳເນີນງານ ແລະ ການຄຸ້ມຄອງ | ເງິນລົງທຶນ | ຄວາມສ່ຽງທາງການຄ້າ |
|---|---|---|---|---|
| **ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ** | ລັດ | ເອກະຊົນ | ລັດ ແລະ ເອກະຊົນ | ລັດ ແລະ ເອກະຊົນ |
| **ໝາກແໜ່ງ** | ລັດ ແລະ ເອກະຊົນ (ສຳປະທານ) | ເອກະຊົນ | ເອກະຊົນ | ເອກະຊົນ |
| **ລ້ຽງໝູ** | ເອກະຊົນ | ເອກະຊົນ | ລັດ ແລະ ເອກະຊົນ | ລັດ ແລະ ເອກະຊົນ |
| **ໝໍ່ໄມ້ຝຣັ່ງ** | ລັດ ແລະ ເອກະຊົນ (ສຳປະທານ) | ເອກະຊົນ | ເອກະຊົນ | ເອກະຊົນ |

ຜົນໄດ້ຮັບຕົ້ນຕໍຈາກກໍລະນີສຶກສາຕ່າງໆມີດັ່ງຕໍ່ໄປນີ້:

ຜົນຂອງການສຶກສາຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໄດ້ໃຫ້ຮູ້ວ່າພາກເອກະຊົນໃຫ້ການບໍລິການ ຊຶ່ງໃນໄລຍະຜ່ານມາການບໍລິການດັ່ງກ່າວແມ່ນໄດ້ປະຕິບັດໂດຍພາກລັດ. ການບໍລິການເຫຼົ່ານີ້ລວມມີ:

- ການສະໜອງການບໍລິການສົ່ງເສີມໃຫ້ແກ່ກຸ່ມຊາວກະສິກອນທີ່ໄດ້ພົວພັນກັບການຜະລິດ (ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ EMRIP, ການປູກໝາກແໜ່ງ).
- ການສະໜອງປັດໃຈການຜະລິດທີ່ໄດ້ເຮັດໂດຍພາກລັດໃນໄລຍະຜ່ານມາ (ໂຄງການ EMRIP ແມ່ນສະໜອງແນວພັນ, ການປູກໝາກແໜ່ງແມ່ນສະໜອງເຄື່ອງມືອຸປະກອນການຜະລິດ).
- ການສະໜອງສິນເຊື່ອໂດຍສະຖາບັນການເງິນຂອງລັດເຊັ່ນ: ທະນາຄານສົ່ງເສີມກະສິກຳ ((EMRIP, ສະມາຄົມປູກກາເຟ).

ມັນມີຄວາມສຳຄັນຕ້ອງຮັບຮູ້ວ່າການໃຫ້ບໍລິການເຫຼົ່ານີ້ແມ່ນບໍ່ໄດ້ມີການສະໜັບສະໜູນດ້ານການເງິນຈາກພາກລັດ ແຕ່ໄດ້ກາຍເປັນຮູບແບບທຸລະກິດ. ພາຍໃຕ້ຮູບແບບຂອງໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ, ເຈົ້າຂອງໂຮງສີເຂົ້າບໍ່ໄດ້ຊອກຫາຜົນກຳໄລຈາກການສະໜອງປັດໃຈການຜະລິດ ແລະ ໄດ້ສະໜອງປັດໃຈການຜະລິດໃຫ້ແກ່ຊາວນາໃນລາຄາທ້ອງຕະຫຼາດ. ຍ້ອນວ່າພວກເຂົາໄດ້ສະໜອງປັດໃຈການຜະລິດດ້ວຍຄວາມເພິ່ງພໍໃຈ ແນ່ໃສ່ຮັບປະກັນໃຫ້ແກ່ການນຳໃຊ້ປັດໃຈການຜະລິດດັ່ງກ່າວໃຫ້ມີປະສິດທິພາບຫຼາຍເທົ່າທີ່ຈະຫຼາຍໄດ້. ດັ່ງນັ້ນ, ການດຳເນີນທຸລະກິດຂອງເຈົ້າຂອງໂຮງສີກັບຊາວນາໄດ້ກາຍເປັນ ສາຍຜູກພັນ ທີ່ເພີ່ມສະມັດຕະພາບການຜະລິດຂອງຊາວນາ ແລະ ເພີ່ມປະລິມານການສະໜອງເຂົ້າໃຫ້ແກ່ໂຮງສີ.

ມີການເຮັດສັນຍາລະຫວ່າງລັດ ແລະ ເອກະຊົນ ໃນທຸກໆກໍລະນີ, ສຳລັບບົດບັນທຶກຄວາມເຂົ້າໃຈຂອງໂຄງການສົ່ງເສີມການຜະລິດສິນຄ້າກະສິກຳ ແລະ ປ່າໄມ້ ແບບຍືນຍົງ (ສສຄກປ) ແມ່ນມີລາຄາຄ້ຳປະກັນໃຫ້ແກ່ກຸ່ມຜູ້ຜະລິດ ຊຶ່ງເປັນແຮງຈູງໃຈທີ່ດີອັນໜຶ່ງ. ໃນກໍລະນີຂອງໝາກແໜ່ງແມ່ນມີສິ່ງກະຕຸກຊຸກຍູ້ໄດ້ຢ່າງພຽງພໍເພື່ອເອື້ອອຳນວຍໃຫ້ແກ່ການສ້າງຕັ້ງບໍລິສັດ ເພື່ອຕອບສະໜອງຄວາມຕ້ອງການຕະຫຼາດ ແລະ ຫວັງໄວ້ວ່າເປັນການພັດທະນາຕ່ອງໂສ້ມູນຄ່າໃໝ່.

ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ ໄດ້ປະກອບສ່ວນຕໍ່ການພັດທະນາສະມາຄົມໂຮງສີເຂົ້າ ແລະ ຈັດກອງປະຊຸມນະໂຍບາຍຮ່ວມກັບເຈົ້າໜ້າທີ່ຂັ້ນແຂວງ. ສິ່ງເຫຼົ່ານີ້ໄດ້ເຮັດໃຫ້ມີການປ່ຽນແປງດ້ານນະໂຍບາຍຕ່າງໆ ເພື່ອສະໜັບສະໜູນໃຫ້ກັບຂະແໜງການເຂົ້າ ແລະ ການດຳເນີນງານຂອງໂຮງສີເຂົ້າ. ມັນເປັນເລື່ອງດີທີ່ໄດ້ຮັບຮູ້ວ່າສະມາຄົມໂຮງສີເຂົ້າທີ່ຖືກສ້າງຕັ້ງຂຶ້ນດ້ວຍການສະໜັບສະໜູນຂອງໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າໃນ ສປປ ລາວ ໄດ້ນຳໃຊ້ຮູບແບບທຸລະກິດໃໝ່ນີ້. ສ່ວນແຂວງອື່ນໆກໍ່ມີການສ້າງຕັ້ງສະມາຄົມໂຮງສີເຂົ້າໂດຍກະຊວງອຸດສາຫະກຳ ແລະ ການຄ້າ ແຕ່ກໍລະນີນີ້ມີຜົນສຳເລັດໜ້ອຍກວ່າ[12]. ຖ້າຫາກມີຜົນສຳເລັດທີ່ສາມາດບັນລຸໄດ້ ການສະໜັບສະໜູນດ້ານນະໂຍບາຍໃຫ້ກັບການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືລັດ ແລະ ເອກະຊົນ ໃຫ້ແກ່ຂັ້ນແຂວງ ແລະ ເມືອງແມ່ນມີຄວາມສຳຄັນ.

ໃນກໍລະນີສຶກສາທັງໝົດນີ້ໄດ້ມີການສາທິດກ່ຽວກັບນະວັດຕະກຳເຕັກໂນໂລຊີ ຊຶ່ງເລີ່ມຈາກການແນະນຳການປູກພືດຊະນິດໃໝ່ ແລະ ຕ່ອງໂສ້ມູນຄ່າຈຶ່ງເຮັດໃຫ້ມີການປ່ຽນແປງຮູບແບບການດຳເນີນທຸລະກິດທີ່ໄດ້ຖືກນຳໃຊ້ໂດຍໂຮງສີເຂົ້າໃນຂະແໜງການເຂົ້າ.

## 5.1 ຕົວຢ່າງການຜະລິດທີ່ດີ

ຜ່ານການທົບທວນເອກະສານອ້າງອີງ ແລະ ການສຶກສາກໍລະນີຕ່າງໆ ເຮັດໃຫ້ສາມາດສັງລວມກິດຈະກຳທີ່ດີຈຳນວນໜຶ່ງກ່ຽວກັບການສົ່ງເສີມຊາວກະສິກອນໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ. ຕົວຢ່າງການຜະລິດທີ່ດີມີດັ່ງຕໍ່ໄປນີ້:

**ການຄັດເລືອກຄູ່ຮ່ວມງານແບບເປີດກວ້າງ ແລະ ເຄັ່ງຄັດ -** ໃນກໍລະນີສຶກສາຕ່າງໆແມ່ນມີການຄັດເລືອກຄູ່ຮ່ວມງານພາກເອກະຊົນຜ່ານຂະບວນການທີ່ເປີດກວ້າງ ໂດຍການໂຄສະນາໃຫ້ໂອກາດເຂົ້າຮ່ວມກັບໂຄງການ ແລະ ມີການຄັດຈ້ອນຢ່າງເອົາໃຈໃສ່ ແລະ ກຳນົດເອົາຄູ່ຮ່ວມງານໂດຍອີງໃສ່ມາດຕະຖານທີ່ໄດ້ຕົກລົງໄວ້. ຂະບວນການຄັດເລືອກແບບເປີດກວ້າງດັ່ງກ່າວມີຜົນດີດັ່ງຕໍ່ໄປນີ້:

---

[12] *ຈອນ ຄອນເນວ. 2011 ໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ. ການປະເມີນຜົນທ້າຍໂຄງການ*

- ເພີ່ມໂອກາດໃນການດຳເນີນທຸລະກິດໃຫ້ແກ່ພາກສ່ວນເອກະຊົນທີ່ມີຄວາມສົນໃຈເຂົ້າຮ່ວມເປັນຄູ່ຮ່ວມງານຂອງໂຄງການໃນແຕ່ເບື້ອງຕົ້ນ.

- ຫຼຸດຜ່ອນຂະບວນການຄັດເລືອກລົງ (ແຕ່ບໍ່ໄດ້ລົບລ້າງ) ໃຫ້ໂອກາດແກ່ຜູ້ປະກອບການທີ່ "ຄົນທ້ອງຖິ່ນນິຍົມຊົມຊອບ" ອາດບໍ່ຈຳເປັນຕ້ອງແມ່ນພາກເອກະຊົນທີເໝາະສົມທີ່ສຸດໃນການເຂົ້າມາເປັນຄູ່ຮ່ວມງານ.

- ຮູບແບບຂອງ EMRIP ສະແດງໃຫ້ເຫັນວ່າຂະບວນການຄັດເລືອກຄູ່ຮ່ວມງານພາກເອກະຊົນທີ່ເຄັ່ງຄັດສາມາດເພີ່ມໂອກາດຜົນສຳເລັດໃນໄລຍະເລີ່ມຕົ້ນ ສະນັ້ນຈຶ່ງເຮັດໃຫ້ມີການຮັບຮອງ ແລະ ມີການໝູນໃຊ້ຢ່າງກວ້າງຂວາງ. ໃນເບື້ອງຕົ້ນມີໂຮງສີເຂົ້າພຽງແຕ່ 6 ແຫ່ງໃນແຂວງຄຳມ່ວນທີ່ໄດ້ສະໜັບສະໜູນໂດຍໂຄງການປັບປຸງຄຸນນະພາບເຂົ້າເປັນສິນຄ້າ ໃນ ສປປ ລາວ ແຕ່ປະຈຸບັນຢູ່ໃນແຂວງມີໂຮງສີເຂົ້າຫຼາຍກວ່າ 40 ແຫ່ງທີ່ໄດ້ນຳໃຊ້ຮູບແບບພື້ນຖານຂອງ EMRIP.

ເຖິງແນວໃດກໍ່ຕາມ ໃນສະຖານະການອື່ນໆມັນອາດຈະບໍ່ເໝາະສົມທີ່ຕ້ອງມີການໂຄສະນາໃຫ້ໂອກາດແກ່ຜູ້ປະກອບການພຽງແຕ່ຜູ້ດຽວເຂົ້າຮ່ວມເປັນຄູ່ຮ່ວມງານ. ຕົວຢ່າງການປູກໝາກແໜ່ງກໍລະນີຂອງ (ສສຄກປ) ທີ່ພັນລະນາໃນນີ້ໄດ້ເນັ້ນໃສ່ຄວາມຮູ້ສະເພາະດ້ານ ແລະ ເຊື່ອມໂຍງກັບຕະຫຼາດທີ່ມີຢູ່ ແຕ່ເຫັນວ່າມີເງື່ອນໄຂສຳລັບການຄັດເລືອກຄູ່ຮ່ວມງານພາກເອກະຊົນດ້ວຍວິທີການທີ່ເປີດກວ້າງ.

**ໃຫ້ພາກເອກະຊົນມີສ່ວນຮ່ວມແຕ່ຫົວທີ –** ການຮ່ວມມືຢ່າງໃກ້ສິດ ແລະ ລະອຽດກັບຄູ່ຮ່ວມມືພາກເອກະຊົນທີ່ມີທ່າແຮງ ໃນການອອກແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນນັ້ນແມ່ນສິ່ງສຳຄັນເພື່ອຮັບປະກັນໃຫ້ການອອກແບບດັ່ງກ່າວໄດ້ສະທ້ອນເຖິງຄວາມເປັນຈິງ ແລະ ຄວາມກັງວົນຂອງພາກເອກະຊົນຢ່າງແທ້ຈິງ. ໃນກໍລະນີຂອງໂຄງການ EMRIP ທີ່ມີຜົນສຳເລັດໂດຍຜ່ານການສ້າງໂຄງການທີ່ໃຊ້ເວລາເປັນປີໆ ໂດຍອົງການ SNV ກ່ອນການເຮັດວຽກຮ່ວມກັບໂຮງສີໃນແຂວງຄຳມ່ວນ. ໃນກໍລະນີຂອງໝາກແໜ່ງຢູ່ເມືອງປາກຊ່ອງນີ້ໄດ້ມີການພັດທະນາບົດບັນທຶກຄວາມເຂົ້າໃຈ ແລະ ເຮັດການສຶກສາຄວາມເປັນໄປໄດ້ຮ່ວມກັນລະຫວ່າງໂຄງການ ແລະ ວິສາຫະກິດ ສະປາຍສ໌ (ມີການຍືນຍົງ). ກໍລະນີໂຮງງານຜະລິດຫົວອາຫານສັດຂອງຣົງກາລີນີ້ເຫັນວ່າພາກເອກະຊົນໄດ້ເຂົ້າຮ່ວມພຽງແຕ່ເບົາບາງ ແລະ ເຮັດໃຫ້ມີຄວາມລ້າຊ້າໃນຂະບວນການຜະລິດ.

**ສະໜັບສະໜູນເຄື່ອງມືຕ່າງໆ –** ມີຄວາມຫຼາກຫຼາຍຂອງເຄື່ອງມືທີ່ພາກລັດນຳໃຊ້ສະໜັບສະໜູນໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ເຄື່ອງມືເຫຼົ່ານີ້ແມ່ນສາມາດຫຼຸດຜ່ອນຄວາມສ່ຽງໃຫ້ແກ່ພາກເອກະຊົນ ຫຼື ເພີ່ມການເຂົ້າເຖິງຕະຫຼາດ ແລະ ສາມາດລວບລວມດັ່ງຕໍ່ໄປນີ້:

- ສັນຍາການຊື້-ຂາຍເຂົ້າທີ່ມີການຄໍ້າປະກັນດ້ານຕະຫຼາດ – ບໍລິມາດ ແລະ ລາຄາ
- ທຶນຊ່ວຍເຫຼືອລ້າສຳລັບອຸປະກອນ
- ສະໜອງທຶນຊ່ວຍເຫຼືອລ້າສຳລັບອຸປະກອນແບບສັນຍາການຊື້-ເຊົ່າ
- ສິນເຊື່ອສຳປະທານ
- ການຊ່ວຍເຫຼືອດ້ານວິຊາການ
- ການຊ່ວຍເຫຼືອໃນການສ້າງຕັ້ງ ແລະ ການບໍລິຫານກຸ່ມຊາວກະສິກອນ
- ການສະໜັບສະໜູນດ້ານການສົ່ງເສີມກະສິກຳ
- ສະໜັບສະໜູນດ້ານນະໂຍບາຍໃນການຫຼຸດຄ່າໃຊ້ຈ່າຍບໍລິຫານ ແລະ ເພີ່ມການເຂົ້າເຖິງຕະຫຼາດ
- ບໍ່ມີການເສຍພາສີການນຳເຂົ້າ ແລະ ການເສຍພາສີອື່ນໆທີ່ຢູ່ໃນກົດໝາຍການລົງທຶນ

- ການສຳປະທານທີ່ດິນ
- ສຳປະທານການນຳໃຊ້ສະຖານທີ່ຂອງລັດ (ເຊັ່ນ: ສະຖານີເພາະພັນປາ).

ການສະໜັບສະໜູນດ້ານນະໂຍບາຍໃນລະດັບແຂວງມີບົດບາດສຳຄັນໃນການເອື້ອອຳນວຍໃຫ້ແກ່ຄູ່ຮ່ວມງານ. ນະໂຍບາຍຕ່າງໆສາມາດຊ່ວຍຄ້ຳປະກັນການຕະຫຼາດໃຫ້ແກ່ພາກເອກະຊົນ (ຕົວຢ່າງ ກໍລະນີການລ້ຽງໝູໃນແຂວງເຊກອງ) ຫຼື ຫຼຸດຜ່ອນຕົ້ນທຶນການດຳເນີນທຸລະກິດທີ່ຕິດພັນກັບການຄ້າທີ່ຜ່ານການປະຕິຮູບຂະບວນການຜະລິດ (EMRIP). ມີຄວາມຈຳເປັນທີ່ສຸດໃນການກຳນົດວ່າເຄື່ອງມືອັນໃດຄວນຈະນຳໃຊ້ໃນກໍລະນີສະເພາະ, ຈະຕ້ອງມີການພັດທະນາດ້ວຍການໃຫ້ຂໍ້ມູນໂດຍອີງໃສ່ໂອກາດ ແລະ ຂໍ້ຄົງຄ້າງທີ່ພາກເອກະຊົນມີຢູ່.

**ການເຈລະຈາກັບກຸ່ມຜູ້ຜະລິດ** – ມີຫຼາຍກໍລະນີທີ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ/ພະແນກກະສິກຳ ແລະ ປ່າໄມ້ແຂວງມີບົດບາດສຳຄັນ ໃນການເອື້ອອຳນວຍໃຫ້ການຕົກລົງລະຫວ່າງກຸ່ມຜູ້ຜະລິດ ແລະ ພາກເອກະຊົນ. ໃນກໍລະນີຂອງ EMRIP ບົດບາດນີ້ແມ່ນມີຄວາມສຳຄັນໃນການສ້າງສາຍພົວພັນລະຫວ່າງຜູ້ຜະລິດ ແລະ ພາກເອກະຊົນໃຫ້ແໜ້ນແຟ້ນຂຶ້ນ. ໃນກໍລະນີອື່ນເຊັ່ນ: SHDP ບົດບາດນີ້ແມ່ນມີຄວາມສຳຄັນໃນການຮັບປະກັນການແບ່ງປັນຜົນກຳໄລຢ່າງ “ຍຸດຕິທຳ”.

**ການຄວບຄຸມຄວາມສ່ຽງ** – ໃນຂະນະທີ່ມີການແບ່ງປັນຄວາມສ່ຽງເບື້ອງຕົ້ນໃນລະດັບໃດໜຶ່ງ ຫຼື ການລົງທຶນກະຕຸກຊຸກຍູ້ໃນໄລຍະເລີ່ມຕົ້ນຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນມີຄວາມຈຳເປັນ ນີ້ຄວນເປັນພຽງການເອື້ອອຳນວຍໃຫ້ແກ່ແນວຄວາມຄິດ ແລະ ຄວາມສ່ຽງໃນໄລຍະຍາວຊຶ່ງເກີດຂຶ້ນກັບການສົ່ງເສີມຮູບແບບນີ້ຄວນຮັບຜິດຊອບໂດຍພາກສ່ວນເອກະຊົນ.

## 5.2 ສິ່ງທ້າທາຍທີ່ເປັນອັນລວມ

ສິ່ງທ້າທາຍຕ່າງໆທີ່ໄດ້ກຳນົດໃນກໍລະນີສຶກສາແມ່ນຕິດພັນກັບບັນຫາທົ່ວໄປຂອງການດຳເນີນທຸລະກິດ ຫຼາຍກວ່າບັນຫາທີ່ຕິດພັນກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ມັນແມ່ນສາຍພົວພັນແນວໃດກໍ່ຕາມສິ່ງສຳຄັນຄືເຮັດແນວໃດໃຫ້ພາກລັດສາມາດນຳໃຊ້ໃຫ້ເປັນປະໂຫຍດໃນການສະໜັບສະໜູນໃຫ້ແກ່ການຮ່ວມມື.

ການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນຍັງເປັນວິທີການໃໝ່ຂອງການເຮັດວຽກຢູ່ໃນຂະແໜງການກະສິກຳຂອງ ລາວ. ມີການໃຫ້ຄວາມຄິດເຫັນຢ່າງຫຼາກຫຼາຍທີ່ກ່ຽວຂ້ອງກັບວິທີການດັ່ງກ່າວ ຊຶ່ງບາງຄົນໄດ້ໃຫ້ທັດສະນະວ່າວິທີການເຫຼົ່ານີ້ແມ່ນຈະບໍ່ສາມາດຕອບສະໜອງໃຫ້ກັບເປົ້າໝາຍໃນການຫຼຸດຜ່ອນຄວາມທຸກຍາກ. ຢ່າງໃດກໍດີໂດຍທົ່ວໄປແລ້ວໄດ້ມີການສະໜັບສະໜູນຢ່າງກວ້າງຂວາງຈາກຜູ້ທີ່ມີສ່ວນກ່ຽວຂ້ອງລະດັບຊາດໃຫ້ກັບປະເພດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ຈາກຕົວຢ່າງການສຶກສາໄດ້ຮູ້ແຈ້ງວ່າການສະໜັບສະໜູນຂອງລັດຖະບານທ້ອງຖິ່ນທີ່ເຂັ້ມແຂງໃຫ້ກັບວິທີການດັ່ງກ່າວ ແລະ ແຜນການສະເພາະແມ່ນເປັນພື້ນຖານ ຫຼື ເງື່ອນໄຂສຳລັບຜົນສຳເລັດ.

ໄດ້ມີການລາຍງານຢ່າງກວ້າງຂວາງວ່າການລົງທຶນໃນການຍົກລະດັບອຸປະກອນແມ່ນເປັນບັນຫາໃຫ້ແກ່ເງື່ອນໄຂການກູ້ຢືມເງິນໃນການດຳເນີນທຸລະກິດ ຊຶ່ງບໍ່ເໝາະສົມກັບການລົງທຶນດັ່ງກ່າວ. ໄດ້ມີການເຂົ້າເຖິງສິນເຊື່ອເພື່ອການດຳເນີນທຸລະກິດແມ່ນກໍລະນີການລ້ຽງໝູໃນແຂວງເຊກອງ, ການຊຳລະອັດຕາດອກເບ້ຍເງິນກູ້ຖືວ່າເປັນເລື່ອງຮີບດ່ວນທີ່ສຸດ.

## 6. ສະຫຼຸບ

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນເປັນວິທີການແບບໃໝ່ຂອງ ລາວ ໂດຍຜ່ານຂອບດ້ານນະໂຍບາຍທີ່ໄດ້ອອກແບບສະເພາະສຳລັບການຮ່ວມມືດັ່ງກ່າວ ຊຶ່ງປະຈຸບັນກຳລັງຢູ່ໃນການພັດທະນາໂດຍກະຊວງແຜນການ ແລະ ການລົງທຶນ. ຈະພັດທະນາຂອບນະໂຍບາຍດັ່ງກ່າວໃຫ້ເປັນຂອບນະໂຍບາຍພື້ນຖານສຳລັບກະຊວງກະສິກຳ ແລະ ປ່າໄມ້ ເນື່ອງຈາກວ່າມີການກຳນົດການຈັດຕັ້ງປະຕິບັດຮູບແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໄວ້ໃນແຜນແມ່ບົດການພັດທະນາຂະ ແ ໜງການກະສິກຳ. ກະຊວງກະສິກຳ ແລະ ປ່າໄມ້ ແມ່ນໄດ້ເປັນຕົວແທນໃນໂຄງການການພັດທະນາຄູ່ມືເຫຼົ່ານີ້ຢູ່ໃນກະຊວງແຜນການ ແລະ ການ.

ໃນປະຈຸບັນຍັງບໍ່ໄດ້ມີການຮັບຮອງເອົາຄຳນິຍາມ ຫຼື ຄູ່ມືການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ຢູ່ພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆໃນກະຊວງ ກປ ເຫັນວ່າມີຄວາມຈຳເປັນຕ້ອງພັດທະນາຄູ່ມືດັ່ງກ່າວ. ໂດຍຄວາມເປັນຈິງສິ່ງນີ້ແມ່ນມີຄວາມສັບສົນ ຕໍ່ຄຳນິຍາມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ທີ່ໄດ້ນຳໃຊ້ໂດຍສາກົນມີຄວາມແຕກຕ່າງກັນ ໂດຍສະເພາະແມ່ນທາງດ້ານຄຸນລັກສະນະສຳຄັນເຊັ່ນ: ການຈັດສັນຄວາມສ່ຽງ. ຍັງບໍ່ມີຄວາມຈະແຈ້ງເທື່ອວ່າ ກະຊວງກະສິກຳ ແລະ ປ່າໄມ້ ຄວນຈະດຳເນີນການພັດທະນາຄູ່ມືການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນກ່ອນກະຊວງແຜນການ ແລະ ການລົງທຶນ ແຕ່ສິ່ງສຳຄັນທີ່ປະກົດເຫັນແມ່ນທຸກໆຄຳນິຍາມທີ່ໄດ້ພັດທະນາໂດຍກະຊວງກະສິກຳ ແລະ ປ່າໄມ້ ແມ່ນມີຄວາມແຕກຕ່າງຢ່າງຊັດເຈນລະຫວ່າງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະ ສິ່ງຈູງໃຈ 'ປົກກະຕິ' ທີ່ໄດ້ສະໜອງໃຫ້ແກ່ພາກສ່ວນເອກະຊົນໃນການສະໜັບສະໜູນຕໍ່ນັກທຸລະກິດກະສິ ກຳຂອງພວກເຂົາ.

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຄຳສັບທີ່ກວມລວມເຖິງປະເພດຕ່າງໆຂອງຮູບແບບສັນຍາຜູກພັນ. ຄູ່ມືດັ່ງກ່າວໄດ້ຮັບການພັດທະນາສຳລັບແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ ແມ່ນຈະອອກແບບທີ່ເນັ້ນໃສ່ການຮ່ວມມືເພື່ອພັດທະນາຕ່ອງໂສ້ມູນຄ່າກະສິກຳຕາມກໍລະນີສຶກສາຕ່າງໆ.

ມີຈຳນວນນ້ອຍໜຶ່ງຂອງການລິເລີ່ມການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳຂອງ ລາວ, ສ່ວນໃຫຍ່ແມ່ນໂຄງການຊ່ວຍເຫຼືອດ້ານການເງິນທີ່ມີການແບ່ງປັນຈຳນວນຂອງຄຸນລັກສະນະຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ເຊິ່ງໄດ້ພັນລະນາໃນບົດລາຍງານນີ້. ການລິເລີ່ມເຫຼົ່ານີ້ໃຫ້ບົດຮຽນທີ່ເປັນປະໂຫຍດສຳລັບການພັດທະນາການສົ່ງເສີມຊາວກະສິ ກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃຫ້ເປັນປົກກະຕິຫຼາຍຂຶ້ນ, ສິ່ງຈູງໃຈທີ່ສຳຄັນໃຫ້ກັບພາກເອກະຊົນແມ່ນໂຄງການເປັນຜູ້ນຳພາ – ເຊັ່ນ: ສະໜອງສິນຄ້າໃຫ້ແກ່ໂຄງການ ແລະ ຮັບປະກັນການຕະຫຼາດ.

ກໍລະນີສຶກສາຕ່າງໆໄດ້ສະແດງໃຫ້ເຫັນວ່າການຮ່ວມມືກັບພາກເອກະຊົນແມ່ນມີທ່າແຮງໃນການສະໜອງປັດໃຈນຳເຂົ້າກະສິກຳເຊັ່ນ: ແນວພັນ, ຝຸ່ນ, ປຸຍ ແລະ ອື່ນໆ ລວມທັງການບໍລິການສົ່ງເສີມເຕັກນິກວິຊາການ ໃຫ້ແກ່ຜູ້ຜະລິດ ຊຶ່ງໃນໄລຍະຜ່ານມາແມ່ນໄດ້ສະໜອງໂດຍພາກລັດ. ໃນບາງກໍລະນີແມ່ນໄດ້ເພີ່ມສະມັດຕະພາບການຜະລິດໃຫ້ແກ່ຊາວນາຢ່າງຫຼວງຫຼາຍ (EMRIP) ແລະ ໃນກໍລະນີອື່ນໆ ສະແດງໃຫ້ເຫັນວ່າໄດ້ມີການສ້າງຕັ້ງບໍລິສັດທີ່ເປັນພື້ນຖານສຳລັບການແນະນຳເຕັກນິກການປູກພືດຊະນິດໃໝ່ ແລະ ຕ່ອງໂສ້ມູນຄ່າ (ໝາກແໜ່ງ). ກໍລະນີສຶກສາ

ຕ່າງໆໄດ້ຊີ້ໃຫ້ເຫັນວ່າຜົນສຳເລັດແມ່ນມີຄວາມຫ່າງໄກຈາກການຄໍ້າປະກັນ ແຕ່ການປັບປຸງສຳລັບຮູບແບບດັ່ງກ່າວ ໂດຍການໃຫ້ມີສ່ວນຮ່ວມແຕ່ຫົວທີ ແລະ ໃກ້ສິດກັບພາກເອກະຊົນໃນເວລາອອກແບບການຮ່ວມມື.

ມີຫຼາກຫຼາຍເຄື່ອງມືທີ່ພາກລັດນຳໃຊ້ເຂົ້າໃນການສະໜັບສະໜູນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງ ພາກລັດ ແລະ ເອກະຊົນ ແລະ ກໍລະນີສຶກສາໄດ້ສະແດງໃຫ້ເຫັນວ່າມີການໝູນໃຊ້ຈຳນວນເຫຼົ່ານີ້. ໃນຂະນະດຽວ ກັນ ການເຂົ້າເຖິງດ້ານການເງິນໂດຍສະເພາະແມ່ນເງິນລົງທຶນ ຊຶ່ງເປັນຂໍ້ຈຳກັດທີ່ປະເຊີນໜ້າໂດຍພາກເອກະຊົນ ພາຍໃນປະເທດ ອາດມີການສ້າງຊຸດເຄື່ອງມືຕ່າງໆທີ່ບໍ່ກ່ຽວກັບດ້ານການເງິນເພື່ອໃຫ້ພາກລັດນຳໃຊ້ເຂົ້າໃນການ ຈັດຕັ້ງປະຕິບັດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ມັນມີຄວາມຊັດເຈນແລ້ວ ວ່າສິ່ງທີ່ຕ້ອງເຮັດຄືຂະບວນການໆລົງທຶນທີ່ຜ່ານການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນສາມາດອອກແບບ ແລະ ຈັດຕັ້ງປະຕິບັດໄດ້.

# ເອກະສານຊ້ອນທ້າຍ 1: ຄູ່ມືແນະນຳສຳລັບການພັດທະນາການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ

## ກ. ຄຳນິຍາມ

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນການຮ່ວມມືລະຫວ່າງພາກລັດ (ລວມທັງຜູ້ໃຫ້ທຶນ) ແລະ ພາກເອກະຊົນ ຊຶ່ງໄດ້ນຳໃຊ້ຄວາມຊຳນານຂອງແຕ່ລະຝ່າຍ ເພື່ອສາມາດຕອບສະໜອງໃຫ້ໄດ້ດີທີ່ສຸດຕໍ່ຄວາມຕ້ອງການຂອງສາທາລະນະຊົນທີ່ໄດ້ລະບຸໄວ້ຢ່າງຈະແຈ້ງ ໂດຍການຈັດສັນຊັບພະຍາກອນ, ຄວາມສ່ຽງ ແລະ ຜົນຕອບແທນຢ່າງເໝາະສົມ.

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນມີຫຼາກຫຼາຍຮູບແບບຊຶ່ງລວມເຖິງຮູບແບບທີ່ພາກເອກະຊົນມີສ່ວນຮ່ວມດ້ານຄວາມຊຳນານ ແລະ/ຫຼື ທຶນຮອນ. ໃນດ້ານໜຶ່ງ, ແມ່ນຢູ່ໃນຮູບແບບຂອງສັນຍາຈັດຈ້າງພາກເອກະຊົນໂດຍກົງເພື່ອໃຫ້ການບໍລິການສົ່ງເສີມແບບດັ້ງເດີມຂອງພາກລັດ. ໃນອີກດ້ານໜຶ່ງ, ມັນແມ່ນຮູບແບບທີ່ພາກລັດເປັນຜູ້ຄຸ້ມຄອງບໍລິຫານໃນຂອບນະໂຍບາຍທີ່ອະນຸຍາດໃຫ້ພາກເອກະຊົນເປັນຜູ້ສະໜອງທຶນ, ອອກແບບ, ກໍ່ສ້າງ, ດຳເນີນງານ ແລະ ອາດສາມາດເປັນເຈົ້າຂອງຊັບສິນຊົ່ວຄາວ.

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳຂອງລາວໄດ້ອອກແບບເພື່ອເອື້ອອຳນວຍໃຫ້ແກ່ການພັດທະນາຕ່ອງໂສ້ມູນຄ່າ ແລະ ລາຍຮັບຂອງຊາວກະສິກອນໂດຍຜ່ານການຮ່ວມມືສາມຝ່າຍລະຫວ່າງພາກລັດ, ພາກເອກະຊົນ ແລະ ບັນດາຜູ້ຜະລິດ. ການຮ່ວມມືນີ້ແມ່ນການອຳນວຍຄວາມສະດວກໃຫ້ແກ່ພາກເອກະຊົນເພື່ອໃຫ້ສາມາດນຳໃຊ້ວິທີການອັນໃໝ່ເຂົ້າໃນການດຳເນີນງານຂອງຜູ້ຜະລິດ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆໃນຕ່ອງໂສ້ມູນຄ່າ ເພື່ອປັບປຸງການບໍລິການພາຍໃນຕ່ອງໂສ້ ແລະ ເພີ່ມຄຸນນະພາບ ແລະ / ຫຼື ປະລິມານຂອງຜະລິດຕະພັນ.

ໂດຍທົ່ວໄປການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໄດ້ສ້າງຂຶ້ນໂດຍການເຊັນບົດບັນທຶກຄວາມເຂົ້າໃຈທີ່ໄດ້ລະບຸເຖິງການປະກອບສ່ວນຕ່າງໆ, ບັນດາບົດບາດ ແລະ ຄວາມຄາດຫວັງຂອງທຸກພາກສ່ວນ. ພາກສ່ວນເອກະຊົນຄວນຮັບຜິດຊອບຕໍ່ກັບຄວາມສ່ຽງຊຶ່ງອາດຈະເກີດຂຶ້ນຈາກການດຳເນີນງານ ແຕ່ພາກລັດສາມາດນຳໃຊ້ເຄື່ອງມືຕ່າງໆເພື່ອຫຼຸດຜ່ອນບັນດາຄວາມສ່ຽງເຫຼົ່ານີ້. ມັນເປັນສິ່ງທີ່ດີທີ່ພາກລັດເປັນຜູ້ຕິດຕາມກວດກາການຈັດຕັ້ງປະຕິບັດກິດຈະກຳ ແລະ ແນໃສ່ຮັບປະກັນການແບ່ງປັນຜົນປະໂຫຍດທີ່ເທົ່າທຽມກັນຂອງພາກສ່ວນຕ່າງໆທີ່ມີບົດບາດໃນຕ່ອງໂສ້ມູນຄ່າ.

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນສາມາດນຳໃຊ້ເພື່ອສະໜັບສະໜູນການພັດທະນາພາກເອກະຊົນທ້ອງຖິ່ນ ແຕ່ກໍ່ຄວນພິຈາລະນາຕໍ່ການຮ່ວມມືກັບບໍລິສັດທີ່ບໍ່ນອນຢູ່ໃນທ້ອງຖິ່ນ ແລະ ບັນດາບໍລິສັດຕ່າງ ປະເທດເຊັ່ນກັນ. ການຊອກຫາຄູ່ຮ່ວມງານປະເພດໃດແທ້ແມ່ນຂຶ້ນກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

### ຂ. ຫຼັກການຕ່າງໆ

ບັນດາຫຼັກການທີ່ໄດ້ຮ່າງໄວ້ຂ້າງລຸ່ມນີ້ແມ່ນໄດ້ສ້າງຂຶ້ນໂດຍອີງໃສ່ຫຼັກການທີ່ໄດ້ນຳໃຊ້ໃນໂຄງການຮ່ວມມືດ້ານວິຊາການພາຍໃຕ້ການຮ່ວມມືລາວ-ເຢຍລະມັນ (GIZ).

1. **ປະໂຫຍດໃຫ້ແກ່ສາທາລະນະຊົນ**: ຈຸດປະສົງຂອງການຮ່ວມມືຄວນປະກອບສ່ວນໃຫ້ແກ່ສາທາລະນະຊົນ ແລະ ໂດຍສະເພາະແມ່ນລາຍຮັບຂອງຊາວກະສິກອນ ຫຼາຍກວ່າການສ້າງຜົນກຳໄລທາງການຄ້າໃຫ້ແກ່ພາກເອກະຊົນ.

2. **ການເສີມຕື່ມໃຫ້ແກ່ກັນ:** ການປະກອບສ່ວນຂອງພາກລັດ, ເອກະຊົນ ແລະ ຜູ້ຜະລິດຈະຕ້ອງເສີມຕື່ມໃຫ້ແກ່ກັນໃນຮູບແບບທີ່ທຸກພາກສ່ວນບັນລຸຈຸດປະສົງຂອງຕົນດ້ວຍຕົ້ນທຶນທີ່ຕ່ຳກວ່າ, ມີປະສິດທິຜົນຫຼາຍກວ່າ ແລະວ່ອງໄວກວ່າ ນີ້ແມ່ນເນື່ອງມາຈາກການຮ່ວມມືນຳກັນ.

3. **ການເກື້ອກູນ**: ການຮ່ວມມືຄວນແມ່ນພາກລັດໃຫ້ການສະໜັບສະໜູນພາກເອກະຊົນໃຫ້ສາມາດດຳເນີນກິດຈະການຕ່າງໆໄດ້ ຊຶ່ງປົກກະຕິແລ້ວພາກເອກະຊົນບໍ່ສາມາດເຮັດໄດ້ຫາກຂາດການສະໜັບສະໜູນດັ່ງກ່າວ ແລະ ເປັນມາດຕະການສະໜັບສະໜູນທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍ. ສິ່ງນີ້ແມ່ນມີຄວາມສຳຄັນ, ມັນຊີ້ໃຫ້ເຫັນວ່າການຮ່ວມມືລັດ ແລະ ເອກະຊົນຄວນແມ່ນການເອື້ອອຳນວຍໃຫ້ແກ່ພາກເອກະຊົນສາມາດດຳເນີນກິດຈະກຳທີ່ນອກເໜືອຈາກກິດຈະກຳປົກກະຕິຂອງການດຳເນີນທຸລະກິດທົ່ວໄປ. ນີ້ອາດເປັນວິທີການໃໝ່ທີ່ເຮັດວຽກກັບຊາວກະສິກອນ.

4. **ການແບ່ງປັນຜົນປະໂຫຍດ**: ໃນການພັດທະນາຕ່ອງໂສ້ມູນຄ່າ, ການແບ່ງປັນຜົນປະໂຫຍດນີ້ຈະຕ້ອງໄດ້ມີການພິຈາລະນາຢ່າງລະມັດລະວັງ ແລະ ຈະເຮັດແນວໃດເພື່ອໃຫ້ຜົນປະໂຫຍດທີ່ເກີດຂຶ້ນຈາກການປັບປຸງຂະບວນການໃນຕ່ອງໂສ້ໄປເຖິງແຕ່ລະພາກສ່ວນທີ່ກ່ຽວຂ້ອງ. ໂດຍສະເພາະຈະຮັບປະກັນການແບ່ງປັນຜົນປະໂຫຍດໃນການຮ່ວມມືນັ້ນໃຫ້ມີຄວາມເທົ່າທຽມ ແລະ ໂປ່ງໃສລະຫວ່າງບັນດາຜູ້ຜະລິດ ແລະ ພາກເອກະຊົນຄືແນວໃດ?

5. **ການແຂ່ງຂັນຢ່າງຍຸຕິທຳ**: ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະມາດຕະການນຳໃຊ້ໃນການຮ່ວມມືລັດ ແລະ ເອກະຊົນທີ່ອາດເກີດຂຶ້ນນັ້ນຕ້ອງເປີດກວ້າງຕໍ່ສາທາລະນະຊົນ ແລະ ສົ່ງຂ່າວໃຫ້ເຖິງບັນດາບໍລິສັດໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ຂະບວນການຄັດເລືອກຄູ່ຮ່ວມພາກເອກະຊົນຕ້ອງມີຄວາມໂປ່ງໃສ ແລະ ການຕັດສິນໃຈກ່ຽວກັບການຄັດເລືອກກໍ່ຕ້ອງຈະແຈ້ງ.

6. **ການປະກອບສ່ວນຂອງພາກເອກະຊົນ**: ການຮ່ວມມືຮູບແບບນີ້ບໍລິສັດຈະຕ້ອງປະກອບສ່ວນລົງທຶນຢ່າງຫຼວງຫຼາຍດ້ານການເງິນ, ຊັບພະຍາກອນມະນຸດ ແລະ/ຫຼື ດ້ານວັດຖຸ. ຊັບພະຍາກອນທີ່ພາກເອກະຊົນໄດ້ປະກອບໃສ່ໃນການເຮັດວຽກຮ່ວມກັນໃນການພັດທະນາອາດເກີດຂຶ້ນໃນຮູບແບບທີ່ແຕກຕ່າງກັນ. ສຳລັບຄ່າໃຊ້ຈ່າຍທີ່ແມ່ນການລົງທຶນເບື້ອງຕົ້ນບໍ່ສາມາດເອົາມາເປັນສ່ວນໜຶ່ງໃນການປະເມີນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

7. **ການແບ່ງປັນຄວາມຮັບຜິດຊອບດ້ານຄວາມສ່ຽງ**: ຕ້ອງມີການປະເມີນຢ່າງລະມັດລະວັງຕໍ່ກັບຄວາມສ່ຽງທາງການຄ້າທີ່ຕິດພັນກັບການຮ່ວມມື ແລະ ຕ້ອງມີມາດຕະການຕ່າງໆເພື່ອຫຼຸດຜ່ອນຄວາມສ່ຽງລະຫວ່າງຄູ່ຮ່ວມ

ງານດ້ວຍກັນ. ເພື່ອຮັບປະກັນຄວາມຍືນຍົງ ຄວາມສ່ຽງໃນໄລຍະຍາວຄວນແມ່ນພາກເອກະຊົນ ແລະ ຜູ້ຜະລິດຕົ້ນຕໍເປັນຜູ້ຮັບຜິດຊອບ. ສຳລັບໃນໄລຍະສັ້ນນັ້ນ ພາກລັດສາມາດຫຼຸດຜ່ອນຄວາມສ່ຽງຕ່າງໆດ້ວຍການນຳໃຊ້ເຄື່ອງມື ແລະ ວິທີການຕ່າງໆ. ຈາກລະບຽບການທົ່ວໄປບໍ່ຄວນເພີ່ມຄວາມສ່ຽງໃຫ້ແກ່ຜູ້ຜະລິດຕົ້ນຕໍເນື່ອງຈາກຜົນການປະຕິບັດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

## ຄ. ຂະບວນການ ຫຼື ຂັ້ນຕອນ

ແຜນງານຄຸ້ມຄອງທີ່ດິນ ແລະ ການພັດທະນາເສດຖະກິດຊົນນະບົດມີຊັບພະຍາກອນດ້ານການເງິນຈຳກັດທີ່ຈະນຳໃຊ້ສະເພາະເຂົ້າໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ໃນໄລຍະປະຈຸບັນຈຶ່ງສະເໜີໃຫ້ນຳໃຊ້ຊັບພະຍາກອນທີມີຢູ່ເຫຼົ່ານີ້ເຂົ້າໃນການພັດທະນາອອກແບບລະອຽດກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ (ການສຶກສາຄວາມເປັນໄປໄດ້) ເພື່ອຈະສາມາດສະໜັບສະໜູນດ້ານການເງິນໄດ້ຢ່າງເຕັມສ່ວນໃຫ້ແກ່ໂຄງການໃນໄລຍະຕໍ່ໜ້າ. ຈຶ່ງນຳໃຊ້ເວລາທີ່ມີນີ້ເພື່ອສ້າງຄວາມສຳພັນທີ່ໜ້າເຊື່ອຖືກັບພາກສ່ວນເອກະຊົນ ແລະ ກຸ່ມຜູ້ຜະລິດ ໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນມີຄວາມຈຳເປັນ ແລະ ມີຄຸນຄ່າ.

### 1. **ກຳນົດຈຸດປະສົງ**:

ບາດກ້າວທຳອິດໃນຂະບວນການຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນກຳນົດຈຸດປະສົງລວມຂອງກິດຈະກຳທີ່ຈະເຮັດຮ່ວມກັນໃນເຂດເປົ້າໝາຍ ຊຶ່ງອາດມີເຊັ່ນ: ກິດຈະກຳທີ່ກ່ຽວຂ້ອງກັບການເພີ່ມຜົນຜະລິດເຂົ້າເພື່ອເປັນສິນຄ້າ. ການກຳນົດຈຸດປະສົງໃນໄລຍະນີ້ສາມາດກຳນົດເປັນຈຸດປະສົງແບບລວມໆ ແຕ່ຫຼັງຈາກນັ້ນຕ້ອງມີການກຳນົດຈຸດປະສົງສະເພາະ ແລະ ມີຄວາມລະອຽດຂຶ້ນຕື່ມ.

### 2. **ໄລຍະກ່ອນ-ການສຶກສາຄວາມເປັນໄປໄດ້**:

ຈຸດປະສົງໃນໄລຍະນີ້ແມ່ນກຳນົດວິທີການແບບກວ້າງໆຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ທີ່ຈະນຳໃຊ້. ສາມາດພິຈາລະນາວິທີການແບບຕ່າງໆ. ໃນໄລຍະນີ້ການປຶກສາຫາລືກັບພາກເອກະຊົນ ແລະ ກຸ່ມຜູ້ຜະລິດຕ່າງໆແມ່ນມີຄວາມສຳຄັນ ເພື່ອຊອກຮູ້ຄວາມສົນໃຈຂອງເຂົາເຈົ້າໃນການຮ່ວມມື ແລະ ບັນຫາຕ່າງໆທີຄາດວ່າຈະໄດ້ປະເຊີນ. ຄວາມສົນໃຈທີ່ແທ້ຈິງຂອງພາກເອກະຊົນ ແລະ ກຸ່ມຜູ້ຜະລິດໃນການຮ່ວມມືແມ່ນເປັນບູລິມະສິດຕົ້ນຕໍໃຫ້ແກ່ບາດກ້າວທີ່ຈະດຳເນີນຕໍ່ໄປ. ການອຳນວຍຄວາມສະດວກໃຫ້ແກ່ການຢັ້ງຢາມສະຖານທີຕ່າງໆ (ເຊັ່ນ: EMRIP) ໃນຂັ້ນຕອນນີ້ໄດ້ພົບກັບພາກສ່ວນເອກະຊົນ ແລະ ຜູ້ຕາງໜ້າຂອງຊາວກະສິກອນ.

ໃນໄລຍະນີ້ແມ່ນມີຄວາມຈຳເປັນຕ້ອງໄດ້ພັດທະນາຂອບແນວຄວາມຄິດລວມຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ອອກມາເປັນລາຍລັກອັກສອນ. ມັນຄວນລວມທັງແນວຄວາມຄິດເບື້ອງຕົ້ນກ່ຽວກັບເຄື່ອງມືຕ່າງໆທີສາມາດນຳໃຊ້ໂດຍການຮ່ວມມືກັບພາກລັດ. ມີຄວາມຈຳເປັນໃນການພິຈາລະນາແລະວິເຄາະຄວາມສ່ຽງຕ່າງໆທີອາດຈະເກີດຂຶ້ນກັບບັນດາຄູ່ຮ່ວມງານຕ່າງໆ ແລະ ຊອກມາດຕະການເພື່ອຫຼຸດ ຜ່ອນກັບຄວາມສ່ຽງດັ່ງກ່າວ.

ມັນເປັນສິ່ງສຳຄັນທີ່ທຸກໜ່ວຍງານຂອງລັດ ແລະ ເຈົ້າໜ້າທີ່ທ້ອງຖິ່ນອາດຈະໄດ້ມີສ່ວນກ່ຽວຂ້ອງກັບການຮ່ວມມື (ຕົວຢ່າງ: ຮັບປະກັນໃຫ້ມີການນຳໃຊ້ເຄື່ອງມືຕ່າງໆ), ບໍ່ພຽງແຕ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງທີ່ໄດ້ມີສ່ວນຮ່ວມໃນການພັດທະນາໄລຍະກ່ອນ-ການສຶກສາຄວາມເປັນໄປໄດ້ ແລະ ເຂົ້າຮ່ວມໃນການປຶກສາຫາລືກັບພາກສ່ວນເອກະຊົນ.

ຜົນຂອງການສຶກສາໄລຍະກ່ອນການສຶກສາຄວາມເປັນໄປໄດ້ນີ້ແມ່ນເປັນບ່ອນອີງເພື່ອຕັດສິນວ່າຈະສືບຕໍ່ບາດກ້າວຕໍ່ໄປ ຫຼື ບໍ່. ໃນຂະບວນການຕັດສິນນີ້ຄວນລວມມີທຸກພະແນກການໃນຂັ້ນແຂວງທີ່ຈະເປັນຜູ້ທີ່ມີສ່ວນຮ່ວມໃນການຮ່ວມມືດັ່ງກ່າວ ໂດຍສະເພາະແມ່ນການນຳໃຊ້ເຄື່ອງມືຕ່າງໆເຂົ້າໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

**3. ການສຶກສາຄວາມເປັນໄປໄດ້:**

ໂດຍອີງໃສ່ການອະນຸມັດຂອງໄລຍະກ່ອນການສຶກສາຄວາມເປັນໄປໄດ້, ແມ່ນຈະໄດ້ມີການດຳເນີນການສຶກສາຄວາມເປັນໄປໄດ້ຢ່າງລະອຽດ. ການສຶກສາຄວາມເປັນໄປໄດ້ນີ້ແມ່ນຈະກວາມເອົາຂອບເຂດຕ່າງໆດັ່ງລຸ່ມນນີ້:

- ບົດສະເໜີດ້ານວິຊາການທີ່ລະບຸເຖິງຂອບເຂດຂອງການຮ່ວມມື ແລະ ກິດຈະກຳຕ່າງໆທີ່ແຕ່ລະຝ່າຍຈະຕ້ອງເຮັດ.
- ການວິເຄາະຄວາມສ່ຽງຢ່າງລະອຽດ ແລະ ສ້າງມາດຕະການເພື່ອຫຼຸດຜ່ອນຄວາມສ່ຽງຂອງແຕ່ລະພາກສ່ວນ.
- ການວິເຄາະດ້ານເສດຖະກິດ ເພື່ອຢັ້ງຢືນວ່າການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນທີ່ໄດ້ສະເໜີນັ້ນມີຜົນກຳໄລໃຫ້ແກ່ພາກເອກະຊົນ ແຕ່ວ່າຜົນປະໂຫຍດນັ້ນກໍ່ຈະຕົກເປັນຂອງຜູ້ຜະລິດເຊັ່ນກັນ.

ການສຶກສາຄວາມເປັນໄປໄດ້ຄວນດຳເນີນດ້ວຍການປຶກສາຫາລືຢ່າງໃກ້ສິດກັບພາກເອກະຊົນທີ່ມີບົດບາດຕ່າງໆ ແນໃສ່ຮັບປະກັນໃຫ້ການສຶກສາມີຄວາມຖືກຕ້ອງເທົ່າທີ່ຈະເປັນໄປໄດ້ ແລະ ສະທ້ອນເຖິງຄວາມເປັນຈິງໃນການດຳເນີນທຸລະກິດ. ໃນທາງດຽວກັນ ກໍ່ມີຄວາມຈາເປັນໃຫ້ກຸ່ມຜູ້ຜະລິດໄດ້ເຂົ້າຮ່ວມໃນການສຶກສາຄວາມເປັນໄປໄດ້.

ການສຶກສາໃນໄລຍະນີ້ຈະໄດ້ກຳນົດບັນດາເຄື່ອງມື ຫຼື ສິ່ງຈູງໃຈທີ່ພາກລັດຈະນຳໃຊ້ເຂົ້າໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ. ນີ້ອາດມີຄວາມຈຳເປັນໃຫ້ມີການເຈລະຈາກັບໜ່ວຍງານລັດຕ່າງໆໃນການຮັບຮອງເອົາການນຳໃຊ້ບັນດາເຄື່ອງມືເຫຼົ່ານີ້. ປະເພດ ແລະ ຈຸດພິເສດຂອງເຄື່ອມືເຫຼົ່ານີ້ຈະມີຄວາມແຕກຕ່າງກັນໃນແຕ່ລະກໍລະນີ ແຕ່ສາມາດປະກອບມີ:

- ສັນຍາການເກັບຊື້ທີ່ມີລາຄາຕະຫຼາດຄ້ຳປະກັນ – ບໍລິມາດ ແລະ ລາຄາ
- ທຶນຊ່ວຍເຫຼືອລ້າສຳລັບອຸປະກອນ
- ສະໜອງທຶນສຳລັບອຸປະກອນທີ່ອີງໃສ່ສັນຍາເຊົ່າ-ຊື້
- ເຊົ່າ ຫຼື ຄຸ້ມຄອງຊັບສິນ
- ສິນເຊື່ອສຳປະທານ
- ການຊ່ວຍເຫຼືອດ້ານວິຊາການ
- ການຊ່ວຍເຫຼືອໃນການສ້າງຕັ້ງ ແລະ ການບໍລິຫານຄຸ້ມຄອງກຸ່ມ

- ການສະໜັບສະໜູນດ້ານການສົ່ງເສີມກະສິກຳ
- ສະໜັບສະໜູນດ້ານນະໂຍບາຍໃນການຫຼຸດຄ່າໃຊ້ຈ່າຍບໍລິຫານ ແລະ ເພີ່ມການເຂົ້າເຖິງຕະຫຼາດ
- ການນຳເຂົ້າໂດຍບໍ່ເສຍພາສີ ແລະ ການຍົກເວັ້ນພາສີພາຍໃຕ້ກົດໝາຍການລົງທຶນ
- ການສຳປະທານທີ່ດິນ
- ສຳປະທານການນຳໃຊ້ສະຖານທີ່ຂອງລັດ (ເຊັ່ນ: ສະຖານີເພາະພັນປາ).

ການສຶກສາຄວາມເປັນໄປໄດ້ຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຄວນລະບຸເຖິງຄວາມຄາດຫວັງກ່ຽວກັບການປະກອບສ່ວນຂອງພາກເອກະຊົນ. ຊັບພະຍາກອນ ແລະ ການປະກອບສ່ວນດ້ານຕ່າງໆຂອງພາກເອກະຊົນເຂົ້າໃນການຮ່ວມມືອາດມີຫຼາຍຮູບແບບແຕກຕ່າງກັນ ລວມທັງການໃຫ້ບໍລິການດ້ານຄຳປຶກສາ ແລະ ການຝຶກອົບຮົມ, ການຖ່າຍທອດຄວາມຮູ້ ແລະ ເຕັກນິກ, ພື້ນຖານໂຄ່ງລ່າງ ແລະ ການຈັດຊື້ອຸປະກອນຕ່າງໆ.

ໃນລະຫວ່າງການສຶກສາຄວາມເປັນໄປໄດ້ຂອງການຮ່ວມມືຄວນໄດ້ຄຳນຶງ ແລະ ຕັດສິນວ່າຈະສ້າງສິ່ງຈູງໃຈໃຫ້ແກ່ພາກເອກະຊົນແນວໃດ ແລະ ອັນໃດທີ່ກ່ຽວພັນ ຫຼື ບໍ່ກ່ຽວພັນກັບເງື່ອນໄຂການດຳເນີນງານຂອງບໍລິສັດ. ໃນບາງກໍລະນີສິ່ງຈູງໃຈທີ່ໄດ້ສະໜອງໃຫ້ໂດຍພາກລັດອາດຖືກຍົກເລີກ ຫຼື ຫຼຸດຜ່ອນລົງ ຖ້າຫາກພາກເອກະຊົນບໍ່ສາມາດປະຕິບັດໜ້າທີ່ຂອງພວກເຂົາ ຊຶ່ງເປັນສ່ວນໜຶ່ງຂອງຂໍ້ຕົກລົງການຮ່ວມມືນຳກັນ. ເງື່ອນໄຂການຊ່ວຍເຫຼືອຂອງພາກລັດດັ່ງກ່າວນີ້ຈະໄດ້ລວມເຂົ້າໃນຮ່າງສັນຍາສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

ການສຶກສາຄວາມເປັນໄປໄດ້ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຈະຕ້ອງມີການປະເມີນຢ່າງຖືກຕ້ອງ ແລະ ມີຄວາມເປັນຈິງ ແລະ ຄວນກວມເອົາຫຼັກຖານທີ່ສະແດງເຖິງຄວາມສົນໃຈຂອງພາກເອກະຊົນໃນການເຂົ້າຮ່ວມການຮ່ວມມືດັ່ງກ່າວ.

## 4. ການຄັດເລືອກຄູ່ຮ່ວມງານພາກເອກະຊົນ:

ໂດຍປົກກະຕິແລ້ວ ການຄັດເລືອກເອົາຄູ່ຮ່ວມງານພາກເອກະຊົນຢ່າງເປີດກວ້າງ ແລະ ໂປ່ງໃສແມ່ນເປັນການປະຕິບັດທີ່ດີ. ມັນຈະຊ່ວຍຮັບປະກັນໃຫ້ໄດ້ບໍລິສັດເອກະຊົນທີ່ມີຄວາມສົນໃຈຢ່າງແທ້ຈິງເຂົ້າຮ່ວມ ແລະ ເຮັດໃຫ້ເຮົາສາມາດຄັດເລືອກໄດ້ຄູ່ຮ່ວມງານທີ່ດີຈາກບັນດາບໍລິສັດທີ່ສະໝັກເຂົ້າມານີ້. ມັນສຳຄັນຫຼາຍທີ່ຈະໃຊ້ຂະບວນການຄັດເລືອກແບບເປີດກວ້າງເພື່ອເຮັດໃຫ້ມີການແຂ່ງຂັນແບບເປີດກວ້າງ ແລະ ເປັນອິດສະລະ. ຂະບວນການຄັດເລືອກແບບ “ເປີດກວ້າງ” ດັ່ງກ່າວຈະເພີ່ມໂອກາດແກ່ຜົນສຳເລັດ ແລະ ມີຄວາມຄຸ້ມຄ່າຕໍ່ການລົງທຶນສູງ.

ເພື່ອເຮັດໃຫ້ບັນດາບໍລິສັດສາມາດຮັບຮູ້ເຖິງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໄດ້ຫຼາຍເທົ່າທີ່ຈະຫຼາຍນັ້ນແມ່ນຢາກແນະນຳໃຫ້ມີການໂຄສະນາຢ່າງກວ້າງຂວາງກ່ຽວກັບໂອກາດໃນການຮ່ວມມືດັ່ງກ່າວ. ສາລັບບໍລິສັດທີ່ບໍ່ໄດ້ຢູ່ໃກ້ຄຽງບໍລິເວນໂຄງການ ແລະ ບໍລິສັດຕ່າງປະເທດກໍ່ຄວນພິຈາລະນາເປັນບໍລິສັດຄູ່ຮ່ວມງານທີ່ມີທ່າແຮງ.

ສຳລັບບໍລິສັດທີ່ມີຄວາມສົນໃຈກໍ່ຄວນສະໝັກຢ່າງເປັນທາງການເພື່ອເຂົ້າຮ່ວມໂຄງການ ແລະ ມີໃບສະໝັກເປັນບ່ອນອີງ ພ້ອມກັບມີການສຳພາດຄັກແນ່.

ຈະຕ້ອງໄດ້ສ້າງມາດຕະຖານການຄັດເລືອກ ຊຶ່ງມັນຄວນລວມເອົາປັດໃຈຕ່າງໆ ທີ່ເປັນຮູບປະທຳເຊັ່ນ: ທີ່ຕັ້ງຂອງບໍລິສັດ, ຂະໜາດ, ບົດບາດໜ້າທີ່ ແລະ ອື່ນໆ. ພ້ອມນັ້ນຄວນລວມເອົາປັດໃຈທີ່ອາດເປັນຮູບປະທຳໜ້ອຍກວ່າເຊັ່ນ: ວິໄສທັດຂອງຜູ້ນຳພາທຸລະກິດ ແລະ ປະຫວັດການດຳເນີນທຸລະກິດໃນໄລຍະທີ່ຜ່ານມາ ໂດຍສະເພາະແມ່ນບົດຮຽນທີ່ດີໃນການດຳເນີນທຸລະກິດດັ່ງກ່າວ.

ຄວນມີການສ້າງຕັ້ງຄະນະກຳມະການຄັດເລືອກທີ່ປະກອບມີຫຼາຍຂະແໜງການ ເພື່ອເຂົ້າຮ່ວມຕັດສິນຄັ້ງສຸດທ້າຍເລືອກເອົາບໍລິສັດທີ່ຈະເປັນຄູ່ຮ່ວມງານໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ.

## 5. **ຂໍ້ຕົກລົງທີ່ເປັນທາງການ**:

ຂໍ້ຕົກລົງທີ່ເປັນທາງການ ຫຼື ສັນຍາລະຫວ່າງພາກລັດ ແລະ ເອກະຊົນຄວນມີການລົງລາຍເຊັນຮັບຮອງການຮ່ວມມືດັ່ງກ່າວຈາກທັງສອງຝ່າຍ. ເນື້ອໃນຂອງການຮ່ວມມືແມ່ນຂຶ້ນກັບຄຸນລັກສະນະຂອງໂຄງການ ແລະ ສິ່ງຈູງໃຈທີ່ພາກລັດຕອບສະໜອງໃຫ້ແກ່ພາກເອກະຊົນ, ສັນຍາດັ່ງກ່າວຄວນລະບຸຢ່າງລະອຽດກ່ຽວກັບຜົນງານຂອງພາກເອກະຊົນທີ່ຈະຖືກປະເມີນຜົນ ແລະ ສັນຍາກໍ່ຄວນລະບຸທາງເລືອກທີ່ຈະຍຸບເລີກ ຫຼື ຫຼຸດຜ່ອນສິ່ງຈູງໃຈທີ່ພາກລັດໄດ້ສະເໜີໃຫ້ໃນສັນຍາ ຫາກພົບວ່າຜົນການດຳເນີນງານຂອງພາກເອກະຊົນຕໍ່າກວ່າມາດຕະຖານທີ່ກຳນົດໄວ້.

## 6. **ການຕິດຕາມກວດກາ**:

ມີຄວາມຈຳເປັນຕ້ອງໄດ້ມີການຕິດຕາມກວດກາ ເພື່ອປະເມີນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະ ແນໃສ່ຮັບປະກັນໃຫ້ທຸກພາກສ່ວນມີການດຳເນີນງານຂອງພວກເຂົາຕາມທີ່ໄດ້ລະບຸໄວ້ຢູ່ໃນສັນຍາການຮ່ວມມື. ໂດຍສະເພາະວິທີການສຳລັບການຕິດຕາມກວດກາແບບມີສ່ວນຮ່ວມໂດຍການມີສ່ວນຮ່ວມຂອງກຸ່ມຜູ້ຜະລິດ, ບັນດາບໍລິສັດ ແລະ ພາກລັດແມ່ນມີຜົນສຳເລັດ ແລະ ໄດ້ນຳໃຊ້ຢູ່ປະເທດລາວເຊັ່ນ: ໂຄງການ EMRIP.

# ເອກະສານຊ້ອນທ້າຍ 2: ເງື່ອນໄຂທີ່ເປັນບ່ອນອີງ

## ການພັດທະນາຄູ່ມືແນະນຳສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ ຢູ່ ສປປ ລາວ

**ຄວາມເປັນມາ**

ແຜນງານຄຸ້ມຄອງທີ່ດິນ ແລະ ພັດທະນາເສດຖະກິດຊົນນະບົດ (LM-RED) ແມ່ນແນວຄວາມຄິດທີ່ສົ່ງເສີມການພັດທະນາຜະລິດຕະພັນກະສິກຳໃນ 3 ແຂວງເປົ້າໝາຍ (ແຂວງຫຼວງນ້ຳທາ, ໄຊຍະບູລີ, ແລະ ແຂວງອັດຕະປື). ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນຖືວ່າເປັນເຄື່ອງມືທີ່ມີປະສິດທິພາບ ເພື່ອເຮັດໃຫ້ບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂອບຄວາມຄິດດັ່ງກ່າວ ຊຶ່ງພວກເຂົາໃຊ້ປະໂຫຍດຈາກຊັບພະຍາກອນທີ່ມີຈາກການຮ່ວມມືກັບພາກເອກະຊົນ. ອຸປະສັກສຳຄັນໃນການສ້າງຕັ້ງການຮ່ວມມືດັ່ງກ່າວແມ່ນຂາດການອະທິບາຍຢ່າງຄົບຖ້ວນ ຫຼື ຄູ່ມືແນະນຳທີ່ເປັນແນວທາງໃຫ້ແກ່ການອອກແບບການແຊກແຊງເຫຼົ່ານີ້.

**ຈຸດປະສົງຂອງການສຶກສາ**

ເພື່ອພັດທະນາຄູ່ມືແນະນຳທີ່ຄົບຖ້ວນສຳລັບການອອກແບບໃຫ້ແກ່ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ, ການສຶກສາຄວນເນັ້ນໃສ່ຫົວຂໍ້ຕ່າງໆດັ່ງຕໍ່ໄປນີ້:

- ສະໜອງພາບລວມກ່ຽວກັບຂອບນິຕິກຳຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນທີ່ມີໃນຂະແໜງການກະສິກຳ ຢູ່ໃນ ສປປ ລາວ.
- ສະໜອງພາບລວມຂອງການລິເລີ່ມພັດທະນາຂອບນິຕິກຳສຳລັບການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນ ສປປ ລາວ.
- ສັງລວມຕົວຢ່າງທີ່ດີກ່ຽວກັບການຈັດຕັ້ງປະຕິບັດການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ ຢູ່ ສປປ ລາວ.
- ສັງລວມຫຍໍ້ສິ່ງທ້າທາຍທີ່ເປັນອັນລວມໃນການອອກແບບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ.
- ສົມທຽບຮູບແບບຕ່າງໆ/ກໍລະນີຕ່າງໆຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນທີ່ມີໃນຂະແໜງການກະສິກຳ, ແລະ ສົນທະນາບັນດາປັດໃຈຕ່າງໆທີ່ພາໃຫ້ເກີດຜົນສຳເລັດ ຫຼື ຄວາມຫຼົ້ມເຫຼວ.
- ວິເຄາະເຖິງບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ກ່ຽວຂ້ອງຕ່າງໆໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ, ແລະ ຜົນກະທົບຂອງພວກເຂົາຕໍ່ຜົນສຳເລັດຂອງການສົ່ງເສີມເຫຼົ່ານີ້.

ໂດຍອີງໃສ່ຜົນໄດ້ຮັບ, ທີ່ປຶກສາຈະຕ້ອງຮ່າງຄູ່ມືສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ ລວມທັງໃຫ້ຄຳນິຍາມທີ່ຄົບຖ້ວນຂອງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ໃນຂະແໜງການກະສິກຳ.

**ກິດຈະກຳ**

- ກອງປະຊຸມນຳສະເໜີຕໍ່ແຜນງານການຄຸ້ມຄອງທີ່ດິນ ແລະ ການພັດທະນາເສດຖະກິດຊົນນະບົດ (ອົງການ GIZ ແລະ ກົມປູກຝັງ, ກະຊວງ ກປ), ຊຶ່ງເປັນປະທານໂດຍ (ກສກສ) ແລະ ກອງເລຂາໜ່ວຍງານຍ່ອຍດ້ານທຸລະກິດກະສິກຳ (ໂຄງການສົ່ງເສີມກະສິກຳ).
- ວັນນະຄະດີ Literature/ການສຶກສາເທິງໜ້າໂຕະ

- ສົນທະນາກັບບັນດາຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງ ແລະ ຕາງໜ້າພາກລັດຖະບານ
- ກຳລັງດຳເນີນການຢ້ຽມຢາມພາກສະໜາມ / ໄດ້ມີການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ
- ນຳສະເໜີຜົນໄດ້ຮັບ ແລະ ສັງລວມຜົນໄດ້ຮັບໃນກອງປະຊຸມຂອງໜ່ວຍງານຍ່ອຍດ້ານທຸລະກິດກະສິກຳ
- ກອງປະຊຸມນຳສະເໜີຜົນໄດ້ຮັບເບື້ອງຕົ້ນ

## ເອກະສານທີ່ຕ້ອງສົ່ງ

ທີ່ປຶກສາຄວນຈະສົ່ງມອບເອກະສານຕ່າງໆດັ່ງຕໍ່ໄປນີ້ (ເອກະສານທຸກຢ່າງແມ່ນເປັນພາສອັງກິດ):

1. ບົດລາຍງານ (ຫຼາຍສຸດຈຳນວນ 20 ໜ້າ) ກ່ຽວກັບຂໍ້ມູນທີ່ໄດ້ຮັບຈາກການສຶກສາ ຊຶ່ງຄວນປະຕິບັດຕາມຮ່າງລາຍງານຂ້າງລຸ່ມນີ້:
    - I. ສັງລວມຫຍໍ້
    - II. ພາກນຳສະເໜີ
    - III. ຂອບດ້ານນິຕິກຳ
    - IV. ວິເຄາະກົລະນີທີ່ມີແລ້ວໃນເບື້ອງຕົ້ນ
    - V. ສະຫຼຸບ ແລະ ຂໍ້ສະເໜີແນະ
2. ໃຫ້ຮ່າງຄູ່ມືສຳລັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນໃນຂະແໜງການກະສິກຳ ຢູ່ ສປປ ລາວ
3. ນຳສະເໜີຜົນໄດ້ຮັບ ແລະ ສະຫຼູບໃຫ້ກັບໜ່ວຍງານຍ່ອຍດ້ານທຸລະກິດກະສິກຳ (ການຳສະເໜີຫຼາຍສຸດບໍ່ໃຫ້ເກີນ ນາທີ)

## ເອກະສານຊ້ອນທ້າຍທີ 3: ຄໍານິຍາມກ່ຽວກັບການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນການເຮັດວຽກຮ່ວມກັນລະຫວ່າງລັດ ແລະ ເອກະຊົນເພື່ອຈຸດປະສົງໃນການກໍ່ສ້າງພື້ນຖານໂຄງລ່າງ, ສິ່ງເອື້ອອໍານວຍຄວາມສະດວກໃຫ້ແກ່ຊຸມຊົນ ແລະ ການບໍລິການອື່ນທີ່ກ່ຽວຂ້ອງ. ລັກສະນະຂອງການຮ່ວມມືດັ່ງກ່າວແມ່ນຮ່ວມກັນລົງທຶນ, ຮັບຜິດຊອບຄວາມສ່ຽງ, ແລະ ຮັບຜົນຕອບແທນນໍາກັນ. ມີຫຼາຍເຫດຜົນໃນການສ້າງຕັ້ງຮູບແບບການຮ່ວມມືດັ່ງກ່າວແຕ່ໂດຍທົ່ວໄປແມ່ນກ່ຽວຂ້ອງກັບການເງິນ, ອອກແບບ, ກໍ່ສ້າງ, ດໍາເນີນງານ ແລະ ການບູລະນະສ້ອມແປງພື້ນຖານໂຄງລ່າງຂອງລັດ ແລະ ການບໍລິການຕ່າງໆ.

*ແຫຼ່ງຂໍ້ມູນ: ການຮ່ວມມືລັດ ແລະ ເອກະຊົນຂອງຄານາດາ: ຄູ່ມືແນະນໍາສໍາລັບລັດຖະບານທ້ອງຖິ່ນ*

ຍັງບໍ່ມີການກໍານົດຄໍານິຍາມທີ່ຄົບຖ້ວນ-ຊັດເຈນສໍາລັບການຮ່ວມມືຂອງພາກລັດ ແລະ ເອກະຊົນ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຄໍານິຍາມທີ່ກວາມລວມຫຼາກຫຼາຍຂອງກິດຈະກໍາດ້ານເສດຖະກິດ ແລະ ມີວິວັດທະນາການຢ່າງຕໍ່ເນື່ອງ.

*ແຫຼ່ງຂໍ້ມູນ: ຄໍາເຫັນໂດຍເຈົ້າໜ້າທີ Frits Bolkenstein, ຫົວໜ້າກົມການຕະຫຼາດພາຍໃນ*

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນການຮ່ວມມືກັນລະຫວ່າງລັດ ແລະ ເອກະຊົນເພື່ອເປົ້າໝາຍການສົ່ງເສີມຂອງໂຄງການ ຫຼື ການບໍລິການປົກກະຕິທີ່ໄດ້ສະໜອງໂດຍພາກລັດ. ການຮ່ວມມືລັດ ແລະ ເອກະຊົນແມ່ນມີຫຼາກຫຼາຍຮູບແບບທີ່ແຕກຕ່າງກັນ, ແຕ່ໝາກຫົວໃຈຜົນສໍາເລັດຂອງທຸກໆໂຄງການແມ່ນແນວຄິດມູນຄ່າເງິນທີ່ດີກວ່າ ຊຶ່ງອາດຈະບັນລຸຜົນໄດ້ໂດຍຜ່ານຄວາມອາດສາມາດຂອງພາກເອກະຊົນ ແລະ ການຈັດສັນຄວາມສ່ຽງໃຫ້ກັບບຸກຄົນທີຄຸ້ມຄອງໄດ້ດີທີສຸດ.

*ແຫຼ່ງຂໍ້ມູນ: ຂອບນະໂຍບາຍສໍາລັບການຮ່ວມມືລັດ ແລະ ເອກະຊົນ, ກົມສິ່ງແວດລ້ອມ ແລະ ລັດຖະບານທ້ອງຖິ່ນ, ປະເທດໄອແລນ*

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນການຮ່ວມມືກັນລະຫວ່າງລັດ ແລະ ເອກະຊົນເພື່ອເປົ້າໝາຍການສົ່ງເສີມຂອງໂຄງການ ຫຼື ການບໍລິການປົກກະຕິທີ່ໄດ້ສະໜອງໂດຍພາກລັດ. ການຮ່ວມມືລັດ ແລະ ເອກະຊົນຍອມຮັບວ່າທັງສອງຝ່າຍພາກລັດ ແລະ ພາກເອກະຊົນແມ່ນມີຜົນປະໂຫຍດຕ່າງໆທີ່ກ່ຽວພັນກັບຄົນອື່ນໃນການດໍາເນີນງານສະເພາະໃດໜຶ່ງ. ໂດຍການອະນຸຍາດໃຫ້ແຕ່ລະຝ່າຍເຮັດສິ່ງທີ່ດີທີ່ສຸດ, ການບໍລິການຂອງລັດ ແລະ ການໃຫ້ບໍລິການຕໍ່ພື້ນຖານໂຄງລ່າງທີ່ມີປະສິດທິພາບທີ່ສຸດທາງດ້ານເສດຖະກິດ.

*ແຫຼ່ງຂໍ້ມູນ: ກະຊວງການເງິນ, ສາທາລະນະລັດເຊັກ*

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນຄວາມໝາຍທົ່ວໄປສໍາລັບຮູບແບບການຮ່ວມມືລະຫວ່າງພາກເອກະຊົນ ແລະ ອົງກອນຂອງລັດ ຊຶ່ງໂດຍປົກກະຕິແມ່ນມີຈຸດປະສົງໃນການແນະນໍາດ້ານຊັບພະຍາກອນຂອງພາກເອກະຊົນ ແລະ/ຫຼື ຊ່ວຍດ້ານຄວາມຊໍານານ ແລະ ໃຫ້ການສົ່ງເສີມ ແລະ ບໍລິການຊັບສິນຂອງລັດ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແມ່ນຄໍາສັບ

ທີ່ອະທິບາຍເຖິງການເຮັດວຽກຮ່ວມກັນລະຫວ່າງພາກລັດ ແລະ ເອກະຊົນ ເຊິ່ງນັບແຕ່ຮູບແບບການຮ່ວມມືແບບເບົາບາງ, ແບບບໍ່ເປັນທາງການ ແລະ ເປັນຄູ່ຮ່ວມຍຸດທະສາດ ຈົນເຖິງການອອກແບບດ້ານການເງິນ ແລະ ດຳເນີນງານດ້ວຍຮູບແບບສັນຍາເພື່ອໃຫ້ການບໍລິການ ແລະ ຮ່ວມລົງທຶນຢ່າງເປັນທາງການກັບບໍລິສັດ.

*ແຫຼ່ງຂໍ້ມູນ: 4Ps, ໜ່ວຍງານຈັດຊື້-ຈັດຈ້າງລັດຖະບານທ້ອງຖິ່ນຂອງປະເທດອັງກິດ*

ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນນຳເອົາຜົນປະໂຫຍດມາໃຫ້ກັນ ແລະ ກັນ, ການຮ່ວມມືໃນໄລຍະຍາວຂອງອົງກອນພາກລັດ ແລະ ບໍລິສັດເອກະຊົນແມ່ນເພື່ອໃຫ້ມີການບໍລິການສົ່ງເສີມຂອງພາກລັດທີ່ມີຄຸນນະພາບທີ່ສູງຂຶ້ນ. ບົດຮຽນທີ່ດີທີ່ສຸດໃນການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນສາມາດມີທຶນເພີ່ມເຕີມໃຫ້ແກ່ການລົງທຶນຂອງພາກລັດ ແລະ ເຮັດໃຫ້ການຄຸ້ມຄອງການລົງທຶນແບບມີປະສິດທິພາບ. ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນກວາມລວມເອົາຮູບແບບຕ່າງໆຂອງການເຮັດສັນຍາຜູກພັນ, ແລະ ໃນຮູບແບບການເປັນຄູ່ຮ່ວມພັດທະນາລວມທັງການລິເລີ່ມລົງທຶນຂອງພາກເອກະຊົນ; ການແນະນຳຄວາມເປັນເຈົ້າການທຸລະກິດຂອງພາກເອກະຊົນເຂົ້າສູ່ທຸລະກິດທີ່ລັດເປັນເຈົ້າການ; ຂາຍການບໍລິການຂອງພາກລັດອອກສູ່ຕະຫຼາດທີ່ກວ້າງຂວາງ.

*ແຫຼ່ງຂໍ້ມູນ: Balfour Beatty plc*

ຄວາມແຕກຕ່າງທີ່ສຳຄັນລະຫວ່າງການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນ ແລະ ຮູບແບບທາງເລືອກຂອງພາກເອກະຊົນແມ່ນພາກລັດເປັນຜູ້ທີ່ມີບົດບາດສຳຄັນໃນການທີ່ເປັນຜູ້ຈ່າຍຄ່າການບໍລິການຕ່າງໆ. ດັ່ງໃນກໍລະນີພາກເອກະຊົນທີ່ມີຄວາມຊັດເຈນເຊັ່ນ: ການນຳໃຊ້ສະຖານທີ່ຂອງສາທາລະນະ, ລູກຄ້າຂອງຜູ້ດຳເນີນງານພາກເອກະຊົນແມ່ນຜູ້ນຳໃຊ້ເອກະຊົນເອງ, ສຳລັບກໍລະນີການກໍ່ສ້າງພື້ນຖານໂຄງລ່າງໄດ້ຮັບການຍອມຮັບວ່າເປັນການເຮັດໂດຍຜ່ານການຮ່ວມມືຂອງພາກລັດ ແລະ ເອກະຊົນ, ໂດຍປົກກະຕິລັດຖະບານຈ່າຍຄ່າສຳລັບການສະໜອງບໍລິການ ຫຼື ສຳລັບໜ້າທີ່ສະເພາະໃດໜຶ່ງຂອງພວກເຂົາ. ຄວາມແຕກຕ່າງລະຫວ່າງຮູບແບບການຈັດຊື້-ຈັດຈ້າງແບບດັ້ງເດີມຂອງລັດ ແລະ ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນແມ່ນແຫຼ່ງທີ່ມາຂອງທຶນທີ່ເຮັດໃຫ້ໂຄງການມີຜົນສຳເລັດ. ປ່ຽນຈາກການເອື່ອອີງນຳແຕ່ການກູ້ຢືມທຶນຂອງລັດຖະບານ, ການສົ່ງເສີມຊາວກະສິກອນໂດຍການຮ່ວມມືຂອງພາກລັດ ແລະ ເອກະຊົນສ່ວນໃຫຍ່ແມ່ນມີເງິນທຶນໂດຍຜ່ານການອອກພັນທະບັດໂດຍພາກເອກະຊົນ.

*ແຫຼ່ງຂໍ້ມູນ: ການເງິນແຫ່ງລັດໃນ EMU, DG Economic and Financial Affairs*